ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຈົດໝາຍເຫດ

# ທາງລັດຖະການ

ປີທີ : 18 ວັນທີ : 25 ຕຸລາ 2012 ສະບັບ : 5

# ບົດຄວາມເຫັນຂອງທ່ານລັດຖະມົນຕີວ່າການກະຊວງຍຸຕິທຳ ກ່ຽວກັບຄວາມສຳຄັນຂອງຈົດໝາຍເຫດທາງລັດຖະການ

ຮຽນບັນດາທ່ານຜູ້ອ່ານທີ່ເຄົາລົບ ແລະນັບຖື

ຈົດໝາຍເຫດທາງລັດຖະການເປັນເຄື່ອງມືທີ່ສຳຄັນ ໃນການສຶກສາອົບຮົມ ແລະ ປະຕິບັດກົດໝາຍ. ສະນັ້ນ, ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຶ່ງໄດ້ມອບໃຫ້ ກະຊວງຍຸຕິທຳ ເປັນຜູ້ຈັດພິມຈົດໝາຍເຫດທາງລັດຖະການຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເລີ່ມແຕ່ປີ 1993 ເປັນຕົ້ນມາ.

ຈົດໝາຍເຫດທາງລັດຖະການແມ່ນມີຄວາມແຕກຕ່າງກັບ ໜັງສືພິມລາຍວັນ ແລະ ວາລະສາອື່ນໆ ເພາະຈົດໝາຍເຫດດັ່ງກ່າວ ໄດ້ຈັດພິມເນື້ອໃນບັນດານິຕິກຳຕ່າງໆທີ່ຖືກຮັບຮອງ ແລະ ມີຜົນບັງຄັບປະຕິບັດແລ້ວ ເປັນຕົ້ນ ກົດໝາຍ ແລະ ນິຕິກຳຕ່າງໆ ທີ່ມີຄວາມສຳຄັນ ຂອງປະທານສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ລັດຖະມົນຕີວ່າການກະຊວງ ແລະ ຫົວໜ້າອົງການທຽບເທົ່າກະຊວງ ລວມທັງ ສົນທິສັນຍາລະຫວ່າງຊາດ ແລະ ສາກົນ ທີ່ເຫັນວ່າມີຄວາມຈຳເປັນ ເພື່ອເຮັດໃຫ້ ກົດໝາຍ ແລະ ນິຕິກຳຕ່າງໆມີການລວມສູນ, ສະດວກໃນການຄຸ້ມຄອງ, ກວດກາ, ນຳໃຊ້ ແລະ ຄົ້ນຄວ້າ.

ຈົດໝາຍເຫດທາງລັດຖະການເປັນພາຫະນະອັນໜຶ່ງ ໃນການໂຄສະນາສຶກສາອົບຮົມກົດໝາຍ ແລະ ນິຕິກຳຕ່າງໆ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ທຸກຄົນຢູ່ໃນສັງຄົມ ຮັບຮູ້, ເຄົາລົບ, ປະຕິບັດຢ່າງເຂັ້ມງວດ ແລະ ເປັນການຍົກສູງສະຕິເຄົາລົບກົດໝາຍ ຂອງສັງຄົມ ໃຫ້ດີຂຶ້ນເທື່ອລະກ້າວ.

ຈົດໝາຍເຫດທາງລັດຖະການສາມາດນຳໃຊ້ເປັນເອກະສານອ້າງອີງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງ ຫລື ໃນການແກ້ໄຂບັນຫາຕ່າງໆຂອງສັງຄົມ ເນື່ອງຈາກວ່າເນື້ອໃນຂອງຈົດໝາຍເຫດທາງລັດຖະການນີ້ມັນແມ່ນເນື້ອໃນໃຈຄວາມຂອງກົດໝາຍ ແລະ ນິຕິກຳຕ່າງໆທີ່ມີຜົນສັກສິດແລ້ວ.

ຈົດໝາຍເຫດທາງລັດຖະການປີໜຶ່ງພິມສອງສະບັບຄື: ສະບັບປົກກະຕິ ແລະ ສະບັບພິເສດ, ສະບັບປົກກະຕິ ແມ່ນສອງເດືອນພິມເທື່ອໜຶ່ງ, ສ່ວນສະບັບພິເສດ ໂດຍຂຶ້ນກັບຄວາມຈຳເປັນຂອງພາກສ່ວນທີ່ກ່ຽວຂ້ອງ. ການຈັດພິມຈົດໝາຍເຫດທາງລັດຖະການແມ່ນໜ້າທີ່ ແລະ ເປັນລິຂະສິດຂອງ ກະຊວງຍຸຕິທຳ ຊຶ່ງເປົ້າໝາຍແມ່ນເພື່ອແຈກຢາຍລ້າ ແລະ ອີກຈຳນວນໜຶ່ງ ແມ່ນເພື່ອຈຳໜ່າຍ. ຖ້າພາກສ່ວນອື່ນຕ້ອງການຈັດພິມເນື້ອໃນນິຕິກຳລົງໃນຈົດໝາຍເຫດທາງລັດຖະການຕ້ອງໄດ້ຮັບອະນຸຍາດຈາກກະຊວງຍຸຕິທຳ ເສຍກ່ອນ ຈຶ່ງສາມາດຈັດພິມໄດ້.

ຫວັງວ່າຈະໄດ້ຮັບການຮ່ວມມື ແລະ ປະກອບຄວາມເຫັນທີ່ເປັນປະໂຫຍດຈາກທ່ານຜູ້ອ່ານທັງຫຼາຍ.

ນະຄອນຫລວງວຽງຈັນ, ວັນທີ 28 ກຸມພາ 2008
ລັດຖະມົນຕີວ່າການກະຊວງຍຸຕິທຳ

ດຣ. ຈະເລີນ ເຢຍປາວເຮີ

# ສາລະບານ

## I. ມະຕິຕົກລົງ

- ມະຕິຕົກລົງເລກທີ 19/ສພຊ ຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍ ໄຟຟ້າ (ສະບັບປັບປຸງ) .................. 1
- ມະຕິຕົກລົງເລກທີ 22/ສພຊ ຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ປະກັນໄພ (ສະບັບປັບປຸງ) ............... 1

## II. ລັດຖະດຳລັດ

- ລັດຖະດຳລັດ ເລກທີ 056/ປປທ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ໄຟຟ້າ (ສະບັບປັບປຸງ)................................ 2
- ລັດຖະດຳລັດ ເລກທີ 059/ປປທ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ປະກັນໄພ (ສະບັບປັບປຸງ) .......................... 2

## III. ກົດໝາຍ

- ກົດໝາຍ ວ່າດ້ວຍ ໄຟຟ້າ (ສະບັບປັບປຸງ) ........................................................................... 3-20
- ກົດໝາຍ ວ່າດ້ວຍ ປະກັນໄພ (ສະບັບປັບປຸງ) ......................................................................... 21-44

## IV. ດຳລັດ ແລະ ລະບຽບການອື່ນໆ

- ດຳລັດ ວ່າດ້ວຍການຍົກເລີກເງື່ອນໄຂການນຳໃຊ້ວັດຖຸດິບພາຍໃນທີ່ກຳນົດໄວ້ໃນນິຕິກຳທີ່ໄດ້ອອກ ຜ່ານມາ........................................................................................................................ 45
- ດຳລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ ວ່າດ້ວຍ ການໃຫ້ການອະນຸມັດ, ການຢັ້ງຢືນ ແລະ ການຍົກເວັ້ນສະເພາະໂຄງການໄຟຟ້າພະລັງນ້ຳໄຊຍະບູລີ ................................................ 46-47

ມະຕິຕົກລົງ

## ມະຕິຕົກລົງ
## ເລກທີ 19/ສພຊ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງ ຮັບຮອງເອົາ ກົດໝາຍ ວ່າດ້ວຍ ໄຟຟ້າ ສະບັບປັບປຸງ

- ອີງຕາມ ມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດ ຕາ 3 ຂໍ້ 1 ຂອງກົດໝາຍ ວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງ ຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍ ວ່າດ້ວຍ ໄຟຟ້າ ສະບັບປັບປຸງ ໃນວາລະປະຊຸມຕອນບ່າຍຂອງວັນທີ 20 ທັນວາ 2011

### ກອງປະຊຸມໄດ້ຕົກລົງ :

**ມາດຕາ 1.** ຮັບຮອງເອົາກົດໝາຍວ່າດ້ວຍ ໄຟຟ້າ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 20 ທັນວາ 2011
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

## ມະຕິຕົກລົງ
## ເລກທີ 22/ສພຊ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງ ຮັບຮອງເອົາກົດໝາຍ ວ່າດ້ວຍ ການປະກັນໄພ ສະບັບປັບປຸງ

- ອີງຕາມ ມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງ ຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍ ວ່າດ້ວຍ ການປະກັນໄພ ສະບັບປັບປຸງ ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 21 ທັນວາ 2011

### ກອງປະຊຸມໄດ້ຕົກລົງ :

**ມາດຕາ 1.** ຮັບຮອງເອົາກົດໝາຍວ່າດ້ວຍ ການປະກັນໄພ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 21 ທັນວາ 2011
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

## ລັດຖະດຳລັດ

**ລັດຖະດຳລັດ**
**ເລກທີ 056/ປປທ ຂອງ**
**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບການປະກາດໃຊ້**
**ກົດໝາຍ ວ່າດ້ວຍໄຟຟ້າ (ສະບັບປັບປຸງ).**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1 ກ່ຽວກັບການປະກາດໃຊ້ ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງ ຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 19/ສພຊ ລົງວັນທີ 20 ທັນວາ 2011 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ໄຟຟ້າ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງ ຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19/ຄປຈ, ລົງວັນທີ 3 ມັງກອນ 2012.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ອອກລັດຖະດຳລັດ:**

<u>ມາດຕາ1</u>: ປະກາດໃຊ້ກົດໝາຍວ່າດ້ວຍໄຟຟ້າ ສະບັບປັບປຸງ.

<u>ມາດຕາ2:</u> ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 16 ມັງກອນ 2012
**ປະທານປະເທດແຫ່ງ ສປປລາວ**
**ຈູມມາລີ ໄຊຍະສອນ**

**ລັດຖະດຳລັດ**
**ເລກທີ 059/ປປທ ຂອງ**
**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ກ່ຽວກັບການປະກາດໃຊ້**
**ກົດໝາຍ ວ່າດ້ວຍປະກັນໄພ ສະບັບປັບປຸງ.**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1ກ່ຽວກັບການປະກາດໃຊ້ ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 22/ສພຊ, ລົງວັນທີ 21 ທັນວາ 2011 ກ່ຽວກັບການຕົກລົງ ຮັບຮອງເອົາກົດໝາຍວ່າດ້ວຍປະກັນໄພ ສະບັບປັບປຸງ.
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບ ເລກທີ 22/ຄປຈ, ລົງວັນທີ 03 ມັງກອນ 2012.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ອອກລັດຖະດຳລັດ:**

<u>ມາດຕາ1</u>: ປະກາດໃຊ້ກົດໝາຍວ່າດ້ວຍປະກັນໄພ ສະບັບປັບປຸງ.

<u>ມາດຕາ2:</u> ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 16/01/2012
**ປະທານປະເທດແຫ່ງ ສປປລາວ**
**ຈູມມາລີ ໄຊຍະສອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ສະພາແຫ່ງຊາດ ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2011

# ກົດໝາຍ
# ວ່າດ້ວຍ ໄຟຟ້າ
# (ສະບັບປັບປຸງ)

## ໝວດທີ
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍໄຟຟ້າ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການກວດກາວຽກງານໄຟຟ້າ ເພື່ອເຮັດໃຫ້ການຜະລິດ, ການດຳເນີນທຸລະກິດໄຟຟ້າ ມີປະສິດທິຜົນສູງ ແນໃສ່ນຳໃຊ້ທ່າແຮງຂອງຊັບພະຍາກອນທຳມະຊາດ ຢ່າງປະຢັດ ແລະ ຍືນຍົງ, ຊຸກຍູ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ.

**ມາດຕາ 2. ໄຟຟ້າ**

ໄຟຟ້າແມ່ນ ພະລັງງານຊະນິດໜຶ່ງ ຊຶ່ງປະກອບດ້ວຍ ກຳລັງໄຟຟ້າ, ກະແສໄຟຟ້າ, ແຮງດັນໄຟຟ້າ, ຄວາມຖີ່ ທີ່ຜະລິດມາຈາກ ແຫຼ່ງຊັບພະຍາກອນທຳມະຊາດ ເຊັ່ນ ພະລັງງານນ້ຳ, ພະລັງງານລົມ, ພະລັງງານແສງຕາເວັນ, ນ້ຳມັນເຊື້ອໄຟ, ຖ່ານຫີນ, ພະລັງງານຈາກຊີວະມວນ, ແຫຼ່ງໄຟຟ້າຈາກຄວາມຮ້ອນ, ຈາກອາຍແກັດ, ນ້ຳມັນພືດ ລວມທັງພະລັງງານນິວຄະເລຍ ແລະ ອື່ນໆ.

**ມາດຕາ 3 ( ປັບປຸງ ). ການອະທິບາຍຄຳສັບ**

**ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ກິດຈະການໄຟຟ້າ ໝາຍເຖິງ** ການເຄື່ອນໄຫວ ກ່ຽວກັບການສຳຫຼວດເກັບກຳຂໍ້ມູນ, ການວາງແຜນ, ການອອກແບບ, ການກໍ່ສ້າງ ແລະ ຕິດຕັ້ງ, ການຜະລິດ, ການສົ່ງ, ການຈຳໜ່າຍ, ການສົ່ງອອກ-ນຳເຂົ້າ ແລະ ການບໍລິການອື່ນ ກ່ຽວກັບວຽກງານໄຟຟ້າ;
2. **ທຸລະກິດໄຟຟ້າ ໝາຍເຖິງ** ການດຳເນີນກິດຈະການໄຟຟ້າ ເພື່ອຈຸດປະສົງທາງການ ຄ້າ;
3. **ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ໝາຍເຖິງ** ເຂື່ອນ ແລະ ອ່າງເກັບນ້ຳ, ທາງນ້ຳໄຫຼ, ໂຮງຈັກໄຟຟ້າ, ສະຖານີຕັດຕໍ່ໄຟຟ້າ, ສະຖານີໄຟຟ້າ, ສູນຄວບຄຸມໄຟຟ້າ, ສາຍສົ່ງໄຟຟ້າ, ສາຍຈຳໜ່າຍໄຟຟ້າ ແລະ ອຸປະກອນຂອງຜູ້ຊົມໃຊ້ໄຟຟ້າ;
4. **ຜູ້ດຳເນີນທຸລະກິດໄຟຟ້າ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບອະນຸຍາດ ດຳເນີນທຸ

ລະກິດໄຟຟ້າ ຢ່າງຖືກຕ້ອງຕາມກົດໝາຍ;

**5. ບົດບັນທຶກຄວາມເຂົ້າໃຈ ໝາຍເຖິງ** ເອກະສານອະນຸຍາດໃນເບື້ອງຕົ້ນຈາກລັດ ໃຫ້ຜູ້ທີ່ຕ້ອງການລົງທຶນພັດທະນາ ເພື່ອດຳເນີນການສຶກສາຄວາມເປັນໄປໄດ້ ຂອງໂຄງການ ເຊັ່ນ ບົດວິພາກເສດຖະກິດ-ເຕັກນິກ-ການເງິນ ລວມທັງການສຶກສາຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ;

**6. ການໃຫ້ສຳປະທານທຸລະກິດໄຟຟ້າ ໝາຍເຖິງ** ການອະນຸຍາດພື້ນທີ່, ກຳນົດເວລາ ຈາກລັດໃຫ້ຜູ້ລົງທຶນ ເພື່ອດຳເນີນການຜະລິດ ແລະ ການສົ່ງພະລັງງານໄຟຟ້າ ພາຍໃຕ້ເງື່ອນໄຂຂອງສັນຍາ;

**7. ໄຟຟ້າຊົນນະບົດ ໝາຍເຖິງ** ລະບົບໄຟຟ້າທີ່ຕໍ່ຈາກລະບົບໄຟຟ້າລວມ ຫຼື ເປັນລະບົບໄຟຟ້າສະເພາະຕ່າງຫາກຂອງເຂດໃດເຂດໜຶ່ງ ຊຶ່ງຜະລິດໄຟຟ້າດ້ວຍພະລັງນ້ຳຂະໜາດນ້ອຍ, ດ້ວຍເຄື່ອງຈັກທີ່ແລ່ນດ້ວຍນ້ຳມັນ, ດ້ວຍພະລັງແສງຕາເວັນ, ດ້ວຍພະລັງລົມ ຫຼື ພະລັງອື່ນ ເພື່ອຮັບໃຊ້ຊົນນະບົດ;

**8. ຊີວະມວນ ໝາຍເຖິງ** ສິ່ງເສດເຫຼືອ ຈາກພືດ, ຄົນ, ສັດ ແລະ ອື່ນໆ;

**9. ອາຍຊີວະພາບ ໝາຍເຖິງ** ອາຍແກັດ ທີ່ຜະລິດຈາກຊີວະມວນ ເປັນຕົ້ນ ສິ່ງເສດເຫຼືອຈາກໄມ້ ແລະ ອື່ນໆ;

**10. ກຳລັງໄຟຟ້າ ໝາຍເຖິງ** ຜົນຄູນລະຫວ່າງແຮງດັນໄຟຟ້າ ກັບ ກະແສໄຟຟ້າ ຊຶ່ງເຄື່ອນທີ່ຜ່ານວັດຖຸຊັກນຳໄຟຟ້າ;

**11. ກຳລັງຕິດຕັ້ງ ໝາຍເຖິງ** ຄວາມສາມາດຜະລິດໄຟຟ້າ ຂອງໂຮງງານໄຟຟ້າ ຫຼື ເຄື່ອງກຳເນີດໄຟຟ້າ;

**12. ກະແສໄຟຟ້າ ໝາຍເຖິງ** ການເຄື່ອນທີ່ຂອງເອເລັກຕຼົງໄຟຟ້າ ໄປໃນທິດດຽວກັນ ຕາມວັດຖຸຊັກນຳໄຟຟ້າ ລວມທັງ ຄວາມເຂັ້ມຂອງກະແສໄຟຟ້າ;

**13. ແຮງດັນໄຟຟ້າ ໝາຍເຖິງ** ກຳລັງທີ່ກຳເນີດຂຶ້ນເມື່ອມີກະແສໄຟຟ້າໄຫຼຈາກຈຸດໜຶ່ງ ໄປຫາອີກຈຸດໜຶ່ງ ຂອງວັດຖຸຊັກນຳໄຟຟ້າ ຫຼື ຄວາມແຕກຕ່າງ ລະຫວ່າງ ລະດັບແຮງດັນໄຟຟ້າສອງຈຸດ ເມື່ອມີກະແສໄຟຟ້າໄຫຼຜ່ານສອງຈຸດຂອງວັດຖຸຊັກນຳໄຟຟ້າ;

**14. ຄວາມຖີ່ ໝາຍເຖິງ** ຈຳນວນຮອບວຽນທີ່ໝູນຢູ່ພາຍໃນ ໜຶ່ງວິນາທີ;

**15. BOT (Build, Operate and Transfer) ໝາຍເຖິງ** ການກໍ່ສ້າງ, ດຳເນີນງານ ແລະ ມອບໂອນໃຫ້ລັດຖະບານ;

**16. BT (Build and Trans fer) ໝາຍເຖິງ** ການກໍ່ສ້າງ, ມອບໂອນ ໃຫ້ລັດຖະບານ;

**17. BOO (Build, Own and Operate) ໝາຍເຖິງ** ການກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ;

**18. ຄ່າພາກຫຼວງ ໝາຍເຖິງ** ຄ່າຊົມໃຊ້ຊັບພະຍາກອນທຳມະຊາດ ຊຶ່ງຜູ້ທີ່ໄດ້ຮັບສິດ ໃນການນຳໃຊ້ຊັບພະຍາກອນດັ່ງກ່າວ ຈະຕ້ອງຈ່າຍໃຫ້ລັດ ໂດຍການຄິດໄລ່ເປັນອັດຕາສ່ວນຮ້ອຍ ຂອງລາຍຮັບທັງໝົດ ທີ່ໄດ້ຈາກການຂາຍພະລັງງານໄຟຟ້າ

19. COD (Commercial Operation Date) **ໝາຍເຖິງ** ມື້ເລີ່ມຕົ້ນດຳເນີນການຜະລິດທາງການຄ້າ;

**20. ເຫດສຸດວິໄສ ໝາຍເຖິງ** ເຫດການທີ່ເກີດຂຶ້ນ ຊຶ່ງບໍ່ສາມາດຄາດຄະເນ ແລະ ຄວບຄຸມໄດ້ ເຊັ່ນ ນ້ຳຖ້ວມ, ຟ້າຜ່າ, ລົມພະຍຸ, ແຜ່ນດິນໄຫວ ແລະ ອື່ນໆ.

### ມາດຕາ 4. ກຳມະສິດ ກ່ຽວກັບແຫຼ່ງພະລັງງານໄຟຟ້າ

ແຫຼ່ງພະລັງງານໄຟຟ້າໃນຂອບເຂດທົ່ວປະເທດ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ໂດຍ ແມ່ນລັດ ເປັນຜູ້ຄຸ້ມຄອງຢ່າງລວມສູນ ເປັນເອກະພາບ ແລະ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນຳໃຊ້.

### ມາດຕາ 5. ນະໂຍບາຍຂອງລັດ ກ່ຽວກັບໄຟຟ້າ

ລັດ ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ນິຕິບຸກຄົນຕ່າງປະເທດ ລົງທຶນເຂົ້າໃສ່ກິດຈະການໄຟຟ້າ ເຊັ່ນ ການຜະລິດ, ການສົ່ງ, ການຈຳໜ່າຍ, ການບໍລິການໄຟຟ້າເປັນຕົ້ນ ໄຟຟ້ານ້ຳຕົກ ໂດຍຕິດພັນກັບການປົກປັກຮັກສາປ່າປ້ອງກັນແຫຼ່ງນ້ຳ ແລະ ຢູ່ເຂດຫ່າງໄກສອກຫຼີກ ທີ່ມີເງື່ອນໄຂ ດ້ວຍການໃຫ້ນະໂຍບາຍ ເປັນຕົ້ນ ພາສີ, ອາກອນ, ສິດນຳໃຊ້ຊັບພະຍາກອນທຳມະຊາດ ຕາມລະບຽບກົດໝາຍ.

ລັດ ປົກປ້ອງສິດຜົນປະໂຫຍດອັນຊອບທຳໃຫ້ທຸກພາກສ່ວນເສດຖະກິດທີ່ລົງທຶນ ແລະ ປະກອບສ່ວນເຂົ້າໃນການດຳເນີນທຸລະກິດໄຟຟ້າຢ່າງສະເໝີພາບ.

ລັດ ສົ່ງເສີມການພັດທະນາກິດຈະການໄຟຟ້າ ດ້ວຍການນຳໃຊ້ແຫຼ່ງພະລັງງານໄຟຟ້າຢ່າງປະຢັດ, ມີປະສິດທິພາບ, ຍືນຍົງ, ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນທຸລະກິດໄຟຟ້າ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

ລັດ ເສີມຂະຫຍາຍທຸກທ່າແຮງ ເພື່ອຕອບສະໜອງໄຟຟ້າຕາມຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ປະກອບສ່ວນເຂົ້າໃນການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ເປັນສິນຄ້າ ຂາຍອອກຕ່າງປະເທດ.

### ມາດຕາ 6. ຫຼັກການ ກ່ຽວກັບວຽກງານໄຟຟ້າ

**ການດຳເນີນກິດຈະການ ແລະ ທຸລະກິດໄຟຟ້າ ຕ້ອງປະຕິບັດຕາມຫລັກການ ດັ່ງນີ້:**

1. ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ມີປະສິດທິຜົນ, ປະຢັດ ແລະ ຍືນຍົງ;
3. ປົກປັກຮັກສາສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ( ຊຸມຊົນ, ປ່າໄມ້ ແລະ ແຫຼ່ງນ້ຳ );
4. ຮັບປະກັນຄວາມປອດໄພ.

### ມາດຕາ 7. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ນິຕິບຸກຄົນຕ່າງປະເທດ ທີ່ດຳເນີນທຸລະກິດໄຟຟ້າ, ປະກອບກິດຈະການ ຫຼື ຄຸ້ມຄອງບໍລິຫານທີ່ພົວພັນກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ລວມທັງຜູ້ຊົມໃຊ້ໄຟຟ້າ.

ກົດໝາຍສະບັບນີ້ ບໍ່ກວມເອົາພະລັງງານໄຟຟ້າ ຈາກແຫຼ່ງນິວຄະເລຍ.

### ມາດຕາ 8. ການຮ່ວມມືສາກົນ

ລັດ ເປີດກວ້າງການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານໄຟຟ້າ ເປັນຕົ້ນການຜະລິດ, ການສົ່ງ, ການຈຳໜ່າຍ, ການສົ່ງອອກ-ນຳເຂົ້າ, ການສົ່ງຜ່ານ, ການພັດທະນາ ແລະ ການບໍລິການດ້ານທຸລະກິດໄຟຟ້າ.

## ໝວດທີ II
## ກິດຈະການໄຟຟ້າ

### ມາດຕາ 9. ກິດຈະການໄຟຟ້າ

ກິດຈະການໄຟຟ້າ ປະກອບດ້ວຍແຜນການພັດທະນາໄຟຟ້າ, ການວາງແຜນ, ການສຳຫຼວດເກັບກຳຂໍ້ມູນ, ການອອກແບບ, ການກໍ່ສ້າງ ແລະ ຕິດຕັ້ງ, ການຜະລິດ, ການສົ່ງ, ການຈຳໜ່າຍ, ການສົ່ງອອກ-ນຳເຂົ້າ, ການບໍລິການກ່ຽວກັບໄຟຟ້າ.

### ມາດຕາ 10. ແຜນການພັດທະນາໄຟຟ້າ

**ແຜນການພັດທະນາໄຟຟ້າ ຕ້ອງ:**

1. ຮັບປະກັນ ຫຼັກການນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ,ແຫຼ່ງພະລັງງານຢ່າງເໝາະສົມ, ປະຢັດ ແລະ ມີປະສິດທິຜົນສູງ;
2. ກຳນົດເປົ້າໝາຍ, ທິດທາງ, ກົນໄກ ແລະ ວິທີການ ໃນການພັດທະນາພື້ນຖານເສດຖະກິດ-ເຕັກນິກ ໃຫ້ແກ່ໂຄງການໄຟຟ້າ, ຮັບປະກັນການສະໜອງໄຟຟ້າຢ່າງປອດໄພ, ເປັນປົກກະຕິ, ຈຳກັດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນການພັດທະນາທຸລະກິດໄຟຟ້າ;
3. ຮັບປະກັນການຊົມໃຊ້ພາຍໃນ ບົນພື້ນຖານຂອງການເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະ ນະໂຍບາຍ ການພັດທະນາເສດຖະກິດ-ສັງຄົມຂອງຊາດ;
4. ກຳນົດການສົ່ງອອກບົນພື້ນຖານບູລິມະສິດການນຳໃຊ້ພາຍໃນ ແລະ ຄວາມຕ້ອງການໃຊ້ໄຟຟ້າ ຢູ່ບັນດາປະເທດໃກ້ຄຽງ.

ແຜນການພັດທະນາໄຟຟ້າ ປະກອບດ້ວຍແຜນຍຸດທະສາດ, ແຜນໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ.

ກະຊວງ ພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການໃນການປະສານສົມທົບກັບບັນດາອົງການທີ່ກ່ຽວຂ້ອງ ເພື່ອສ້າງແຜນການພັດທະນາໄຟຟ້າ ແລະ ນຳສະເໜີໃຫ້ລັດຖະບານ ພິຈາລະນາຕົກລົງ.

### ມາດຕາ 11. ການວາງແຜນ

ການວາງແຜນ ແມ່ນການຄົ້ນຄວ້າຂັ້ນຕອນ, ບາດກ້າວການພັດທະນາໂຄງການໄຟຟ້າ ກ່ອນທີ່ຈະດຳເນີນການສຳຫຼວດເກັບກຳຂໍ້ມູນ,ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງໂຄງການໄຟຟ້າ.

**ມາດຕາ 12. ການສຳຫຼວດເກັບກຳຂໍ້ມູນ**

ການສຳຫລວດເກັບກຳຂໍ້ມູນ ຂ່າວສານເບື້ອງຕົ້ນ ທາງດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມ, ດ້ານທໍລະນີສາດ, ດ້ານອຸທົກກະສາດ, ດ້ານຜົນກະທົບ ແມ່ນຂະແໜງການພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງທາງດ້ານເຕັກນິກວິຊາການ ໃນການຄິດໄລ່, ການອອກແບບ, ການກໍ່ສ້າງ ແລະ ຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງທາງດ້ານໄຟຟ້າ ແລະ ການດຳເນີນງານ ຂອງໂຄງການ.

**ມາດຕາ 13. ການອອກແບບ**

ການອອກແບບ ປະກອບດ້ວຍການຈັດວາງໂຄງຮ່າງການກໍ່ສ້າງ, ການຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ.

ຂັ້ນຕອນການອອກແບບ ມີການອອກແບບເບື້ອງຕົ້ນ, ອອກແບບລະອຽດ ແລະ ອອກແບບສຸດທ້າຍຂອງໂຄງການຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 14. ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ**

ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຕ້ອງຮັບປະກັນຄວາມປອດໄພ, ຈຳກັດ ແລະ ຫຼຸດຜ່ອນຜົນເສຍຫາຍຕໍ່ທຳມະຊາດ ແລະ ຊັບສິນຂອງປະຊາຊົນ.

ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຕ້ອງດຳເນີນ ຕາມມາດຕະຖານເຕັກນິກໄຟຟ້າຂອງລາວ.

**ມາດຕາ 15. ການຜະລິດໄຟຟ້າ**

ການຜະລິດໄຟຟ້າ ແມ່ນ ຂະບວນການຜະລິດພະລັງງານໄຟຟ້າ ຈາກໜ່ວຍປັ່ນໄຟຟ້າ ດ້ວຍພະລັງງານນ້ຳ, ພະລັງງານລົມ, ພະລັງງານແສງຕາເວັນ, ອາຍຊີວະພາບ ແລະ ພະລັງງານອື່ນ.

ການຜະລິດໄຟຟ້າ ຕ້ອງຮັບປະກັນ ໃຫ້ມີການນຳໃຊ້ ອຸປະກອນທີ່ທັນສະໄໝ, ມີຄຸນນະພາບ ແລະ ໄດ້ມາດຕະຖານສາກົນ, ຈຳກັດ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 16. ການສົ່ງໄຟຟ້າ**

ການສົ່ງໄຟຟ້າ ແມ່ນ ຂະບວນສົ່ງ ຫຼື ລຳລຽງໄຟຟ້າຈາກແຫຼ່ງຜະລິດໄຟຟ້າ ໄປຫາສະຖານີແຈກໄຟຟ້າ, ຫາຕົວເມືອງ, ຫາຜູ້ຊົມໃຊ້ ຫຼື ໄປຕ່າງປະເທດ.

ການສົ່ງໄຟຟ້າຜ່ານ ສປປ ລາວ ແມ່ນ ການສົ່ງໄຟຟ້າ ຈາກປະເທດອື່ນຜ່ານດິນແດນລາວ ໄປຫາປະເທດທີສາມ ຕາມການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ. ການສົ່ງໄຟຟ້າຜ່ານນັ້ນ ຕ້ອງສົ່ງຜ່ານລະບົບສາຍສົ່ງໄຟຟ້າແຫ່ງຊາດລາວ ໂດຍເສຍຄ່າບໍລິການ. ໃນກໍລະນີທີ່ລະບົບສາຍສົ່ງໄຟຟ້າແຫ່ງຊາດລາວ ຫາກບໍ່ສາມາດຕອບສະໜອງໄດ້ ລັດຖະບານ ຈະອະນຸຍາດໃຫ້ຜູ້ສົ່ງຜ່ານ ສ້າງລະບົບສາຍສົ່ງເອົາເອງແຕ່ຕ້ອງຢູ່ໃຕ້ການຄຸ້ມຄອງ ແລະ ກວດກາຂອງກະຊວງ ພະລັງງານ ແລະ ບໍ່ແຮ່ ແລະ ອົງການອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ການສ້າງລະບົບສາຍສົ່ງຜ່ານ ສປປ ລາວ ຕ້ອງຮັບປະກັນການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຄວາມເສັຍຫາຍຂອງປະຊາຊົນ,ຈ່າຍຄ່າທຳນຽມຜ່ານດິນແດນລາວ ແລະ ຄ່າບໍລິການອື່ນ ພ້ອມທັງທົດແທນຄ່າເສັຍຫາຍທັງໝົດທີ່ເກີດຈາກຜົນກະທົບຂອງການກໍ່ສ້າງລະບົບສາຍສົ່ງນັ້ນ ແລະ ອະນຸຍາດໃຫ້ ສປປ ລາວ ນຳໃຊ້ລະບົບສາຍສົ່ງດັ່ງກ່າວ ຕາມຄວາມຕ້ອງການ ແລະ ຮັບປະກັນທາງດ້ານເຕັກນິກ.

**ມາດຕາ 17 ( ປັບປຸງ ). ລະບົບສາຍສົ່ງໄຟຟ້າແຫ່ງຊາດ**

ລະບົບສາຍສົ່ງໄຟຟ້າແຫ່ງຊາດ ແມ່ນ ລະບົບສາຍສົ່ງໄຟຟ້າແຮງສູງ ທີ່ເຊື່ອມຕໍ່ຈາກພາກສ່ວນໜຶ່ງ ກັບພາກສ່ວນອື່ນ ໃນທົ່ວປະເທດ ແລະ ເຊື່ອມຕໍ່ກັບລະບົບສາຍສົ່ງຂອງຕ່າງປະເທດ ເພື່ອຮັບປະກັນການຄຸ້ມຄອງການຜະລິດ, ການສົ່ງ ແລະ ການຈຳໜ່າຍໄຟຟ້າ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລະ ຊັບສິນຂອງປະຊາຊົນ.

ທຸກແຫຼ່ງການຜະລິດໄຟຟ້າ ຕ້ອງສົ່ງໄຟຟ້າເຂົ້າລະບົບສາຍສົ່ງໄຟຟ້າແຫ່ງຊາດ ເວັ້ນເສັຍແຕ່ການຈຳໜ່າຍໄຟຟ້າໃນຂອບເຂດບໍລິເວນທີ່ຕັ້ງຂອງໂຮງງານຜະລິດໄຟຟ້າ, ການຜະລິດໄຟຟ້າຂະໜາດນ້ອຍ ຫຼື ບ່ອນທີ່ບໍ່ທັນມີລະບົບສາຍສົ່ງແຫ່ງຊາດ.

ການລົງທຶນພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ນອກຈາກລະບົບສາຍສົ່ງໄຟຟ້າ

ແຫ່ງຊາດແລ້ວ ຍັງມີລະບົບສາຍສົ່ງໄຟຟ້າອື່ນ ຂອງພາກສ່ວນເສດຖະກິດຕ່າງໆທັງພາຍໃນ ແລະ ຕ່າງປະເທດ.

ໃນກໍລະນີ ທີ່ລະບົບສາຍສົ່ງໄຟຟ້າແຫ່ງຊາດ ຫາກເປັນຂອງພາກສ່ວນເສດຖະກິດອື່ນ ລັດ ມີສິດເຂົ້າຮຸ້ນ ໃນທຸລະກິດດັ່ງກ່າວ ຕາມຄວາມເໝາະສົມ ຫຼື ອາດຊື້ເອົາເປັນກຳມະສິດຂອງລັດ.

**ມາດຕາ 18. ການຈຳໜ່າຍ ແລະ ຫຼັກການການຈຳໜ່າຍໄຟຟ້າ**

ການຈຳໜ່າຍໄຟຟ້າ ແມ່ນການແຈກຈ່າຍໄຟຟ້າຈາກລະບົບຈຳໜ່າຍ ຫຼື ຈາກເຄື່ອງຜະລິດໄຟຟ້າໄປຫາຈຸດຊົມໃຊ້ໄຟຟ້າປະເພດຕ່າງໆ ຊຶ່ງເອີ້ນວ່າຕາຂ່າຍໄຟຟ້າ ໂດຍນຳໃຊ້ລະບົບແຮງດັນກາງແລະແຮງດັນຕໍ່າ.

**ການຈຳໜ່າຍໄຟຟ້າ ຕ້ອງດຳເນີນບົນພື້ນຖານຫຼັກການ ດັ່ງນີ້:**

1. ຈຳໜ່າຍໄຟຟ້າ ຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ;
2. ຈຳໜ່າຍໄຟຟ້າ ຢ່າງກວ້າງຂວາງ, ພຽງພໍ ແລະ ປະຢັດ;
3. ຈຳໜ່າຍໄຟຟ້າຢ່າງປອດໄພ;
4. ຈຳໜ່າຍໄຟຟ້າ ເພື່ອຮັບປະກັນການພັດທະນາເສດຖະກິດ-ສັງຄົມຂອງຊາດ;
5. ຈຳໜ່າຍໄຟຟ້າ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 19. ການສົ່ງອອກ-ນຳເຂົ້າໄຟຟ້າ**

ການສົ່ງໄຟຟ້າ ເພື່ອເປັນສິນຄ້າອອກຕ່າງປະເທດ ຕ້ອງຮັບປະກັນບູລິມະສິດໃນການສະໜອງ ໃຫ້ແກ່ການຊົມໃຊ້ພາຍໃນຢ່າງພຽງພໍ ລວມທັງການຂະຫຍາຍອຸດສາຫະກຳ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ການນຳໄຟຟ້າຈາກຕ່າງປະເທດເຂົ້າມາ ສປປ ລາວ ຈະປະຕິບັດໄດ້ກໍຕໍ່ເມື່ອ ໄດ້ຮັບການເຫັນດີ ຈາກລັດຖະບານ ໂດຍອີງໃສ່ຄວາມຈຳເປັນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 20. ການບໍລິການ**

ການບໍລິການ ດຳເນີນດ້ວຍການຕິດຕັ້ງ, ການບຳລຸງຮັກສາ, ການກວດກາ, ການສ້ອມແປງ, ການໃຫ້ຄຳປຶກສາ ກ່ຽວກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ໃຫ້ຜູ້ຊົມໃຊ້ ແລະ ຜູ້ສະໜອງ.

**ມາດຕາ 21. ການຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນການກໍ່ສ້າງ, ຕິດຕັ້ງ, ຂະຫຍາຍ, ສ້ອມແປງ ແລະ ບຳລຸງຮັກສາອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ຕ້ອງປະຕິບັດຕາມມາດຕະຖານເຕັກນິກ ໄຟຟ້າຂອງລາວຢ່າງເຂັ້ມງວດ.

**ມາດຕາ 22. ການສ້າງ ແລະ ປະຕິບັດມາດຕະຖານເຕັກນິກໄຟຟ້າ**

ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ສ້າງມາດຕະຖານເຕັກນິກໄຟຟ້າ ເພື່ອໃຫ້ເຄື່ອງມື, ອຸປະກອນໄຟຟ້າ, ສາຍສົ່ງໄຟຟ້າ ແລະ ເຄື່ອງຮັບໄຟຟ້າ ໄດ້ມາດຕະຖານ, ຮັບປະກັນຄວາມປອດໄພ, ປະຢັດ ແລະ ເປັນມາດຕະຖານດຽວກັນໃນທົ່ວປະເທດ, ສາມາດກວດກາ ຄຸນນະພາບຂອງເຄື່ອງໃຊ້ ໄຟຟ້າທຸກຊະນິດທີ່ຜະລິດຢູ່ພາຍໃນປະເທດ ແລະ ນຳເຂົ້າຈາກຕ່າງປະເທດ.

ການຕິດຕັ້ງໃໝ່, ຂະຫຍາຍ, ສ້ອມແປງ, ອອກແບບ,ກໍ່ສ້າງ, ດຳເນີນງານ ແລະ ບຳລຸງຮັກສາ ຫຼື ຄຸ້ມຄອງອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ຕ້ອງປະຕິບັດຕາມມາດຕະຖານເຕັກນິກໄຟຟ້າຂອງ ລາວ.

**ມາດຕາ 23. ການດັດແປງ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໄຟຟ້າ**

ໃນກໍລະນີທີ່ພົບເຫັນການຕິດຕັ້ງ, ການຂະຫຍາຍ, ການສ້ອມແປງ, ການອອກແບບ, ການກໍ່ສ້າງ, ບັນດາອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ບໍ່ໄດ້ຄຸນນະພາບ ຂະແໜງການພະລັງງານ ແລະ ບໍ່ແຮ່ ຫຼື ຂະແໜງການທີ່ຖືກມອບໝາຍ ມີສິດອອກຄຳສັ່ງ ໃຫ້ຜູ້ດຳເນີນທຸລະກິດໄຟຟ້າ ດັດແປງ, ສ້ອມແປງຄືນ ຫຼື ປັບປຸງແກ້ໄຂ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານເຕັກນິກໄຟຟ້າຂອງລາວ ຫຼື ສັ່ງໂຈະການນຳໃຊ້ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້ານັ້ນ.

## ໝວດທີ III
## ທຸລະກິດໄຟຟ້າ

**ມາດຕາ 24. ການດຳເນີນທຸລະກິດໄຟຟ້າ**

ບັນດາກິດຈະການໄຟຟ້າທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ສາມາດດຳເນີນ ເປັນທຸລະກິດໄຟຟ້າໄດ້. ທຸລະກິດໄຟຟ້າແບ່ງອອກເປັນ ສອງປະເພດ ຄື ທຸລະກິດໄຟຟ້າທົ່ວໄປ ແລະ ທຸລະກິດ ໄຟຟ້າທີ່ຂໍສຳປະທານ.

ທຸລະກິດໄຟຟ້າທົ່ວໄປ ມີການວາງແຜນ, ການສຳຫຼວດເກັບກຳຂໍ້ມູນ, ການອອກແບບ, ການກໍ່ສ້າງ, ການຕິດຕັ້ງ, ການຈຳໜ່າຍ ແລະການບໍລິການທົ່ວໄປ.

ທຸລະກິດໄຟຟ້າທີ່ຂໍສຳປະທານ ມີ ການຜະລິດ ແລະ ການສົ່ງໄຟຟ້າຂອງພາກລັດ ແລະ ເອກະຊົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດໄຟຟ້າທົ່ວໄປ ຕ້ອງຂໍອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການເຫັນດີຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດໄຟຟ້າທີ່ຂໍສຳປະທານ ຕ້ອງຂໍອະນຸຍາດຈາກຂະແໜງການແຜນການ ແລະ ແໜງການພະລັງງານ ແລະ ບໍ່ແຮ່ ແລະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 25. ການແຕ່ງຕັ້ງຫົວໜ້າວິສະວະກອນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດໄຟຟ້າ ຕ້ອງແຕ່ງຕັ້ງຫົວໜ້າວິສະວະກອນຂອງຕົນ ເພື່ອຮັບຜິດຊອບດ້ານເຕັກນິກໃນການອອກແບບ, ການກໍ່ສ້າງ,ການຕິດຕັ້ງ ແລະ ການດຳເນີນງານ ກ່ຽວກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ແລະ ແຈ້ງການແຕ່ງຕັ້ງດັ່ງກ່າວ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່.

ຂະແໜງການພະລັງງານ ແລະ ບໍ່ແຮ່ ເປັນຜູ້ກຳນົດເງື່ອນໄຂ ແລະ ມາດຕະຖານຂອງຫົວໜ້າ ວິສະວະກອນໃນແຕ່ລະດ້ານ.

**ມາດຕາ 26 ( ປັບປຸງ ). ການລົງທຶນໃສ່ທຸລະກິດໄຟຟ້າ**

**ການລົງທຶນໃສ່ທຸລະກິດໄຟຟ້າ ສາມາດດຳເນີນ ຕາມຮູບແບບ ດັ່ງນີ້:**

1. ການກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (BOT);
2. ການກໍ່ສ້າງ ແລະ ມອບໂອນ (BT);
3. ການກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (BOO);
4. ລັດ ເປັນຜູ້ດຳເນີນການພຽງຜູ້ດຽວ ໂດຍໃຫ້ບໍລິສັດໄຟຟ້າ ຂອງລັດເປັນຕົວແທນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການລົງທຶນເຂົ້າໃສ່ທຸລະກິດໄຟຟ້າ ຕ້ອງໄດ້ຈົດທະບຽນ ເປັນນິຕິບຸກຄົນ ຢູ່ ສປປ ລາວ ຕາມລະບຽບການ.

**ມາດຕາ 27. ເງື່ອນໄຂການຂໍອະນຸຍາດສ້າງຕັ້ງວິສາຫະກິດໄຟຟ້າ**

**ເງື່ອນໄຂການຂໍອະນຸຍາດສ້າງຕັ້ງວິສາຫະກິດໄຟຟ້າ ມີ ດັ່ງນີ້:**

1. ມີປະສົບການໃນການດຳເນີນທຸລະກິດ;
2. ມີຖານະທາງດ້ານການເງິນທີ່ໝັ້ນຄົງ;
3. ມີນັກວິຊາການເຕັກນິກດ້ານໄຟຟ້າ ແລະ ດ້ານອື່ນຢ່າງພຽງພໍ;
4. ບໍ່ຖືກສານຕັດສິນເປັນຜູ້ກະທຳຜິດ ໂດຍເຈດຕະນາ ໂດຍສະເພາະ ການກະທຳຜິດຕໍ່ເສດຖະກິດ.

**ມາດຕາ 28. ການດັດແກ້ໃບອະນຸຍາດດຳເນີນທຸລະກິດໄຟຟ້າ**

ຜູ້ດຳເນີນທຸລະກິດໄຟຟ້າ ທີ່ມີຈຸດປະສົງດັດແກ້ໃບອະນຸຍາດດຳເນີນທຸລະກິດຂອງຕົນ ຕ້ອງຍື່ນຄຳຮ້ອງ ພ້ອມດ້ວຍເຫດຜົນຂອງການຂໍດັດແກ້ນັ້ນ ຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາ.

**ມາກຕາ 29 ( ປັບປຸງ ). ຂັ້ນຕອນການຂໍສຳປະທານ**

**ການຂໍສຳປະທານທຸລະກິດໄຟຟ້າ ປະກອບດ້ວຍ ຂັ້ນຕອນ ດັ່ງນີ້:**

1. ການເຊັນບົດບັນທຶກຄວາມເຂົ້າໃຈ (MOU);
2. ການເຊັນສັນຍາພັດທະນາໂຄງການ (PDA);
3. ການເຊັນສັນຍາສຳປະທານໂຄງການ (CA) ແລະ ສັນຍາຕ່າງໆ.

ສ່ວນຂັ້ນຕອນລະອຽດ, ເນື້ອໃນຂອງ ແຕ່ລະໜ້າວຽກ ແລະ ການຂໍອະນຸມັດ ແມ່ນໃຫ້ປະຕິບັດຕາມລະບຽບການສະເພາະ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່.

ສຳລັບບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາພັດທະນາໂຄງການອາດຈະຕໍ່ອາຍຸໄດ້ ຕາມການຕົກລົງຂອງ ລັດຖະບານ. ການຂໍຕໍ່ອາຍຸບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາພັດທະນາໂຄງການຕ້ອງສະເໜີຂໍຕໍ່ກ່ອນ

ໜຶ່ງເດືອນ ກ່ອນທີ່ອາຍຸຂອງບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາພັດທະນາໂຄງການຈະສິ້ນສຸດລົງ.

ການຕໍ່ອາຍຸສັນຍາບົດບັນທຶກຄວາມເຂົ້າໃຈ ຈະປະຕິບັດໄດ້ກໍຕໍ່ເມື່ອຜູ້ພັດທະນາໂຄງການ ຫາກໄດ້ສະແດງໃຫ້ລັດຖະບານເຫັນວ່າຕົນໄດ້ຕັ້ງໃຈປະຕິບັດພັນທະຢ່າງຄົບຖ້ວນ ແລະ ມີຄວາມຄືບໜ້າ ໃນວຽກງານເປັນຮູບປະທຳ, ແຕ່ໃນກໍລະນີໃດກໍຕາມ ບົດບັນທຶກຄວາມເຂົ້າໃຈຈະບໍ່ສາມາດໄດ້ຮັບການຕໍ່ອາຍຸເກີນເກົ້າ ເດືອນ.

ສຳລັບ ການອະນຸຍາດຕໍ່ອາຍຸສັນຍາພັດທະນາໂຄງການ ສາມາດກະທຳໄດ້ກໍຕໍ່ ເມື່ອຜູ້ພັດທະນາໂຄງການມີຜົນສຳເລັດ ຫຼື ມີຄວາມຄືບໜ້າຕົວຈິງໃນວຽກງານຕາມທີ່ໄດ້ກຳນົດໄວ້ໃນສັນຍາພັດທະນາໂຄງການ ຊຶ່ງການຕໍ່ອາຍຸແຕ່ລະຄັ້ງ ບໍ່ໃຫ້ເກີນຫົກເດືອນ. ສຳລັບ ໂຄງການໄຟຟ້າເພື່ອສົ່ງອອກການຕໍ່ອາຍຸບໍ່ ໃຫ້ເກີນສາມຄັ້ງ. ສຳລັບ ໂຄງການໄຟຟ້າເພື່ອຮັບໃຊ້ພາຍໃນການຕໍ່ອາຍຸ ບໍ່ໃຫ້ເກີນ ສອງຄັ້ງ.

ໃນກໍລະນີ ຜູ້ພັດທະນາໂຄງການ ບໍ່ສາມາດປະຕິບັດຕາມເງື່ອນໄຂ, ໄລຍະເວລາ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາພັດທະນາໂຄງການລັດຖະບານ ຖືວ່າ ບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາພັດທະນາໂຄງການນັ້ນ ໄດ້ສິ້ນສຸດລົງ ໂດຍລັດຖະບານຈະບໍ່ທົດແທນຄ່າໃຊ້ຈ່າຍແຕ່ຢ່າງໃດ.

ບັນດາກິດຈະກຳຫຼັກ ເຊັ່ນ ການສ້າງເຂື່ອນ, ໂຮງໄຟຟ້າ ຫຼື ອຸບມຸງອ່ວຍນ້ຳ ລວມທັງການຕັດໄມ້ອອກຈາກອ່າງເກັບນ້ຳ ຂອງໂຄງການພັດທະນາໄຟຟ້າ ສາມາດດຳເນີນໄດ້ ກໍຕໍ່ເມື່ອສັນຍາສຳປະທານມີຜົນສັກສິດແລ້ວ.

**ມາດຕາ 30. ບົດວິພາກເສດຖະກິດ-ເຕັກນິກ-ການເງິນ**

**ບົດວິພາກເສດຖະກິດ-ເຕັກນິກ-ການເງິນ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:**

**1. ຄວາມອາດສາມາດເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ-ການເງິນ;**

2. ພະລັງງານໄຟຟ້າສູງສຸດທີ່ຈະຜະລິດໄດ້;

3. ການຄາດຄະເນມູນຄ່າ ຂອງໂຄງການ;

4. ການຄາດຄະເນອາຍຸການ ແລະ ຄວາມທົນທານຂອງເຂື່ອນ ແລະ ຂອງລະບົບໄຟຟ້າອື່ນໆ;

5. ການຄາດຄະເນລາຄາໄຟຟ້າ ແລະ ຕະຫຼາດ ເພື່ອຈຳໜ່າຍ;

6. ແຜນການ ແລະ ຂັ້ນຕອນການດຳເນີນງານ: ການກໍ່ສ້າງ, ການຕິດຕັ້ງ ແລະ ເວລາເລີ່ມສະໜອງພະລັງງານໄຟຟ້າ.

**ມາດຕາ 31( ປັບປຸງ ). ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ**

**ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ປະກອບດ້ວຍເນື້ອໃນ ຕົ້ນຕໍ ດັ່ງນີ້:**

1. ການປະເມີນຜົນເສຍຫາຍຕໍ່ສິ່ງແວດລ້ອມ ພ້ອມທັງສະເໜີວິທີການ, ມາດຕະການແກ້ໄຂ ຫຼື ຫຼຸດຜ່ອນຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ, ແຫຼ່ງນ້ຳ, ໜ້າດິນ ຫຼື ພື້ນດິນ, ຕໍ່ລະບົບນິເວດວິທະຍາ, ຊີວະນາໆພັນ ແລະ ຖິ່ນທີ່ຢູ່ອາໄສຂອງສັດນ້ຳ ແລະ ສັດປ່າ;

2. ການປະເມີນຜົນເສຍຫາຍ ແລະ ການຍົກຍ້າຍປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການໄຟຟ້າ;

3. ວິທີການຫຼຸດຜ່ອນຜົນກະທົບຂອງບໍລິມາດນ້ຳ ລວມທັງຜົນກະທົບແບບສະສົມ ຢູ່ລຸ່ມອ່າງ ຂອງເຂື່ອນໄຟຟ້າ

4. ຄ່າໃຊ້ຈ່າຍເຂົ້າໃນການປົວແປງທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ ໃຫ້ຄິດໄລ່ເຂົ້າໃນຕົ້ນທຶນຂອງໂຄງການ.

ນອກຈາກຄ່າໃຊ້ຈ່າຍຕາມທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ຜູ້ພັດທະນາໂຄງການ ຍັງຕ້ອງໄດ້ຈ່າຍ ອາກອນສິ່ງແວດລ້ອມຕາມລະບຽບກົດໝາຍ.

**ມາດຕາ 32. ເງື່ອນໄຂຂອງຜູ້ຂໍສຳປະທານ**

**ຜູ້ຂໍສຳປະທານ ທຸລະກິດໄຟຟ້າ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ມີຄວາມສາມາດທາງດ້ານເຕັກນິກ ແລະ ການເງິນຢ່າງໝັ້ນຄົງ;

2. ມີປະຫວັດໃນການດຳເນີນທຸລະກິດດີ ແລະ ໜ້າເຊື່ອຖືໄດ້.

**ມາດຕາ 33( ປັບປຸງ ). ກຳນົດເວລາສຳປະທານ**

ອາຍຸການສຳປະທານ ແມ່ນເລີ່ມຈາກວັນທີ່ສັນຍາສຳປະທານໄດ້ຮັບການລົງນາມ ແລະ ສິ້ນສຸດລົງໃນກຳນົດເວລາບໍ່ໃຫ້ເກີນ ສາມສິບ ປີ ນັບແຕ່ວັນເລີ່ມຕົ້ນດຳເນີນການຜະລິດທາງການຄ້າ (COD) ເປັນຕົ້ນໄປ.

ພາຍຫຼັງກຳນົດເວລາສຳປະທານສິ້ນສຸດລົງ ຜູ້ສຳປະທານ ຕ້ອງໂອນກິດຈະການທັງໝົດ ໃຫ້ແກ່ລັດໃນສະພາບທີ່ສາມາດໃຊ້ງານໄດ້ ຊຶ່ງໄດ້ ຜ່ານການກວດກາ ແລະ ຮັບການຢັ້ງຢືນຈາກວິສະວະກອນເອກະລາດ.

ການໂອນກິດຈະການດັ່ງກ່າວ ຈະບໍ່ໄດ້ຮັບການທົດແທນຄືນແຕ່ຢ່າງໃດ.

**ມາດຕາ 34 ( ປັບປຸງ ). ການອະນຸມັດຂະໜາດໂຄງການໄຟຟ້າ**

**ໂຄງການໄຟຟ້າຢູ່ ສປປ ລາວ ແບ່ງອອກເປັນ ສີ່ ຂະໜາດ ດັ່ງນີ້:**

1. ໂຄງການໄຟຟ້າ ທີ່ມີກຳລັງຕິດຕັ້ງແຕ່ ໜຶ່ງຮ້ອຍ ກິໂລວັດລົງມາ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ ເປັນຜູ້ພິຈາລະນາອະນຸມັດ ຕາມການສະເໜີຂອງຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ ໂດຍໄດ້ຮັບການເຫັນດີທາງດ້ານວິຊາການ ຂອງພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ;

2. ໂຄງການໄຟຟ້າ ທີ່ມີກຳລັງຕິດຕັ້ງສູງກວ່າ ໜຶ່ງຮ້ອຍ ກິໂລວັດ ຫາ ສິບຫ້າ ເມກາວັດ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ພິຈາລະນາອະນຸມັດ ຕາມການສະເໜີຂອງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນ ໂດຍໄດ້ຮັບການເຫັນດີທາງດ້ານວິຊາການ ຂອງກະຊວງ ພະລັງງານ ແລະ ບໍ່ແຮ່;

3. ໂຄງການໄຟຟ້າ ທີ່ມີກຳລັງຕິດຕັ້ງສູງກວ່າ ສິບຫ້າ ເມກາວັດ ຫາ ໜຶ່ງຮ້ອຍ ເມກາວັດ ແມ່ນລັດຖະບານ ເປັນຜູ້ພິຈາລະນາອະນຸມັດ ຕາມການສະເໜີ ຂອງ ກະຊວງ ແຜນການ ແລະ ການລົງທຶນ ໂດຍໄດ້ຮັບການເຫັນດີດ້ານວິຊາການ ຂອງ ກະຊວງ ພະລັງງານ ແລະ ບໍ່ແຮ່;

4. ໂຄງການໄຟຟ້າ ທີ່ມີກຳລັງຕິດຕັ້ງສູງກວ່າ ໜຶ່ງຮ້ອຍ ເມກາວັດ ຂຶ້ນໄປ ຫຼື ມີອ່າງເກັບນ້ຳທີ່ມີເນື້ອທີ່ຫຼາຍກວ່າ ສິບພັນ ເຮັກຕາ ຂຶ້ນໄປ ຫຼື ມີຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດຢ່າງຫຼວງຫຼາຍແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ພິຈາລະນາອະນຸມັດ ຕາມການສະເໜີ ຂອງລັດຖະບານ.

**ມາດຕາ 35. ຄວາມປອດໄພໃນການດຳເນີນງານ ແລະ ການບຳລຸງຮັກສາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດໄຟຟ້າ ຕ້ອງຮັບປະກັນຄວາມປອດ ໄພຂອງການດຳເນີນງານ ແລະ ການບຳລຸງຮັກສາ ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ຂອງວິສະວະກຳກໍ່ສ້າງ ໂຮງງານໄຟຟ້າ ເຊັ່ນ ເຂື່ອນ, ອ່າງເກັບນ້ຳ, ອ່າງນ້ຳລົ້ນ, ໂຮງຈັກໄຟຟ້າ, ສາຍສົ່ງໄຟຟ້າ, ສະຖານີໄຟຟ້າ, ສາຍຈຳໜ່າຍໄຟຟ້າ, ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ລວມທັງຜູ້ຊົມໃຊ້ໄຟຟ້າ.

ເພື່ອຮັບປະກັນຄວາມປອດໄພດັ່ງກ່າວ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດ ໄຟຟ້າ ຕ້ອງສ້າງລະບຽບການກ່ຽວກັບຄວາມປອດໄພໃນການດຳເນີນງານ ແລະ ການບຳລຸງຮັກສາ ຢ່າງສອດຄ່ອງກັບມາດຕະຖານເຕັກນິກໄຟຟ້າຂອງລາວ ແລ້ວນຳສະເໜີຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາຮັບຮອງ.

**ມາດຕາ 36. ສິດຂອງຜູ້ສຳປະທານ**

**ຜູ້ສຳປະທານທຸລະກິດໄຟຟ້າ ມີສິດຕົ້ນຕໍ ດັ່ງນີ້:**

1. ເຊົ່າ ຫຼື ສຳປະທານເນື້ອທີ່ດິນ ທີ່ຈຳເປັນໃນການດຳເນີນທຸລະກິດໄຟຟ້າ;

2. ໄດ້ຮັບຜົນປະໂຫຍດຈາກການສຳປະທານ;

3. ໄດ້ຮັບການປົກປ້ອງຕາມກົດໝາຍ;

4. ໄດ້ຮັບການແນະນຳທາງດ້ານວິຊາການ ແລະ ເຕັກໂນໂລຊີກ່ຽວກັບໄຟຟ້າ;

5. ໂອນ ຫຼື ມອບ ທຸລະກິດໄຟຟ້າໃນຂອບເຂດອາຍຸສຳປະທານທີ່ຍັງເຫຼືອໃຫ້ແກ່ຜູ້ອື່ນ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນ ຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍ ສະບັບນີ້.

**ມາດຕາ 37 ( ປັບປຸງ ). ພັນທະຂອງຜູ້ສຳປະທານ**

**ຜູ້ສຳປະທານ ທຸລະກິດໄຟຟ້າ ມີພັນທະ ດັ່ງນີ້:**

1. ປະຕິບັດລະບຽບກົດໝາຍກ່ຽວກັບແຮງງານ ແລະ ກົດໝາຍອື່ນ ຂອງ ສປປ ລາວ ຢ່າງເຂັ້ມງວດ;

2. ດຳເນີນທຸລະກິດໃຫ້ຖືກຕ້ອງຕາມສັນຍາສຳປະທານ, ບົດວິພາກເສດຖະກິດ-ເຕັກນິກ-ການເງິນ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;

3. ວາງເງິນຄ້ຳປະກັນຢູ່ທະນາຄານ ຕາມລະບຽບກົດໝາຍ;

4. ຕ້ອງມີເງິນ ຫຼື ຊັບສິນເທົ່າກັບທຶນຈົດທະບຽນ, ສຳລັບນັກລົງທຶນ

ຕ່າງປະເທດ ຕ້ອງນຳເງິນທຶນຈົດທະບຽນເປັນເງິນຕາຕ່າງປະເທດເຂົ້າມາ ຕາມລະບຽບກົດໝາຍ ຫຼື ຕາມສັນຍາ;

5. ຖືບັນຊີຕາມກົດໝາຍ ວ່າດ້ວຍການບັນຊີ, ເວັ້ນເສຍແຕ່ໂຄງການທີ່ນຳໃຊ້ເງິນກູ້ ຈາກ ຕ່າງປະເທດ ຊຶ່ງຕ້ອງໄດ້ປະຕິບັດ ຕາມລະບົບບັນຊີສາກົນ;

6. ເສຍຄ່າພາກຫຼວງ, ພາສີ, ອາກອນ ແລະ ພັນທະອື່ນ ໃຫ້ຄົບຖ້ວນ ແລະ ທັນເວລາ ຕາມລະບຽບກົດໝາຍ;

7. ໃຊ້ແທນຄ່າເສັຍຫາຍ ໃນກໍລະນີທີ່ໄດ້ກໍ່ຄວາມເສັຍຫາຍຕໍ່ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ, ສິ່ງແວດລ້ອມ ຫຼື ຕໍ່ການຍົກຍ້າຍຈັດສັນປະຊາຊົນ;

8. ຝຶກອົບຮົມ ແລະ ກໍ່ສ້າງດ້ານວິຊາການ ແລະ ຮັບປະກັນດ້ານສະຫວັດດີການຕໍ່ພະນັກງານ, ນັກວິຊາການ ແລະ ຜູ້ອອກແຮງງານ;

9. ບັນທຶກ ແລະ ລາຍງານຜົນຂອງການປະຕິບັດສັນຍາຕ່າງໆ ຂອງໂຄງການສຳປະທານ ຕາມກຳນົດເວລາລວມທັງການໃຊ້ຈ່າຍໃນໂຄງການຕ່າງໆ ຢ່າງລະອຽດ;

10. ບຳລຸງຮັກສາ, ສ້ອມແປງເຄື່ອງຈັກ ແລະ ອຸປະກອນໄຟຟ້າ ໃຫ້ຢູ່ໃນສະພາບທີ່ດີ ຕາມກຳນົດເວລາ ແລະ ຕາມຫຼັກການທາງດ້ານເຕັກນິກ;

11. ຊຳລະໜີ້ສິນຂອງຕົນທັງໝົດ ແລະ ສ້ອມແປງເຄື່ອງຈັກພາຫະນະ, ສິ່ງປະກອບສ້າງ ຂອງໂຄງການໃຫ້ຢູ່ໃນສະພາບທີ່ໃຊ້ງານໄດ້ເສັຍກ່ອນ ຈຶ່ງມອບໂອນທຸລະກິດໄຟຟ້າໃຫ້ລັດ ພ້ອມດ້ວຍບົດວິພາກເສດຖະກິດ-ເຕັກນິກ-ການເງິນ ແລະ ເອກະສານອື່ນ ຂອງໂຄງການ ໂດຍບໍ່ມີການທົດແທນຄືນ ເມື່ອໝົດອາຍຸສຳປະທານ ຫຼື ໃນກໍລະນີທີ່ຜູ້ສຳປະທານຫາກຢຸດເຊົາການດຳເນີນທຸລະກິດໄຟຟ້າ;

12. ມີການປະສານສົມທົບ, ຮ່ວມມື ແລະ ປະກອບສ່ວນ ໃນການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ທີ່ໂຄງການຕັ້ງຢູ່;

13. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 38. ການສິ້ນສຸດການສຳປະທານ**

**ການສຳປະທານ ຈະສິ້ນສຸດລົງໃນກໍລະນີດັ່ງນີ້:**

1. ໝົດກຳນົດເວລາສຳປະທານ;

2. ຢຸດເຊົາການສຳປະທານກ່ອນກຳນົດເວລາ ຕາມການສະເໜີຂອງຜູ້ສຳປະທານ ແລະ ການເຫັນດີຂອງລັດ;

3. ຖືກຖອນສິດສຳປະທານ ຍ້ອນມີການລະເມີດ ລະບຽບກົດໝາຍຢ່າງຮ້າຍແຮງ ຫຼື ບໍ່ ປະຕິບັດພັນທະຕາມສັນຍາ ຫຼື ຕາມລະບຽບກົດໝາຍ;

4. ບໍ່ສາມາດສ້ອມແປງ ຫຼື ຟື້ນຟູກິດຈະການທີ່ໄດ້ຮັບຄວາມເສັຍຫາຍ ຈາກເຫດສຸດວິໄສ;

5. ມີການຍົກເລີກສັນຍາສຳປະທານ.

ກ່ອນສິ້ນສຸດການສຳປະທານ ຕ້ອງມີການປະເມີນຜົນຂອງການປະຕິບັດໂຄງການ.

**ມາດຕາ 39 ( ປັບປຸງ ). ໂຄງການໄຟຟ້າທີ່ບໍ່ຕ້ອງມີສັນຍາສຳປະທານ**

**ໂຄງການໄຟຟ້າທີ່ບໍ່ຕ້ອງມີສັນຍາສຳປະທານ ມີດັ່ງນີ້:**

1. ການກໍ່ສ້າງ ແລະ ການຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ທີ່ລັດ ເປັນຜູ້ດຳເນີນການພຽງຜູ້ດຽວ;

2. ການກໍ່ສ້າງໂຄງການໄຟຟ້ານ້ຳຕົກ ຊຶ່ງມີກຳລັງຕິດຕັ້ງແຕ່ ສິບຫ້າເມກາວັດ ລົງມາ ແລະ ກໍ່ຄວາມເສັຍຫາຍບໍ່ຫຼວງຫຼາຍ ຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ແຕ່ຕ້ອງປະຕິບັດຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້;

3. ການກໍ່ສ້າງ ແລະ ການຕິດຕັ້ງເຄື່ອງຈັກຜະລິດໄຟຟ້າ ດ້ວຍພະລັງງານຄວາມຮ້ອນ ລະບົບຄວາມຮ້ອນແຕ່ ຫ້າຮ້ອຍ ກິໂລວັດ ລົງມາ ແລະ ການກໍ່ສ້າງ ແລະ ຕິດຕັ້ງລະບົບໄຟຟ້າດ້ວຍພະລັງງານທົດແທນ ເຊັ່ນ ຄວາມຮ້ອນໃຕ້ດິນ, ພະລັງງານແສງຕາເວັນ, ລົມ, ອາຍແກັດ, ຊີວະມວນ, ນ້ຳມັນພືດ, ໄຟຟ້ານ້ຳໄຫຼ, ສິ່ງເສດເຫຼືອຈາກໂຮງງານປຸງແຕ່ງໄມ້, ນ້ຳຕານ, ເຈ້ຍ ແລະ ອື່ນໆ ທີ່ກໍ່ຄວາມເສັຍຫາຍບໍ່ຫລວງຫລາຍຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ແຕ່ຕ້ອງປະຕິບັດຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້;

ສຳລັບ ຂັ້ນຕອນການພິຈາລະນາອະນຸມັດ, ການພັດທະນາ, ການຄຸ້ມຄອງ, ເງື່ອນໄຂ ແລະ ພັນທະຕ່າງໆ ກ່ຽວກັບໂຄງການໄຟຟ້າທີ່ບໍ່ຕ້ອງມີສັນຍາສຳປະທານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບ ການລົງທຶນໃນການກໍ່ສ້າງໂຄງການໄຟຟ້ານ້ຳຕົກ ທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງ ມາດຕານີ້ ແມ່ນສະຫງວນໄວ້ໃຫ້ແຕ່ພົນລະເມືອງລາວເທົ່ານັ້ນ.

**ມາດຕາ 40. ການນຳໃຊ້ທີ່ດິນ ສຳລັບໂຄງການໄຟຟ້າ**

**ການນຳໃຊ້ທີ່ດິນ ສຳລັບໂຄງການໄຟຟ້າ ຕ້ອງປະຕິບັດ ດັ່ງນີ້:**

1. ຜູ້ພັດທະນາໂຄງການ ຕ້ອງກຳນົດຢ່າງຈະແຈ້ງ ກ່ຽວກັບຂອບເຂດການນຳໃຊ້ທີ່ດິນ, ວິທີການຊົດເຊີຍທີ່ດິນໃນເວລາເຮັດການສຶກສາບົດວິພາກເສດຖະກິດ-ເຕັກນິກ-ການເງິນ, ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ;

2. ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງປະສານສົມທົບ ແລະ ຮ່ວມມືກັບຂະແໜງ ການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການວາງແຜນນຳໃຊ້ເນື້ອທີ່ດິນໃນເຂດທີ່ໄດ້ຮັບສຳປະທານ;

3. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງມອບເນື້ອທີ່ດິນໃຫ້ຜູ້ລົງທຶນນຳໃຊ້ ຕາມກົດໝາຍວ່າດ້ວຍທີ່ດິນ ຂອງ ສປປ ລາວ ພາຍຫຼັງທີ່ໄດ້ຮັບອະນຸມັດ.

**ມາດຕາ 41(ປັບປຸງ). ການປະກອບສ່ວນໃຫ້ກອງທຶນ**

ຜູ້ພັດທະນາໂຄງການໄຟຟ້າ ນອກຈາກເສຍຄ່າພາກຫຼວງ, ພາສີ, ອາກອນ ແລ້ວຍັງຕ້ອງໄດ້ປະກອບສ່ວນ ຊ່ວຍກອງທຶນ ເພື່ອການປົກປັກຮັກສາສິ່ງແວດລ້ອມໃນຂອບເຂດເນື້ອທີ່ສຳປະທານ, ບໍລິເວນໃກ້ຄຽງ, ປົກປັກຮັກສາອ່າງໂຕ່ງ, ເຂດຕອນລຸ່ມຂອງໂຄງການ ແລະ ພັດທະນາພື້ນຖານໂຄງລ່າງ ດ້ານເສດຖະກິດ ແລະ ສັງຄົມ ຂອງທ້ອງຖິ່ນບ່ອນໂຄງການຕັ້ງຢູ່.

**ມາດຕາ 42. ການລາຍງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດໄຟຟ້າ ຕ້ອງລາຍງານໃຫ້ຂະແໜງການ ພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຢ່າງເປັນປົກກະຕິກ່ຽວກັບການອອກແບບ, ການກໍ່ສ້າງ, ການດຳເນີນງານ ແລະ ຄວາມປອດໄພ ກ່ຽວກັບໄຟຟ້າ ຕາມລະບຽບການ.

## ໝວດທີ IV
## ການພັດທະນາໄຟຟ້າຊົນນະບົດ

**ມາດຕາ 43. ການສົ່ງເສີມໄຟຟ້າຊົນນະບົດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ທຸກພາກສ່ວນເສດຖະກິດ ທີ່ລົງທຶນເຮັດການຜະລິດ,ການຈຳໜ່າຍ, ການດຳເນີນທຸລະກິດຊື້-ຂາຍໄຟຟ້າ, ການລົງທຶນເຂົ້າໃນການກໍ່ສ້າງສາຍສົ່ງ, ສາຍຈຳໜ່າຍໄຟຟ້າ, ການບໍລິການດ້ານໄຟຟ້າ ຫຼື ແຫຼ່ງຜະລິດໄຟຟ້າ ດ້ວຍພະລັງງານໃໝ່, ພະລັງງານທົດແທນ ເພື່ອສະໜອງໄຟຟ້າ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ເຂດພູດອຍ ຈະໄດ້ຮັບນະໂຍບາຍສົ່ງເສີມພິເສດ ກ່ຽວກັບການລົງທຶນຄືກັບກິດຈະການສົ່ງເສີມການລົງທຶນອື່ນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບກົດໝາຍອື່ນ.

**ມາດຕາ 44. ການລົງທຶນໃສ່ການພັດທະນາໄຟຟ້າຊົນນະບົດ**

**ພາກສ່ວນຕ່າງໆ ທີ່ສາມາດລົງທຶນໃສ່ການພັດທະນາໄຟຟ້າຊົນນະບົດ ມີດັ່ງນີ້:**

1. ແຂວງ, ນະຄອນ, ເມືອງ, ເທດສະບານ ລົງທຶນໃສ່ການກໍ່ສ້າງ ແລະ ການຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ດ້ວຍຕົນເອງ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ນິຕິບຸກຄົນ ຕ່າງປະເທດ ລົງທຶນໃນການກໍ່ສ້າງ, ການຕິດຕັ້ງ ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າໂດຍມອບໃຫ້ແຂວງ, ນະຄອນ, ເມືອງ, ເທດສະບານ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້;

3. ຫົວໜ່ວຍວິສາຫະກິດໄຟຟ້າ ທີ່ດຳເນີນການຈຳໜ່າຍໄຟຟ້າ, ການກໍ່ສ້າງ, ການຕິດຕັ້ງ ແລະ ການບໍລິການ ມີຄວາມຮັບຜິດຊອບລົງທຶນໃນການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າແຮງດັນກາງ, ໝໍ້ແປງ, ແຮງດັນຕໍ່າຫາໝໍ້ນັບໄຟ, ສ່ວນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊົມໃຊ້ໄຟຟ້ານັ້ນ ຮັບຜິດຊອບຄ່າໃຊ້ຈ່າຍ ໂດຍເລີ່ມນັບແຕ່ໝໍ້ນັບໄຟເຂົ້າຫາເຮືອນ ຫຼື ສຳນັກງານ ຂອງຕົນ;

4. ປະຊາຊົນບັນດາເຜົ່າ ປະກອບສ່ວນທາງດ້ານຊັບສິນ ແລະ ແຮງງານ ເຂົ້າໃສ່ການພັດທະນາໄຟຟ້າຊົນນະບົດ ໃນຂອບເຂດທ້ອງຖິ່ນຂອງຕົນ;

5. ເຂດຊົນນະບົດຫ່າງໄກສອກຫຼີກ, ເຂດຈຸດສຸມ ຫຼື ເຂດທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ບໍ່ມີຜູ້ໄປລົງທຶນໃສ່ທຸລະກິດໄຟຟ້ານັ້ນ ລັດມີນະໂຍບາຍ ສົ່ງເສີມ ຫຼື ສະໜອງທຶນກໍ່ສ້າງສາຍສົ່ງລະບົບແຮງດັນກາງ, ໝໍ້ແປງ, ແຮງດັນຕໍ່າ ຫາ ໝໍ້ນັບໄຟ.

**ມາດຕາ 45 ( ປັບປຸງ ). ການອະນຸມັດໂຄງການໄຟຟ້າຊົນນະບົດ**

ແຂວງ, ນະຄອນ, ເມືອງ, ເທດສະບານ ເປັນຜູ້ອະນຸມັດໂຄງການໄຟຟ້າຊົນນະບົດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມກົນໄກປະຕູດຽວ ຕາມຂະໜາດກໍາລັງຕິດຕັ້ງ ທີ່ໄດ້ກໍານົດໄວ້ໃນ ມາດຕາ 34 ຂໍ້ 1 ແລະ 2 ຂອງກົດໝາຍສະບັບນີ້.

**ມາດຕາ 46. ກອງທຶນພັດທະນາໄຟຟ້າຊົນນະບົດ**

ລັດ ສົ່ງເສີມໃຫ້ມີການສ້າງຕັ້ງກອງທຶນພັດທະນາໄຟຟ້າຊົນນະບົດ ເພື່ອປະກອບສ່ວນເຂົ້າ ໃນການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າຊົນນະບົດ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ທົ່ວເຖິງ, ແນ່ໃສ່ລຶບລ້າງຄວາມທຸກຍາກ ແລະ ຍົກສູງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ.

ກອງທຶນພັດທະນາໄຟຟ້າຊົນນະບົດ ໄດ້ມາຈາກງົບປະມານຂອງລັດ, ການຊ່ວຍເຫຼືອຈາກ ພາຍໃນ ແລະ ຕ່າງປະເທດ, ການກູ້ຢືມ, ການປະກອບສ່ວນຂອງຜູ້ບໍລິການໄຟຟ້າ, ຂອງປະຊາຊົນ ແລະ ລາຍຮັບຈາກກິດຈະກໍາຕ່າງໆ.

ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນພັດທະນາໄຟຟ້າຊົນນະບົດ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

## ໝວດທີ V
## ລາຄາໄຟຟ້າ

**ມາດຕາ 47. ລາຄາໄຟຟ້າ**

ການກໍານົດລາຄາໄຟຟ້າ ຕ້ອງຮັບປະກັນຄວາມສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ຂອງຊາດ ແລະ ແທດເໝາະກັບເປົ້າໝາຍການຊົມໃຊ້ ແລະ ປະເພດຜູ້ຊົມໃຊ້.

ລາຄາໄຟຟ້າ ຕ້ອງມີສະຖຽນລະພາບ ທັງຮັບປະກັນໃຫ້ຜົນຕອບແທນຕໍ່ການລົງທຶນ ແລະ ການພັດທະນາໄຟຟ້າ.

ກະຊວງພະລັງງານ ແລະ ບໍ່ແຮ່ ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສຶກສາຄົ້ນຄວ້າໂຄງສ້າງລາຄາໄຟຟ້າໃນແຕ່ລະປະເພດ ເພື່ອນໍາສະເໜີລັດຖະບານ ພິຈາລະນາ ເປັນແຕ່ລະໄລຍະ.

ລາຄາໄຟຟ້າຂອງເປົ້າໝາຍການຊົມໃຊ້ ແລະ ປະເພດຜູ້ຊົມໃຊ້ ແມ່ນລັດຖະບານເປັນຜູ້ກໍານົດ.

**ມາດຕາ 48. ປະເພດລາຄາໄຟຟ້າ**

**ລາຄາໄຟຟ້າ ແບ່ງອອກເປັນປະເພດ ດັ່ງນີ້:**

1. ລາຄາຊື້ເຂົ້າ ແລະ ລາຄາຂາຍອອກຕ່າງປະເທດ;

2. ລາຄາຊື້ ແລະ ລາຄາຂາຍຢູ່ພາຍໃນປະເທດ.

ລັດຖະບານ ເປັນຜູ້ກໍານົດລາຄາໄຟຟ້າແຕ່ລະປະເພດ.

**ມາດຕາ 49 ( ປັບປຸງ ). ລາຄາໄຟຟ້າຊົນນະບົດ**

**ລາຄາໄຟຟ້າຊົນນະບົດມີດັ່ງນີ້:**

1. ລາຄາໄຟຟ້າ ເພື່ອຮັບໃຊ້ຊົນນະບົດທີ່ເຊື່ອມຕໍ່ກັບລະບົບໄຟຟ້າ ລວມໂດຍໃຫ້ປະຕິບັດຕາມ ມາດຕາ 48 ຂອງກົດໝາຍສະບັບນີ້;

2. ລາຄາຊື້ຂາຍໄຟຟ້າຂອງໂຄງການໄຟຟ້າທີ່ລັດລົງທຶນ ຊຶ່ງບໍ່ທັນເຊື່ອມຕໍ່ກັບລະບົບໄຟຟ້າລວມ ແມ່ນໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ຄົ້ນຄວ້າ ແລະ ສະເໜີລາຄານະໂຍບາຍ ໂດຍປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

3. ລາຄາຊື້ຂາຍໄຟຟ້າຊົນນະບົດ ທີ່ເອກະຊົນລົງທຶນ ແມ່ນໃຫ້ຜູ້ລົງທຶນສະເໜີ ໂດຍປະສານສົມທົບກັບຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ແລ້ວນໍາສະເໜີອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງພິຈາລະນາ.

## ໝວດທີ VI
## ສິດ ແລະ ພັນທະ ຂອງຜູ້ຜະລິດ, ຜູ້ຈໍາໜ່າຍ ແລະ ຜູ້ຊົມໃຊ້ ໄຟຟ້າ

**ມາດຕາ 50 ( ປັບປຸງ ). ສິດ ແລະ ພັນທະ ຂອງຜູ້ຜະລິດໄຟຟ້າ**

**ຜູ້ຜະລິດໄຟຟ້າ ມີສິດ ຕົ້ນຕໍ ດັ່ງນີ້:**

1. ເຮັດສັນຍາ ຊື້ຂາຍໄຟຟ້າກັບຜູ້ຊົມໃຊ້ ຕາມລະບຽບກົດໝາຍ;

2. ໂອນ ຫຼື ມອບກິດຈະການໄຟຟ້າໃຫ້ຜູ້ອື່ນ ຕາມການເຫັນດີຂອງລັດ;

3. ໄດ້ຮັບຄ່າບໍລິການໄຟຟ້າ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;

4. ຮ້ອງຂໍຄວາມຮ່ວມມືຈາກ

ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເມື່ອມີຄວາມຈຳເປັນ.

**ຜູ້ຜະລິດໄຟຟ້າ ມີ ພັນທະຕົ້ນຕໍ ດັ່ງນີ້:**

1. ປະຕິບັດລະບຽບການ ກ່ຽວກັບຄວາມປອດໄພໃນການດຳເນີນງານ, ການບຳລຸງຮັກສາ ແລະ ມາດຕະຖານເຕັກນິກໄຟຟ້າຂອງລາວຢ່າງເຂັ້ມງວດ;

2. ເສັຍຄ່າພາກຫຼວງ, ພາສີ, ອາກອນ ແລະ ປະຕິບັດພັນທະອື່ນ ຕາມລະບຽບ ກົດໝາຍ ແລະ ສັນຍາສຳປະທານ;

3. ຜະລິດ ແລະ ສະໜອງກະແສໄຟຟ້າ ຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ;

4. ໃຊ້ແທນຄ່າເສັຍຫາຍ ທີ່ດິນ ແລະ ຜົນລະປູກ, ຍົກຍ້າຍ, ຈັດສັນບ່ອນຢູ່,ບ່ອນທຳມາຫາກິນຢ່າງເໝາະສົມ ໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກການຜະລິດໄຟຟ້າ.

**ມາດຕາ 51. ສິດ ແລະ ພັນທະ ຂອງ ຜູ້ຈຳໜ່າຍໄຟຟ້າ**

**ຜູ້ຈຳໜ່າຍໄຟຟ້າ ມີສິດ ຕົ້ນຕໍ ດັ່ງນີ້ :**

1. ເກັບຄ່າໄຟຟ້າ ຈາກການຈຳໜ່າຍ ແລະ ການບໍລິການ;

2. ວາງມາດຕະການຮັກສາຄວາມປອດໄພຂອງສັງຄົມ ແລະ ສິ່ງແວດລ້ອມ ກ່ຽວກັບການຈຳໜ່າຍ ໄຟຟ້າ;

3. ກວດກາ ການກໍ່ສ້າງ, ການຕິດຕັ້ງ ແລະ ການນຳໃຊ້ໄຟຟ້າ ຂອງຜູ້ຊົມໃຊ້ໄຟຟ້າ;

4. ແຈ້ງເຕືອນ, ຮ້ອງຟ້ອງຜູ້ຊົມໃຊ້ໄຟຟ້າ ທີ່ລະເມີດລະບຽບການກ່ຽວກັບໄຟຟ້າ ຫຼື ສ້າງຄວາມເສັຍຫາຍ ຫຼື ສິ່ງທີ່ອາດຈະກໍ່ໃຫ້ເກີດຄວາມເສັຍຫາຍຕໍ່ການຈຳໜ່າຍໄຟຟ້າ;

5. ງົດການຈຳໜ່າຍໄຟຟ້າ ໃຫ້ຜູ້ຊົມໃຊ້ທີ່ລະເມີດລະບຽບການກ່ຽວກັບໄຟຟ້າ ຢ່າງຮ້າຍແຮງ;

6. ປະຕິເສດ ຄຳຮ້ອງຂໍ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການນຳໃຊ້ສາຍຈຳໜ່າຍໄຟຟ້າຂອງຕົນ ເມື່ອເຫັນວ່າບໍ່ມີຄວາມປອດໄພທາງດ້ານເຕັກນິກ.

**ຜູ້ຈຳໜ່າຍໄຟຟ້າ ມີ ພັນທະ ດັ່ງນີ້:**

1. ສະໜອງໄຟຟ້າ ໃຫ້ຜູ້ສະເໜີນຳໃຊ້ໄຟຟ້າ ຕາມກຳນົດເວລາ, ຢ່າງກວ້າງຂວາງ, ເປັນປົກກະຕິ ແລະ ມີຄຸນນະພາບ ຕາມມາດຕະຖານເຕັກນິກໄຟຟ້າຂອງລາວ;

2. ແຈ້ງລ່ວງໜ້າ ໃຫ້ຜູ້ຊົມໃຊ້ໄຟຟ້າຊາບກ່ອນຈະຕັດໄຟຟ້າ ແຕ່ລະເທື່ອ ຍົກເວັ້ນກໍລະນີສຸກເສີນ;

3. ສ້າງ ແລະ ແນະນຳ ລະບຽບການກ່ຽວກັບການນຳໃຊ້ໄຟຟ້າ, ຂໍ້ມູນຂ່າວສານທີ່ຈຳເປັນໃຫ້ແກ່ຜູ້ຊົມໃຊ້ໄຟຟ້າ ໃຫ້ມີຄວາມປອດໄພ, ບໍລິການໃຫ້ຜູ້ຊົມໃຊ້ໄຟຟ້າດ້ວຍຄວາມຮັບຜິດຊອບ ແລະ ທັນເວລາ;

4. ນຳໃຊ້ອຸປະກອນໄຟຟ້າ ທີ່ມີຄຸນນະພາບດີ ແລະ ທັນສະໄໝ;

5. ຮັບປະກັນຄວາມປອດໄພ ແລະ ສະຫວັດດີການຂອງພະນັກງານໄຟຟ້າ, ຄວາມປອດໄພຂອງສັງຄົມ;

6. ເສັຍພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ປະຕິບັດພັນທະອື່ນ ຕາມລະບຽບກົດໝາຍ;

7. ໃຊ້ແທນຄ່າເສັຍຫາຍ ໃນກໍລະນີທີ່ໄດ້ກໍ່ຄວາມເສັຍຫາຍຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ, ສາທາລະນະ ແລະ ສິ່ງແວດລ້ອມ;

8. ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ສາຍຈຳໜ່າຍໄຟຟ້າຂອງຕົນ ຕາມມາດຕະຖານເຕັກນິກໄຟຟ້າຂອງລາວ;

9. ສະຫຼຸບ, ລາຍງານ ຜົນການຈຳໜ່າຍ ແລະ ການຄຸ້ມຄອງໄຟຟ້າ ຕາມມາດຕະຖານ ເຕັກນິກໄຟຟ້າຂອງລາວ ຕໍ່ ຂະແໜງການພະລັງງານ ແລະ ບໍ່ແຮ່ ຢ່າງເປັນປົກກະຕິ;

10. ປະຕິບັດ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 52. ສິດ ແລະ ພັນທະ ຂອງ ຜູ້ຊົມໃຊ້ໄຟຟ້າ**

**ຜູ້ຊົມໃຊ້ໄຟຟ້າ ມີ ສິດ ຕົ້ນຕໍ ດັ່ງນີ້:**

1. ໄດ້ຮັບຄວາມປອດໄພ ໃນການນຳໃຊ້ໄຟຟ້າ;

2. ໄດ້ຮັບການບໍລິການຢ່າງສະດວກສະບາຍ ໃນການຕິດຕັ້ງ ແລະ ສ້ອມແປງໄຟຟ້າ ໃນເຮືອນ ຫຼື ສຳນັກງານ ຂອງຕົນ;

3. ໄດ້ຮັບຄຳແນະນຳ ກ່ຽວກັບການນຳໃຊ້ໄຟຟ້າ;

4. ສະເໜີໃຫ້ກວດກາ ການຄິດໄລ່ລາຄາໄຟຟ້າ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;

5. ສະເໜີ ຫຼື ຮ້ອງຟ້ອງ ຕໍ່ຜູ້ດຳເນີນທຸລະກິດໄຟຟ້າ ທີ່ເນື່ອງມາຈາກຄວາມເສັຍຫາຍ ຍ້ອນການບໍລິການ ຫຼື ເຕັກນິກໄຟຟ້າ ບໍ່ຮັບປະກັນ.

**ຜູ້ຊົມໃຊ້ໄຟຟ້າ ມີ ພັນທະຕົ້ນຕໍ ດັ່ງນີ້:**

1. ຮັບຜິດຊອບ, ບຳລຸງຮັກສາ, ປ່ຽນຖ່າຍສາຍ ແລະ ອຸປະກອນໄຟຟ້າພາຍໃນເຮືອນ ຫຼື ສຳນັກງານຂອງຕົນ;

2. ປະຕິບັດ ລະບຽບການ ແລະ ຄຳແນະນຳ ກ່ຽວກັບການຊົມໃຊ້ໄຟຟ້າ;

3. ຊົມໃຊ້ໄຟຟ້າ ຢ່າງປະຢັດ ແລະ ມີປະສິດທິພາບ;

4. ເສັຍຄ່າໄຟຟ້າ ແລະ ຄ່າບໍລິການ ທີ່ຕົນຊົມໃຊ້ ໃຫ້ຄົບຖ້ວນ ແລະ ເປັນປົກກະຕິ;

5. ອຳນວຍຄວາມສະດວກ ໃຫ້ແກ່ພະນັກງານ ຫຼື ເຈົ້າໜ້າທີ່ໄຟຟ້າ ໃນການຕິດຕັ້ງ, ສ້ອມແປງ, ກວດກາ ແລະ ຈົດຕົວເລກຊົມໃຊ້ໄຟຟ້າ;

6. ແຈ້ງໃຫ້ພະນັກງານ ຫຼື ເຈົ້າໜ້າທີ່ໄຟຟ້າໂດຍດ່ວນ ໃນກໍລະນີທີ່ພົບເຫັນປາກົດການຜິດປົກກະຕິ ກ່ຽວກັບໄຟຟ້າ;

7. ປະກອບສ່ວນຊ່ວຍປົກປັກຮັກສາອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ.

## ໝວດທີ VII
## ຂໍ້ຫ້າມ

**ມາດຕາ 53. ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ໄຟຟ້າ**

**ຫ້າມພະນັກງານ ແລະ ເຈົ້າໜ້າທີ່ໄຟຟ້າ ມີການກະທຳ ດັ່ງນີ້:**

1. ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວຈາກທຸລະກິດ ໄຟຟ້າ;

2. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບທຸລະກິດໄຟຟ້າທີ່ການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບ ຂອງລັດ ແລະ ທາງລັດຖະການ ກ່ຽວກັບທຸລະກິດໄຟຟ້າ;

5. ປອມແປງເອກະສານຕ່າງໆ ກ່ຽວກັບທຸລະກິດໄຟຟ້າ;

6. ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດໄຟຟ້າໃນທຸກຮູບແບບ;

7. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ;

8 ຊື້-ຂາຍ ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ຢ່າງຜິດກົດໝາຍ;

9 ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 54. ຂໍ້ຫ້າມສຳລັບນັກທຸລະກິດ**

**ຫ້າມນັກທຸລະກິດ ພາຍໃນແລະຕ່າງປະເທດ ມີການກະທຳ ດັ່ງນີ້:**

1. ດຳເນີນການສຳຫຼວດ ແລະ ພັດທະນາທຸລະກິດໄຟຟ້າໂດຍບໍ່ໄດ້ຮັບອະນຸຍາດ;

2. ກໍ່ສ້າງ, ຕິດຕັ້ງ ແລະ ດຳເນີນງານ ກ່ຽວກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າທີ່ບໍ່ໄດ້ມາດຕະຖານ ແລະ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຖ່ວງດຶງ, ແກ່ຍາວການປະຕິບັດໂຄງການພັດທະນາພະລັງງານໄຟຟ້າ ທີ່ຕົນໄດ້ຮັບອະນຸຍາດແລ້ວ;

4. ນຳໃຊ້ ຫຼື ແຈ້ງຂໍ້ມູນ ກ່ຽວກັບການສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນງານ ກ່ຽວກັບກິດຈະການໄຟຟ້າ ທີ່ບໍ່ຖືກຕ້ອງ;

5. ຊື້ຈ້າງ, ໃຫ້ສິນບົນ ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ;

6. ໃຊ້ຄວາມຮຸນແຮງແລະແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ;

7. ຊື້-ຂາຍ ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ທີ່ບໍ່ໄດ້ມາດຕະຖານ ແລະ ຢ່າງຜິດກົດໝາຍ;

8. ລະເມີດສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ ກ່ຽວກັບທຸລະກິດໄຟຟ້າ;

9. ມີການກະທຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 55. ຂໍ້ຫ້າມສຳລັບປະຊາຊົນ**

**ຫ້າມປະຊາຊົນ ມີການກະທຳດັ່ງນີ້:**

1. ບຸກລຸກ, ທຳລາຍປ່າໄມ້ ເປັນຕົ້ນ ປ່າປ້ອງກັນ, ປ່າຍອດນ້ຳ ເພື່ອຮັບປະກັນ ບໍ່ໃຫ້ນ້ຳບົກແຫ້ງ ສຳລັບການຜະລິດໄຟຟ້າ;

2. ບຸກລຸກສະຖານທີ່, ລັກ, ທຳລາຍອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ;

3. ທຳການປຸກສ້າງ, ຕັ້ງຖິ່ນຖານ ຫຼື ທຳການຜະລິດ ຢູ່ໃກ້ກັບບໍລິເວນສະຖານທີ່ຕັ້ງຂອງອຸປະກອນ ແລະສິ່ງປະກອບສ້າງດ້ານໄຟຟ້າໂດຍບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ;

4. ຮ່ວມມືກັບ ນັກທຸລະກິດ, ພະນັກງານ ຫຼື ເຈົ້າໜ້າທີ່ເຂົ້າບຸກລຸກ ສະຖານທີ່, ລັກ, ທຳລາຍອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ;

5. ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ໄຟຟ້າ;

6. ໃຊ້ຄວາມຮຸນແຮງແລະແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ ແລະ ເຈົ້າໜ້າທີ່ ໄຟຟ້າ ຫຼື ຜູ້ອື່ນ

ເພື່ອຫາຜົນປະໂຫຍດສ່ວນຕົວ;

7. ຊື້ ແລະ ຂາຍອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ຢ່າງບໍ່ຖືກຕ້ອງ;

8. ມີການກະທຳອື່ນ ທີ່ເປັນການ ລະເມີດລະບຽບກົດໝາຍ.

**ມາດຕາ 56. ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ**

**ຫ້າມການຈັດຕັ້ງ ແລະ ບຸກຄົນອື່ນ ມີການກະທຳ ດັ່ງນີ້:**

1. ໃຊ້ສິດໜ້າທີ່ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ ພະນັກງານ ແລະ ເຈົ້າໜ້າທີ່ໄຟຟ້າ ເພື່ອຫາຜົນປະໂຫຍດທີ່ບໍ່ຊອບທຳ;

2. ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ພັກພວກ ກ່ຽວກັບທຸລະກິດ ໄຟຟ້າ;

3. ດຳເນີນທຸລະກິດໄຟຟ້າດ້ວຍຕົນເອງ ຫຼື ມີຮຸ້ນສ່ວນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ອະນຸຍາດ ສຳຫຼວດ, ອອກແບບ, ກໍ່ສ້າງ ຫຼື ດຳເນີນງານ ກ່ຽວກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ຢ່າງບໍ່ຖືກຕ້ອງ ຕາມຂັ້ນຕອນ ແລະ ລະບຽບກົດໝາຍ;

5. ກົດໜ່ວງການດຳເນີນຄະດີ ກ່ຽວກັບຂໍ້ຂັດແຍ່ງທາງດ້ານທຸລະກິດໄຟຟ້າ;

6. ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ໄຟຟ້າ;

7. ດຳເນີນທຸລະກິດໄຟຟ້າ ທີ່ບໍ່ໄດ້ຮັບອະນຸຍາດຕາມກົດໝາຍ;

8. ຜະລິດ, ປະກອບ, ຊື້, ຂາຍ, ຈຳໜ່າຍ, ນຳເຂົ້າ ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ທີ່ບໍ່ໄດ້ມາດຕະຖານ ຫຼື ຄຸນນະພາບຕ່ຳ;

9. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 57. ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ອາດຈະດຳເນີນດ້ວຍຮູບການ ດັ່ງນີ້:**

1. ການໄກ່ເກ່ຍ ຫຼື ການປະນີປະນອມກັນ;

2. ການແກ້ໄຂທາງດ້ານບໍລິຫານ;

3. ການແກ້ໄຂ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຕັດສິນຂອງສານ;

5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 58. ການໄກ່ເກ່ຍ ແລະ ການປະນີປະນອມກັນ**

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງໃນການດຳເນີນທຸລະກິດໄຟຟ້າ ຄູ່ກໍລະນີ ສາມາດເຈລະຈາ, ໄກ່ເກ່ຍ ແລະ ປະນີປະນອມກັນໄດ້.

**ມາດຕາ 59. ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີທີ່ບໍ່ສາມາດແກ້ໄຂດ້ວຍຮູບການປະນີປະນອມນຳກັນແລ້ວ ຄູ່ກໍລະນີ ມີສິດສະເໜີ ຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນ ເປັນຜູ້ແກ້ໄຂ.

**ມາດຕາ 60. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີທີ່ຂະແໜງການພະລັງງານ ແລະ ບໍ່ແຮ່ ບໍ່ສາມາດໄກ່ເກ່ຍ ແລະ ແກ້ໄຂໄດ້ນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ ແກ້ໄຂຕາມລະບຽບ ກົດໝາຍ.

**ມາດຕາ 61. ການຕັດສິນຂອງສານ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນທຸລະກິດໄຟຟ້າ ຊຶ່ງບໍ່ສາມາດຕົກລົງກັນໄດ້ດ້ວຍການ ແກ້ໄຂທາງດ້ານບໍລິຫານ ຫຼື ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງ ຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ ຕາມລະບຽບກົດໝາຍ.

**ມາດຕາ 62. ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກິດໄຟຟ້າ ລະຫວ່າງ ຜູ້ລົງທຶນພາຍໃນ ກັບຜູ້ລົງທຶນຕ່າງປະເທດ ຫຼື ຜູ້ລົງທຶນຕ່າງປະເທດດ້ວຍກັນ ຢູ່ ສປປ ລາວ ຫຼື ລະຫວ່າງຜູ້ລົງທຶນຕ່າງ ປະເທດກັບລັດຖະບານ ໃຫ້ນຳໃຊ້ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງຂອງຄູ່ກໍລະນີ.

## ໝວດທີ IX
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 63. ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານໄຟຟ້າຢ່າງລວມສູນ ແລະ ເປັນເອກະພາບໃນຂອບ ເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນຂະແໜງການແຜນການ ແລະ ການລົງທຶນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການເງິນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງວຽກງານໄຟຟ້າ ປະກອບດ້ວຍ:**

1. ກະຊວງ ພະລັງງານ ແລະ ບໍ່ແຮ່;
2. ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ;
3. ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ.

**ມາດຕາ 64 (ປັບປຸງ). ສິດ ແລະ ໜ້າທີ່ ຂອງ ກະຊວງ ພະລັງງານ ແລະ ບໍ່ແຮ່**

**ໃນການຄຸ້ມຄອງວຽກງານໄຟຟ້າ ກະຊວງພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ດັ່ງນີ້:**

1. ເປັນເສນາທິການ ໃນການສ້າງແຜນຍຸດທະສາດ, ແຜນການພັດທະນາໄຟຟ້າ, ລະບຽບກົດໝາຍກ່ຽວກັບວຽກງານໄຟຟ້າ ແລ້ວນຳສະເໜີ ລັດຖະບານ ພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ລະບຽບກົດໝາຍ ກ່ຽວກັບໄຟຟ້າ ແລະ ແຜນການພັດທະນາ ໄຟຟ້າ;
3. ຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານໄຟຟ້າ ໃນຂອບເຂດທົ່ວປະເທດ;
4. ຊີ້ນຳ ການສຳຫຼວດເກັບກຳຂໍ້ມູນ, ການຂຶ້ນສະຖິຕິ ກ່ຽວກັບແຫຼ່ງພະລັງງານໄຟຟ້າ ໃນຂອບເຂດທົ່ວປະເທດ;
5. ຄຸ້ມຄອງ, ຕິດຕາມ ດ້ານວິຊາການ ກ່ຽວກັບທຸລະກິດໄຟຟ້າ ທັງພາກລັດ ແລະ ເອກະຊົນ;
6. ຊີ້ນຳ ການປົກປັກຮັກສາສິ່ງແວດລ້ອມ ແລະ ຮັກສາແຫຼ່ງພະລັງງານໄຟຟ້າ;
7. ສຶກສາຄົ້ນຄວ້າ ແລະ ໃຫ້ຄຳເຫັນດ້ານວິຊາການ ກ່ຽວກັບການລົງທຶນໃສ່ທຸລະກິດໄຟຟ້າ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ຄົ້ນຄວ້າກ່ຽວກັບການຕໍ່ອາຍຸ, ການສັ່ງໂຈະ ຫຼື ຖອນໃບອະນຸຍາດການດຳເນີນທຸລະກິດໄຟຟ້າ ຂອງຜູ້ລົງທຶນ;
9. ໃຫ້ຄຳແນະນຳຕໍ່ຜູ້ດຳເນີນທຸລະກິດໄຟຟ້າ ກ່ຽວກັບການນຳເຂົ້າໄຟຟ້າ, ອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າທີ່ກ່ຽວຂ້ອງ;
10. ກໍ່ສ້າງ, ບຳລຸງ ຍົກລະດັບພະນັກງານວິຊາການ, ພະນັກງານບໍລິຫານຄຸ້ມຄອງ ກ່ຽວກັບວຽກງານ ພັດທະນາໄຟຟ້າ;
11. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມການສະເໜີຂອງຜູ້ດຳເນີນທຸລະກິດໄຟຟ້າ;
12. ສຶກສາຄົ້ນຄວ້າ ລາຄາໄຟຟ້າ ແລ້ວນຳສະເໜີລັດຖະບານ ເພື່ອພິຈາລະນາຮັບຮອງ;
13. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງທຸລະກິດໄຟຟ້າ;
14. ພົວພັນ ຮ່ວມມືກັບສາກົນ ກ່ຽວກັບວຽກງານໄຟຟ້າ ແລະ ການຊອກແຫຼ່ງທຶນ ເພື່ອພັດທະນາໄຟຟ້າ;
15. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານໄຟຟ້າໃຫ້ລັດຖະບານ ຢ່າງເປັນປົກກະຕິ;
16. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບວຽກງານໄຟຟ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 65 (ປັບປຸງ). ສິດ ແລະ ໜ້າທີ່ ຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານໄຟຟ້າ ພະແນກ ພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ດັ່ງນີ້:**

1 ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນການພັດທະນາໄຟຟ້າ, ຊີ້ນຳ ແລະ ຄຸ້ມຄອງວຽກງານໄຟຟ້າຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ, ເຜີຍແຜ່ ລະບຽບກົດໝາຍ ກ່ຽວກັບໄຟຟ້າ ແລະ ແຜນການພັດທະນາ ໄຟຟ້າ ໃນທ້ອງຖິ່ນຂອງຕົນ;
3. ຄຸ້ມຄອງ, ຕິດຕາມດ້ານວິຊາການກ່ຽວກັບທຸລະກິດໄຟຟ້າ ນັບທັງພາກລັດ ແລະ ເອກະຊົນ;
4. ຈັດຕັ້ງການສຳຫຼວດເກັບກຳຂໍ້ມູນ, ເກັບກຳສະຖິຕິ ແລະ ປົກປັກຮັກສາແຫຼ່ງພະລັງງານໄຟຟ້າ;
5. ຄົ້ນຄວ້າ, ໃຫ້ຄຳແນະນຳໃນການດຳເນີນທຸລະກິດໄຟຟ້າ ທີ່ມີກຳ

ລັງຕິດຕັ້ງແຕ່ ສິບຫ້າ ເມກາວັດ ລົງມາ, ທີ່ພົວພັນກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ;

6. ສຶກສາ ຄົ້ນຄວ້າ ແລະ ໃຫ້ຄໍາເຫັນດ້ານວິຊາການ ກ່ຽວກັບການລົງທຶນໃສ່ທຸລະກິດໄຟຟ້າ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ຮັບຮອງເອົາການແຕ່ງຕັ້ງຫົວໜ້າວິສະວະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມການສະເໜີຂອງຜູ້ດໍາເນີນທຸລະກິດໄຟຟ້າ;

8. ປົກປັກຮັກສາສິ່ງແວດລ້ອມ ແລະ ຮັກສາແຫຼ່ງພະລັງງານໄຟຟ້າ;

9. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນໃນການຄຸ້ມຄອງວຽກງານໄຟຟ້າ;

10. ພົວພັນ ແລະ ຮ່ວມມືສາກົນ ຕາມການມອບໝາຍ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ຫຼື ອົງການປົກຄອງແຂວງ, ນະຄອນ;

11. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານໄຟຟ້າຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບວຽກງານໄຟຟ້າ ຕາມການມອບໝາຍຂອງກະຊວງ ພະລັງງານ ແລະ ບໍ່ແຮ່ ຫຼື ອົງການປົກຄອງແຂວງ, ນະຄອນ.

### ມາດຕາ 66. ສິດ ແລະ ໜ້າທີ່ ຂອງຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ

**ໃນການຄຸ້ມຄອງວຽກງານໄຟຟ້າ ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດແຜນການ, ໂຄງການ, ລະບຽບກົດໝາຍ ແລະ ຄໍາແນະນໍາ ຂອງກະຊວງ ແລະ ພະແນກພະລັງງານ ແລະ ບໍ່ແຮ່ ກ່ຽວກັບວຽກງານໄຟຟ້າ;

2. ເຜີຍແຜ່ລະບຽບກົດໝາຍກ່ຽວກັບໄຟຟ້າ ແລະ ລະບຽບການກ່ຽວກັບຄວາມປອດໄພ ໃນການດໍາເນີນງານ ແລະ ບໍາລຸງຮັກສາ ໃຫ້ແກ່ຜູ້ດໍາເນີນທຸລະກິດໄຟຟ້າ ຕາມຄວາມຮັບຜິດຊອບຂອງຕົນ;

3. ໃຫ້ຄໍາແນະນໍາໃນການດໍາເນີນທຸລະກິດໄຟຟ້າ ທີ່ມີກໍາລັງຕິດຕັ້ງແຕ່ ໜຶ່ງຮ້ອຍ ກິໂລວັດລົງມາ, ທີ່ພົວພັນກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ;

4. ໃຫ້ຄໍາແນະນໍາ ໃນການດໍາເນີນງານ ທີ່ພົວພັນກັບອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ, ເກັບກໍາສະຖິຕິອຸປະຕິເຫດດ້ານໄຟຟ້າທີ່ຮ້າຍແຮງ;

5. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ໃນການ ຄຸ້ມຄອງວຽກງານໄຟຟ້າ;

6. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານໄຟຟ້າຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບວຽກງານໄຟຟ້າ ຕາມການມອບໝາຍຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ນະຄອນ ຫຼື ອົງການປົກຄອງເມືອງ, ເທດສະບານ.

### ມາດຕາ 67. ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ

ໃນການຄຸ້ມຄອງວຽກງານໄຟຟ້າ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການພະລັງງານ ແລະ ບໍ່ແຮ່ ຕາມພາລະບົດບາດຂອງຕົນ.

### ມາດຕາ 68 ( ປັບປຸງ ). ອົງການກວດກາ

ອົງການກວດກາ ປະກອບດ້ວຍ ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານໄຟຟ້າ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້ ແລະ ອົງການກວດກາພາຍນອກ.

ນອກຈາກນີ້ ອົງການກວດກາກໍຍັງມີຄະນະກໍາມະການກວດກາດ້ານເຕັກນິກອີກ.

ທຸກຄ່າໃຊ້ຈ່າຍໃນການດໍາເນີນວຽກງານ ກວດກາ ແລະ ກວດສອບດ້ານວິຊາການ ກ່ຽວກັບ ການດໍາເນີນທຸລະກິດໄຟຟ້າ ຕ້ອງໄດ້ຄິດໄລ່ເຂົ້າຢູ່ໃນມູນຄ່າຂອງໂຄງການ.

### ມາດຕາ 69. ຄະນະກໍາມະການກວດກາດ້ານເຕັກນິກ

ຄະນະກໍາມະການກວດກາດ້ານເຕັກນິກ ປະກອບດ້ວຍ ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ຊຶ່ງໄດ້ຮັບການແຕ່ງຕັ້ງ ໂດຍລັດຖະມົນຕີວ່າການ ກະຊວງ ພະລັງງານ ແລະ ບໍ່ແຮ່ ເພື່ອເຮັດໃຫ້ການກໍ່ສ້າງ, ການຕິດຕັ້ງ, ການດໍາເນີນທຸລະກິດ ໄຟຟ້າ ຮັບປະກັນ ດ້ານເຕັກນິກ, ຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ.

ຄະນະກໍາມະການກວດກາດ້ານເຕັກນິກດັ່ງກ່າວ ຈະຖືກຍຸບເລີກໄປໃນຕົວ ພາຍຫຼັງທີ່ໄດ້ປະຕິບັດໜ້າທີ່ສໍາເລັດແລ້ວ.

**ມາດຕາ 70. ການກວດກາພາຍນອກ**

ການກວດກາພາຍນອກ ມີຈຸດປະສົງກວດກາ ການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານໄຟຟ້າ ເພື່ອໃຫ້ ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທຳ.

**ການກວດກາພາຍນອກ ມີ ດັ່ງນີ້:**

1. ການກວດກາຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ;

2. ການກວດກາຂອງອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;

3. ການກວດສອບຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບ;

4. ການຕິດຕາມກວດກາຂອງປະຊາຊົນ.

**ມາດຕາ 71. ເນື້ອໃນຂອງການກວດກາ**

ການກວດກາ ແມ່ນ ແນໃສ່ເຮັດໃຫ້ວຽກງານໄຟຟ້າມີປະສິດທິຜົນ, ຮັບປະກັນດ້ານເຕັກນິກ, ຄວາມປອດໄພ, ການປົກປັກຮັກສາສິ່ງແວດລ້ອມ ແລະ ຮັບປະກັນໃຫ້ທຸລະກິດໄຟຟ້າດຳເນີນໄປຢ່າງຖືກຕ້ອງຕາມລະບຽບກົດໝາຍ.

**ການກວດກາວຽກງານໄຟຟ້າ ມີເນື້ອໃນ ດັ່ງນີ້:**

1. ການປະຕິບັດຂັ້ນຕອນຂອງການດຳເນີນທຸລະກິດໄຟຟ້າ;

2. ການປະຕິບັດກຳນົດເວລາຂອງ ການດຳເນີນທຸລະກິດໄຟຟ້າ;

3. ການປະຕິບັດບົດວິພາກເສດຖະກິດ-ເຕັກນິກ-ການເງິນ ກ່ຽວກັບທຸລະກິດໄຟຟ້າ;

4. ການປະຕິບັດແຜນການດຳເນີນງານ ກ່ຽວກັບທຸລະກິດໄຟຟ້າ;

5. ການປະຕິບັດມາດຕະການຄວາມປອດໄພ ທາງດ້ານວິຊາການ;

6. ການປະຕິບັດກົດໝາຍແລະສັນຍາ ກ່ຽວກັບທຸລະກິດໄຟຟ້າ;

7. ການປະຕິບັດມາດຕະຖານອຸປະກອນໄຟຟ້າ;

8. ການອອກແບບ,ການກໍ່ສ້າງ, ການຕິດຕັ້ງ ແລະ ການຄຸ້ມຄອງອຸປະກອນ ແລະ ສິ່ງປະກອບສ້າງ ດ້ານໄຟຟ້າ;

9. ການນຳໃຊ້ມາດຕະການ ຈຳກັດຜົນກະທົບຕໍ່ສິ່ງແວດລ້ອມ;

10. ການໃຊ້ແທນຄ່າເສັຍຫາຍຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ;

11. ລະບົບການເງິນ, ນະໂຍບາຍ ແລະ ສະຫວັດດີການສັງຄົມ;

12. ການຈົດ ແລະ ບັນທຶກຕົວເລກການຊົມໃຊ້ໄຟຟ້າ.

**ມາດຕາ 72. ຮູບການກວດກາ**

**ການກວດກາວຽກງານໄຟຟ້າ ມີສາມຮູບການ ດັ່ງນີ້:**

1. ການກວດກາປົກກະຕິ;

2. ການກວດກາ ໂດຍມີການແຈ້ງ ໃຫ້ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ໝວດທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 73. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນໃນການເຄື່ອນໄຫວວຽກງານໄຟຟ້າ ແລະ ການປົກປັກຮັກສາສິ່ງແວດລ້ອມ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 74. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ດຳເນີນຄະດີ ຕາມແຕ່ ກໍລະນີ ເບົາ ຫຼື ໜັກ.

**ມາດຕາ 75. ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບໄຟຟ້າ, ຂໍ້ຫ້າມ ໃນສະຖານ

ເບົາ ຫຼື ບໍ່ປະຕິບັດຕາມມາດຕະຖານເຕັກນິກໄຟຟ້າ ຊຶ່ງກໍ່ຄວາມເສັຍຫາຍບໍ່ຫຼວງຫຼາຍ, ບໍ່ລາຍງານການດຳເນີນທຸລະກິດໄຟຟ້າ, ລາຍງານບໍ່ທັນຕາມກຳນົດເວລາ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 76. ມາດຕະການທາງວິໄນ**

ເຈົ້າໜ້າທີ່ ຫຼື ພະນັກງານໄຟຟ້າ ທີ່ໄດ້ລະເມີດລະບຽບກົດໝາຍ ແລະ ຂໍ້ຫ້າມ ກ່ຽວກັບໄຟຟ້າ ທີ່ເປັນການກະທຳບໍ່ຮ້າຍແຮງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສັຍຫາຍແຕ່ ໜຶ່ງລ້ານກີບ ລົງມາ ແລະ ບໍ່ຈິງໃຈລາຍງານການກະທຳຂອງຕົນ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກປະຕິບັດມາດຕະການທາງວິໄນ ດັ່ງນີ້:

1. ກ່າວເຕືອນຄວາມຜິດ ແລ້ວບັນທຶກລົງໃນຊີວະປະຫວັດ;

2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;

3. ຍົກຍ້າຍໄປຮັບຕຳແໜ່ງໃໝ່ທີ່ຕ່ຳກວ່າເກົ່າ;

4. ຖືກໄລ່ອອກຈາກການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຍັງຕ້ອງສົ່ງຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງຕາມກົດໝາຍນັ້ນ ຄືນໃຫ້ແກ່ລັດ.

**ມາດຕາ 77. ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບໄຟຟ້າ ແລະ ກໍ່ຄວາມເສັຍຫາຍ ຊຶ່ງບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຈະຖືກປັບໃໝເນື່ອງມາຈາກການກະທຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດໄຟຟ້າ ໂດຍບໍ່ໄດ້ຮັບອະນຸຍາດ;

2. ກໍ່ສ້າງ, ຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງດ້ານໄຟຟ້າ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຕໍ່ໄຟຟ້າເຂົ້າເຮືອນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ໃຫ້ຜູ້ອື່ນຕໍ່ໄຟຟ້າຈາກເຮືອນຂອງຕົນ ໂດຍບໍ່ໄດ້ຮັບອະນຸ ຍາດ;

5. ດັດແປງໝໍ້ນັບໄຟ;

6. ບໍ່ປະຕິບັດຕາມມາດຕະຖານເຕັກນິກໄຟຟ້າ ແລະ ມາດຕະການຄວາມປອດໄພ;

7. ບໍ່ປະຕິບັດມາດຕະການ ໃນການຈຳກັດຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ;

8. ບໍ່ເສັຍພາສີ, ອາກອນ ແລະ ບໍ່ປະຕິບັດພັນທະອື່ນ ຕາມລະບຽບກົດໝາຍ;

9. ບໍ່ໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຄວາມເສັຍຫາຍແກ່ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ ແລະ ສິ່ງແວດລ້ອມ.

ອັດຕາປັບໃໝ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 78. ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສັຍຫາຍ ແກ່ຜູ້ອື່ນ ກ່ຽວກັບວຽກງານໄຟຟ້າ ຈະຕ້ອງໄດ້ໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ79. ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບໄຟຟ້າ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

## ໝວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 80. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 81(ປັບປຸງ). ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ທົກສິບ ວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ໄຟຟ້າ ສະບັບເລກທີ 03/ສພຊ ລົງວັນທີ 8 ທັນວາ 2008.

ກົດໝາຍສະບັບນີ້ ຈະບໍ່ສົ່ງຜົນສະທ້ອນຍ້ອນຫຼັງ ຕໍ່ໂຄງການໄຟຟ້າທີ່ໄດ້ຮັບອະນຸມັດແລ້ວກ່ອນ ກົດໝາຍ ສະບັບນີ້ ມີຜົນບັງຄັບໃຊ້.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ປານີ ຢາທໍ່ຕູ້**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ສະພາແຫ່ງຊາດ ເລກທີ 06 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2011

# ກົດໝາຍ
# ວ່າດ້ວຍການປະກັນໄພ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ໃໝ່). ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ, ກວດກາວຽກງານປະກັນໄພ ເພື່ອເຮັດໃຫ້ທຸລະກິດປະກັນໄພດໍາເນີນຢ່າງຖືກຕ້ອງ, ເປັນທໍາ ແລະ ມີປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 (ໃໝ່). ການປະກັນໄພ**

ການປະກັນໄພ ແມ່ນ ການບໍລິຫານຄວາມສ່ຽງຕໍ່ໄພຕ່າງໆທີ່ອາດຈະເກີດຂຶ້ນກັບຜູ້ໄດ້ຮັບການປະກັນໄພທີ່ໄດ້ຈ່າຍຄ່າທໍານຽມປະກັນໄພໃຫ້ແກ່ຜູ້ປະກັນໄພ ໂດຍການຊົດເຊີຍຄ່າເສັຍຫາຍ ດ້ວຍສິນປະກັນໄພ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາປະກັນໄພ.

**ມາດຕາ 3 (ໃໝ່). ການອະທິບາຍຄໍາສັບ**

**ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

ທຸລະກິດປະກັນໄພ ໝາຍເຖິງກິດຈະກໍາຂອງຜູ້ປະກັນໄພທີ່ດໍາເນີນທຸລະກິດກ່ຽວກັບການຮັບປະກັນຄວາມສ່ຽງຕໍ່ຊັບສິນ, ຊີວິດຂອງບຸກຄົນ ແລະ ນິຕິບຸກຄົນ. ສ້າງວຽກເຮັດງານທໍາໃນລະບົບເສດຖະກິດ ຊຶ່ງຜູ້ປະກັນໄພຍອມຮັບເອົາຄວາມສ່ຽງທີ່ອາດເກີດຂຶ້ນກັບຜູ້ໄດ້ຮັບການປະກັນໄພ ບົນພື້ນຖານທີ່ຜູ້ໄດ້ຮັບການປະກັນໄພຕ້ອງຈ່າຍຄ່າ

1. ທໍານຽມປະກັນໄພ ເພື່ອໃຫ້ຜູ້ປະກັນໄພມີເງິນສະສົມໄວ້ ເພື່ອຈ່າຍສິນທົດແທນ ຫຼື ຄ່າເສັຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ ໃນກໍລະນີທີ່ມີຄວາມເສັຍຫາຍເກີດຂຶ້ນ;

2. **ທຸລະກິດການປະກັນໄພຕໍ່**

**ໝາຍເຖິງ** ກິດຈະກຳຂອງຜູ້ປະກັນໄພທີ່ດຳເນີນການບໍລິຫານ ແບ່ງສ່ວນຄວາມສ່ຽງຕໍ່ຮູບແບບການປະກັນໄພທົ່ວໄປ ໄປປະກັນໄພຕໍ່ນຳບໍລິສັດປະກັນໄພຢູ່ພາຍໃນ ຫຼື ຕ່າງປະເທດ;

3. **ຜູ້ປະກັນໄພ ໝາຍເຖິງ** ບໍລິສັດປະກັນໄພທີ່ຖືກສ້າງຕັ້ງຂຶ້ນ ແລະ ດຳເນີນທຸລະກິດໂດຍສອດຄ່ອງກັບບົດບັນຍັດຂອງກົດໝາຍສະບັບນີ້ ແລະ ບົດບັນຍັດຂອງກົດໝາຍສະບັບອື່ນ ທີ່ກ່ຽວຂ້ອງ;

4. **ຜູ້ຊື້ການປະກັນໄພ ໝາຍເຖິງ** ບຸກຄົນ ຫຼື ນິຕິບຸກຄົນ, ອົງການຈັດຕັ້ງທີ່ເຮັດສັນຍາປະກັນໄພ ກັບຜູ້ປະກັນໄພ ແລະ ຈ່າຍຄ່າທຳນຽມປະກັນໄພ ຄົບຖ້ວນຕາມສັນຍາ. ໃນເວລາດຽວກັນຜູ້ຊື້ການປະກັນໄພ ອາດແມ່ນຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ;

5. **ຜູ້ໄດ້ຮັບການປະກັນໄພ ໝາຍເຖິງ** ບຸກຄົນ ຫຼື ນິຕິບຸກຄົນ, ອົງການຈັດຕັ້ງທີ່ມີຄວາມສ່ຽງຕໍ່ຊັບສິນ, ຄວາມຮັບຜິດຊອບທາງແພ່ງ ຫຼື ຊີວິດທີ່ມາເຮັດປະກັນໄພ ໂດຍຖືກຕ້ອງສອດຄ່ອງກັບສັນຍາປະກັນໄພ. ໃນເວລາດຽວກັນຜູ້ໄດ້ຮັບການປະກັນໄພ ອາດແມ່ນຜູ້ໄດ້ຮັບຜົນປະໂຫຍດ;

6. **ຜູ້ໄດ້ຮັບຜົນປະໂຫຍດ ໝາຍເຖິງ** ບຸກຄົນ ຫຼື ນິຕິບຸກຄົນທີ່ຖືກເລືອກໂດຍຜູ້ຊື້ການປະກັນໄພ ເພື່ອຮັບເອົາສິນທົດແທນປະກັນໄພ ຫຼື ສິນປະກັນໄພຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

7. **ຄ່າທຳນຽມປະກັນໄພ ໝາຍເຖິງ** ຈຳນວນເງິນທີ່ຜູ້ຊື້ການປະກັນໄພ ຕ້ອງຈ່າຍໃຫ້ບໍລິສັດ ປະກັນໄພ ທີ່ໄດ້ກຳນົດໄວ້ ແລະ ດ້ວຍວິທີການທີ່ໄດ້ຕົກລົງກັນລະຫວ່າງສອງຝ່າຍ ຢູ່ໃນສັນຍາປະກັນໄພ;

8. **ການປະກັນສະສົມທຶນ ໝາຍເຖິງ** ຮູບແບບໜຶ່ງຂອງການປະກັນຊີວິດທີ່ພົວພັນເຖິງຊີວິດຂອງຜູ້ໄດ້ຮັບການປະກັນໄພ ພາຍໃນກຳນົດເວລາອັນແນ່ນອນ ພາຍໃຕ້ເງື່ອນໄຂທີ່ຜູ້ປະກັນໄພ ຕ້ອງຈ່າຍຈຳນວນເງິນທີ່ເປັນຜົນປະໂຫຍດຈົນຄົບອາຍຸສັນຍາປະກັນໄພ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ແລະ ຖ້າຫາກວ່າຜູ້ໄດ້ຮັບການປະກັນໄພຍັງມີຊີວິດຢູ່ຄົບຖ້ວນຕາມກຳນົດເວລາທີ່ໄດ້ຕົກລົງກັນໄວ້ໃນສັນຍາປະກັນໄພ;

9. **ການປະກັນໄພຄຸ້ມກັນຊີວິດ ໝາຍເຖິງ** ຮູບແບບໜຶ່ງຂອງການປະກັນຊີວິດທີ່ພົວພັນເຖິງການເສຍຊີວິດຂອງຜູ້ໄດ້ຮັບການປະກັນໄພ ໃນໄລຍະເວລາທີ່ໄດ້ກຳນົດໄວ້ພາຍໃຕ້ເງື່ອນໄຂທີ່ຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດ ຖ້າວ່າຜູ້ໄດ້ຮັບການປະກັນໄພຫາກເສຍຊີວິດໃນໄລຍະເວລາທີ່ໄດ້ຕົກລົງກັນໄວ້ໃນສັນຍາປະກັນໄພ;

10. **ການປະກັນຊີວິດແບບປະສົມ ໝາຍເຖິງ** ຮູບແບບໜຶ່ງຂອງການປະກັນຊີວິດທີ່ລວມເອົາການປະກັນສະສົມທຶນເຂົ້າກັບການປະກັນໄພຄຸ້ມກັນຊີວິດ;

11. **ການປະກັນຕະຫຼອດຊີວິດ ໝາຍເຖິງ** ການປະກັນຄວາມສ່ຽງຕະຫຼອດຊີວິດຂອງຜູ້ໄດ້ຮັບ ການປະກັນໄພເວລາເສຍຊີວິດບົນພື້ນຖານຂໍ້ຜູກພັນລະຫວ່າງຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພ ພາຍໃຕ້ເງື່ອນໄຂທີ່ຜູ້ປະກັນໄພຕ້ອງຈ່າຍສິນທົດແທນປະກັນໄພໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດໃນເວລາຜູ້ໄດ້ຮັບການປະກັນໄພເສຍຊີວິດ;

12. **ການປະກັນໄພແບບຈ່າຍເປັນງວດ ໝາຍເຖິງ** ຜະລິດຕະພັນປະກັນໄພທີ່ພົວພັນເຖິງຊີວິດຂອງຜູ້ໄດ້ຮັບການປະກັນໄພຈົນຮອດເວລາທີ່ໄດ້ກຳນົດໄວ້ ພາຍໃຕ້ເງື່ອນໄຂທີ່ຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພ ເປັນງວດໃຫ້ ແກ່ຜູ້ໄດ້ຮັບຜົນປະໂຫຍດຕາມໄລຍະເວລາທີ່ໄດ້ຕົກລົງກັນໄວ້ໃນສັນຍາປະກັນໄພ;

13. **ການຖອນເງິນຄືນຕາມສັນຍາ ໝາຍເຖິງ** ເງິນທີ່ເຫຼືອຈາກການຫັກຄ່າຄຸ້ມກັນ ແລະ ຄ່າໃຊ້ຈ່າຍຕ່າງໆໃນການດຳເນີນງານທີ່ເກີດຂຶ້ນເມື່ອຜູ້ຊື້ການປະກັນໄພຈ່າຍຄ່າທຳນຽມໃນໄລຍະໜຶ່ງ ແລະ ລົບລ້າງສັນຍາ ຊຶ່ງຜູ້ຊື້ການປະກັນໄພມີສິດຖອນຄືນຕາມທີ່ໄດ້ກຳນົດໄວ້ໃນສັນຍາ;

14. **ການປະກັນໄພອຸບັດຕິໄພ ແລະ ໄພພິບັດ ໝາຍເຖິງ** ຮູບແບບໜຶ່ງຂອງການປະກັນໄພທົ່ວໄປທີ່ມີຄວາມສ່ຽງຕໍ່ຊັບສິນ, ຄວາມຮັບຜິດຊອບທາງແພ່ງ ແລະ ຮູບແບບອື່ນ ຂອງການປະກັນໄພຍົກເວັ້ນການປະກັນຊີວິດ;

15. **ສິນປະກັນໄພ ໝາຍເຖິງ** ມູນຄ່າການທົດແທນຄວາມເສຍຫາຍຊຶ່ງຜູ້ປະກັນໄພຕ້ອງຊຳລະໃຫ້ແກ່ຜູ້ຊື້ການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດຕາມຂອບເຂດທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;

16. **ວົງເງິນປະກັນໄພ ໝາຍເຖິງ** ຈຳນວນເງິນຄຸ້ມກັນສູງສຸດທີ່ຜູ້ຊື້ການປະກັນໄພ ແລະ ຜູ້ປະກັນໄພ ໄດ້

ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 4 (ໃໝ່). ນະໂຍບາຍຂອງລັດກ່ຽວກັບວຽກງານປະກັນໄພ**

ລັດ ຊຸກຍູ້ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດລົງທຶນ ສ້າງຕັ້ງ ຫຼື ເຂົ້າຮ່ວມໃນການດໍາເນີນທຸລະກິດປະກັນໄພ ເຊັ່ນ ການສ້າງຕັ້ງບໍລິສັດ, ຕົວແທນ, ນາຍໜ້າ ແລະ ຫ້ອງການຜູ້ຕາງໜ້າປະກັນໄພດ້ວຍການກໍານົດນະໂຍບາຍພາສີ-ອາກອນ ຕາມລະບຽບກົດໝາຍ.

ລັດ ປົກປ້ອງສິດຜົນປະໂຫຍດອັນຊອບທໍາໃຫ້ແກ່ຜູ້ຊື້ການປະກັນໄພ ແລະ ຜູ້ເຂົ້າຮ່ວມໃນການດໍາເນີນທຸລະກິດປະກັນໄພຢ່າງສະເໝີພາບພາຍໃຕ້ກົດໝາຍຂອງ ສປປ ລາວ.

ລັດ ເສີມຂະຫຍາຍທ່າແຮງເພື່ອພັດທະນາຕະຫຼາດປະກັນໄພໂດຍຕອບສະໜອງການປະກັນໄພໃຫ້ມີການຄຸ້ມຄອງທາງດ້ານສຸຂະພາບ, ຊີວິດ ແລະ ຊັບສິນຂອງປະຊາຊົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ລັດ ສົ່ງເສີມ ໃຫ້ພົນລະເມືອງລາວທຸກຄົນນໍາໃຊ້ການບໍລິການປະກັນໄພປະເພດຕ່າງໆ ຕາມລະບຽບກົດໝາຍ.

**ມາດຕາ 5 (ໃໝ່). ຫຼັກການກ່ຽວກັບວຽກງານປະກັນໄພ**

**ໃນການເຄື່ອນໄຫວວຽກງານປະກັນໄພ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:**

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບຂອງລັດໃນຂອບເຂດທົ່ວປະເທດ;
2. ຮັບປະກັນສົ່ງເສີມການຜະລິດ, ທຸລະກິດ ແລະ ການລົງທຶນໃຫ້ມີການຂະຫຍາຍຕົວ;
3. ຮັບປະກັນໃຫ້ມີຄວາມຍຸຕິທໍາ, ໂປ່ງໃສ, ຖືກຕ້ອງ, ຄົບຖ້ວນ ແລະ ສາມາດກວດສອບໄດ້;
4. ອໍານວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພລວມທັງຜູ້ເຂົ້າຮ່ວມໃນການດໍາເນີນທຸລະກິດປະກັນໄພ;
5. ປະສານສົມທົບຢ່າງກົມກຽວລະຫວ່າງຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງການເຄື່ອນໄຫວທຸລະກິດປະກັນໄພໃຫ້ມີປະສິດທິຜົນສູງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 6 (ປັບປຸງ). ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດປະກັນໄພ, ຜູ້ຊື້ການປະກັນໄພ, ຜູ້ໄດ້ຮັບຜົນປະໂຫຍດ, ບຸກຄົນ, ນິຕິບຸກຄົນອື່ນ ທີ່ກ່ຽວຂ້ອງກັບການປະກັນໄພແລະນໍາໃຊ້ສໍາລັບຊັບສິນ ແລະ ຜູ້ທີ່ລະບຽບກົດໝາຍກໍານົດໃຫ້ຊື້ການປະກັນໄພແບບບັງຄັບ.

**ມາດຕາ 7 (ໃໝ່). ການຮ່ວມມືສາກົນ**

ລັດ ເປີດກວ້າງການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານປະກັນໄພ ດ້ວຍການແລກປ່ຽນບົດຮຽນທາງດ້ານເຕັກນິກ, ຂໍ້ມູນຂ່າວສານ, ວິຊາການ, ຍາດແຍ່ງການຊ່ວຍເຫຼືອ, ພັດທະນາຊັບພະຍາກອນມະນຸດ ແລະ ດ້ານອື່ນໆ, ປະຕິບັດສັນຍາ ຫຼື ສົນທິສັນຍາສາກົນກ່ຽວກັບວຽກງານປະກັນໄພ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການປະກັນໄພ

**ມາດຕາ 8 (ໃໝ່). ປະເພດການປະກັນໄພ**

**ການປະກັນໄພ ມີ ສອງ ປະເພດ ຄື:**

- ການປະກັນຊີວິດ;
- ການປະກັນໄພທົ່ວໄປ.

**ມາດຕາ 9 (ໃໝ່). ການປະກັນຊີວິດ**

ການປະກັນຊີວິດ ແມ່ນ ການປະກັນໄພທີ່ພົວພັນເຖິງການຄໍ້າປະກັນຄວາມສ່ຽງຕະຫຼອດຊີວິດ

ຂອງຜູ້ຊື້ການປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ເວລາເສຍຊີວິດ.

**ມາດຕາ 10 (ໃໝ່). ຮູບແບບການປະກັນຊີວິດ**

**ການປະກັນຊີວິດ ມີຮູບແບບ ດັ່ງນີ້:**

- ການປະກັນຕະຫຼອດຊີວິດ;
- ການປະກັນສະສົມທຶນ;
- ການປະກັນຊີວິດ ແບບປະສົມ;
- ການປະກັນ ໄພແບບຈ່າຍເປັນງວດ;

– ການປະກັນໄພຄຸ້ມກັນຊີວິດ.

ໃນກໍລະນີຈໍາເປັນຮູບແບບການປະກັນຊີວິດ ອາດຈະມີການກໍານົດເພີ່ມເຕີມ ຕາມການຕົກລົງຂອງກະຊວງການເງິນ.

**ມາດຕາ 11 (ໃໝ່). ການປະກັນໄພທົ່ວໄປ**

ການປະກັນໄພທົ່ວໄປ ແມ່ນ ການປະກັນໄພຊັບສິນ, ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ແລະ ການປະກັນໄພອື່ນ ທີ່ບໍ່ແມ່ນການປະກັນຊີວິດ.

ການປະກັນໄພທົ່ວໄປ ມີ ສອງປະເພດ ດັ່ງນີ້:

– ແບບບັງຄັບ;

– ດ້ວຍຄວາມສະໝັກໃຈ.

**ມາດຕາ 12 (ໃໝ່). ການປະກັນໄພທົ່ວໄປແບບບັງຄັບ**

ບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດທຸກຂົງເຂດ ທີ່ດໍາເນີນກິດຈະການແບບຊົ່ວຄາວ ຫຼື ຖາວອນທີ່ມີພູມລໍາເນົາ ຢູ່ ສປປ ລາວ ປະກອບມີພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ບິນທ້ອງຖະໜົນ, ໂຮງແຮມ, ເຮືອນພັກ, ສະຖານທີ່ບັນເທີງ, ພັດຕະຄານ, ຮ້ານອາຫານ, ເຈົ້າຂອງກິດຈະການຕະຫຼາດ, ສະຖານທີ່ກໍ່ສ້າງ, ສາງເກັບມ້ຽນສິນຄ້າ, ສາງທາດເຄມີ, ສາງນໍ້າມັນເຊື້ອໄຟ, ສາງທາດລະເບີດ, ໂຮງຈັກ-ໂຮງງານ, ການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານທາງບົກ, ທາງນໍ້າ ແລະ ທາງອາກາດ, ອັກຄີໄພ ແລະ ສະຖານທີ່ຜະລິດ ແລະ ເກັບມ້ຽນທາດລະເບີດ.

ລະບຽບການລະອຽດກ່ຽວກັບການປະກັນໄພທົ່ວໄປແບບບັງຄັບ ໄດ້ກໍານົດໄວ້ຕ່າງຫາກ.

**ມາດຕາ 13 (ໃໝ່). ການປະກັນໄພທົ່ວໄປດ້ວຍຄວາມສະໝັກໃຈ**

ການປະກັນໄພທົ່ວໄປດ້ວຍຄວາມສະໝັກໃຈ ແມ່ນ ການປະກັນໄພທີ່ຜູ້ຊື້ການປະກັນໄພ ມີສິດເລືອກເອົາປະເພດ, ຂອບເຂດ ຫຼື ວົງເງິນປະກັນໄພ ຂອງການຄຸ້ມກັນຕາມແບບປະກັນໄພທີ່ຜູ້ປະກັນໄພວາງອອກ.

**ມາດຕາ 14 (ໃໝ່). ຮູບແບບການປະກັນໄພທົ່ວໄປ**

**ການປະກັນໄພທົ່ວໄປ ມີຮູບແບບ ດັ່ງນີ້:**

– ການປະກັນໄພອຸປະຕິເຫດ ແລະ ການປິ່ນປົວບຸກຄົນທີ່ຖືກອຸປະຕິເຫດ;

– ການປະກັນສຸຂະພາບ;

– ການປະກັນໄພຊັບສິນ;

– ການປະກັນໄພສໍາລັບສິນຄ້າ, ເຄື່ອງຂອງຜ່ານແດນທາງລົດ, ທາງເຮືອ, ທາງລົດໄຟ ແລະ ທາງອາກາດ;

– ການປະກັນໄພເຮືອບິນ;

– ການປະກັນໄພພາຫະນະທີ່ແລ່ນດ້ວຍເຄື່ອງຈັກ;

– ການປະກັນໄພອັກຄີໄພ ແລະ ສະຖານທີ່ຜະລິດວັດຖຸລະເບີດ;

– ການປະກັນໄພຊັບສິນຂອງລັດ;

– ການປະກັນໄພຄວາມສ່ຽງດ້ານການເງິນ ແລະ ສິນເຊື່ອ;

– ການປະກັນໄພຄວາມສ່ຽງດ້ານທຸລະກິດ;

– ການປະກັນໄພດ້ານກະສິກໍາ ແລະ ປ່າໄມ້;

– ການປະກັນໄພອຸບັດຕິໄພ ແລະ ໄພພິບັດ.

ໃນກໍລະນີຈໍາເປັນຮູບແບບການປະກັນໄພທົ່ວໄປ ອາດຈະມີການກໍານົດເພີ່ມເຕີມ ຕາມການຕົກລົງຂອງກະຊວງການເງິນ.

## ພາກທີ III
## ການປະກັນໄພຕໍ່

**ມາດຕາ 15 (ໃໝ່). ການປະກັນໄພຕໍ່**

ການປະກັນໄພຕໍ່ ແມ່ນ ການປະກັນໄພທີ່ຕິດພັນກັບການແບ່ງສ່ວນຄວາມສ່ຽງຕໍ່ຮູບແບບການປະກັນໄພທົ່ວໄປທີ່ ບໍລິສັດປະກັນໄພ (ຜູ້ປະກັນໄພ) ເອົາໄປປະກັນຕໍ່ ນໍາບໍລິສັດປະກັນໄພອື່ນ ຢູ່ພາຍໃນ ຫຼື ຕ່າງປະເທດ (ເອີ້ນວ່າຜູ້ປະກັນໄພຕໍ່) ໂດຍສອດຄ່ອງກັບຫຼັກການດໍາເນີນທຸລະກິດປະກັນໄພ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ຊຶ່ງຜູ້ປະກັນໄພ ຕ້ອງຮັບຜິດຊອບໃນການຈ່າຍສິນປະກັນໄພ ຫຼື ທົດແທນຄ່າເສຍຫາຍໃນສ່ວນທີ່ນໍາໄປປະກັນໄພຕໍ່ ໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ໃນກໍລະນີທີ່ຜູ້ເອົາປະກັນໄພຕໍ່ ບໍ່ມີຄວາມສາມາດທົດແທນໄດ້.

ການປະກັນໄພຕໍ່ ຕ້ອງເໝາະສົມກັບສະພາບການດໍາເນີນທຸລະກິດຂອງຜູ້ປະກັນໄພຕໍ່ ຊຶ່ງຕ້ອງມີເງື່ອນໄຂຄົບຖ້ວນ, ໄດ້ຮັບຄວາມເຊື່ອໝັ້ນໃນຕະຫຼາດປະກັນໄພ ພາຍໃນປະເທດ, ພາກພື້ນ ແລະ ສາກົນ, ມີຄວາມ

ໝັ້ນຄົງທາງດ້ານການເງິນ ແລະ ມີປະສົບການໃນການຮັບປະກັນໄພຕໍ່.

**ມາດຕາ 16 (ໃໝ່). ວິທີການປະກັນໄພຕໍ່**

ການປະກັນໄພຕໍ່ ມີວິທີການ ດັ່ງນີ້:

1. ສາມາດດຳເນີນການປະກັນໄພຕໍ່ ກັບໜຶ່ງ ຫຼື ຫຼາຍບໍລິສັດປະກັນໄພກໍໄດ້ ໂດຍແບ່ງຄວາມສ່ຽງທີ່ໄດ້ປະກັນໄພແລ້ວ ໃຫ້ບໍລິສັດດັ່ງກ່າວນີ້ເອົາປະກັນໄພຕໍ່;

2. ສາມາດປະກັນໄພຕໍ່ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຂອງຄວາມສ່ຽງທີ່ໄດ້ປະກັນໄພແລ້ວ.

**ພາກທີ IV**
**ການດຳເນີນທຸລະກິດປະກັນໄພ**
**ໝວດທີ 1**
**ການສ້າງຕັ້ງ ແລະ ການດຳເນີນທຸລະກິດປະກັນໄພ**

**ມາດຕາ 17 (ປັບປຸງ). ການສ້າງຕັ້ງ ແລະ ການດຳເນີນທຸລະກິດປະກັນໄພ**

ຜູ້ທີ່ມີຈຸດປະສົງສ້າງຕັ້ງ ແລະ ດຳເນີນທຸລະກິດປະກັນໄພ ຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງສະເໜີຜ່ານການບໍລິການການລົງທຶນປະຕູດຽວ ຂອງຂະແໜງການແຜນການ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ມາດຕາ 18 (ປັບປຸງ). ຮູບແບບການສ້າງຕັ້ງທຸລະກິດປະກັນໄພ**

ປະເພດ, ຮູບການ, ຮູບແບບການສ້າງຕັ້ງທຸລະກິດປະກັນໄພຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍ ວິສາຫະກິດ.

**ມາດຕາ 19 (ປັບປຸງ). ຂອບເຂດການດຳເນີນທຸລະກິດປະກັນໄພ**

ການດຳເນີນທຸລະກິດປະກັນໄພ ມີຂອບເຂດ ດັ່ງນີ້:

1. ທຸລະກິດປະກັນໄພ,ທຸລະກິດປະກັນໄພຕໍ່;

2. ການບໍລິຫານຄວາມສ່ຽງ, ການປ້ອງກັນ ແລະ ການຈຳກັດຄວາມເສັຍຫາຍ;

3. ການປະເມີນຄວາມເສັຍຫາຍ;

4. ການເປັນຕົວແທນປະເມີນຄວາມເສັຍຫາຍ, ຕົວແທນພິຈາລະນາ ແລະ ແກ້ໄຂການທົດແທນຄວາມເສັຍຫາຍ ແລະ ຕົວແທນຮຽກຮ້ອງບຸກຄົນທີສາມທົດແທນຄວາມເສັຍຫາຍ;

5. ການບໍລິຫານກອງທຶນ ແລະ ການລົງທຶນ;

6. ການເຄື່ອນໄຫວອື່ນ ພາຍໃຕ້ກົດໝາຍຂອງ ສປປ ລາວ.

**ມາດຕາ 20 (ປັບປຸງ). ເງື່ອນໄຂການສ້າງຕັ້ງທຸລະກິດປະກັນໄພ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງທຸລະກິດປະກັນໄພ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີປະຫວັດການດຳເນີນທຸລະກິດທີ່ດີ;

2. ມີທຶນຈົດທະບຽນ ແລະ ເງິນຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 21 ແລະ 24 ຂອງກົດໝາຍສະບັບນີ້;

3. ມີຜູ້ບໍລິຫານ ທີ່ມີຄວາມຮູ້ຄວາມສາມາດ, ຄວາມຊຳນານທາງດ້ານວິຊາຊີບ ແລະ ມີວິຊາສະເພາະກ່ຽວກັບການປະກັນໄພ;

4. ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດດ້ານວິຊາຊີບ, ມີໃບຢັ້ງຢືນ ຫຼື ປະກາສະນີຍະບັດທາງດ້ານການປະກັນໄພ;

5. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດຕໍ່ເສດຖະກິດ ໂດຍເຈດຕະນາ;

6. ມີຫ້ອງການ, ສຳນັກງານທີ່ເໝາະສົມໃນການດຳເນີນທຸລະກິດປະກັນໄພ.

**ມາດຕາ 21 (ປັບປຸງ). ທຶນຈົດທະບຽນ ແລະ ທຶນປະກອບ**

ທຶນຈົດທະບຽນຂອງບໍລິສັດປະກັນໄພ ຕ້ອງມີຈຳນວນທຶນຕ່ຳສຸດສິບທີກຕີ້ກີບ.

ໃນໄລຍະເວລາດຳເນີນທຸລະກິດ ບໍລິສັດປະກັນໄພ ຕ້ອງຮັກສາລະດັບທຶນປະກອບຂອງແຕ່ລະຜູ້ຖືຮຸ້ນໃຫ້ຄົງທີ່ຢູ່ໃນລະດັບບໍ່ຕ່ຳກວ່າທຶນທີ່ໄດ້ກຳນົດໄວ້ໃນວັກໜຶ່ງເທິງນີ້.

ລັດຖະບານສາມາດປັບປຸງທຶນຈົດທະບຽນ ແລະ ທຶນປະກອບຕ່ຳສຸດໃນແຕ່ລະໄລຍະໄດ້ ແຕ່ບໍ່ໃຫ້ຫຼຸດຈຳນວນທີ່ໄດ້ກຳນົດໄວ້ເທິງນີ້.

**ມາດຕາ 22 (ປັບປຸງ). ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດປະກັນໄພ**

ບຸກຄົນ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດທີ່ມີເງື່ອນໄຂຄົບຖ້ວນມີສິດຍື່ນຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດປະກັນໄພຕໍ່ຂະແໜງການແຜນການ ແລະ ການລົງທຶນໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

ກໍານົດເວລາໃນການພິຈາລະນາຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດປະກັນໄພ ພ້ອມທັງການແຈ້ງຂໍ້ຕົກລົງໃຫ້ຜູ້ຮ້ອງຂໍແມ່ນພາຍໃນກໍານົດສີ່ສິບຫ້າ ວັນລັດຖະການນັບແຕ່ວັນໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

**ມາດຕາ 23 (ປັບປຸງ). ຄ່າທໍານຽມໃນການອອກອະນຸຍາດ**

ຜູ້ດໍາເນີນທຸລະກິດປະກັນໄພຕ້ອງຈ່າຍຄ່າທໍານຽມໃນການອອກອະນຸຍາດສ້າງຕັ້ງ ແລະ ດໍາ ເນີນທຸລະກິດປະກັນໄພ ຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 24 (ປັບປຸງ). ເງິນຄໍ້າປະກັນ**

ຜູ້ດໍາເນີນທຸລະກິດປະກັນໄພຕ້ອງວາງເງິນຄໍ້າປະກັນໜຶ່ງສ່ວນສາມຂອງຈໍານວນທຶນຈົດທະບຽນ ສໍາລັບແຕ່ລະປະເພດປະກັນໄພ ໄວ້ນໍາທະນາຄານໃດໜຶ່ງທີ່ມີຄວາມໝັ້ນຄົງທາງດ້ານການເງິນ ທີ່ຕັ້ງຢູ່ໃນດິນແດນຂອງ ສປປ ລາວ ແລ້ວແຈ້ງໃຫ້ກະຊວງການເງິນ.

**ມາດຕາ 25 (ປັບປຸງ). ສິດໃນການອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດປະກັນໄພ**

ກະຊວງແຜນການ ແລະ ການລົງທຶນ ມີສິດອອກໃບອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດປະກັນໄພຕາມການເຫັນດີ ແລະ ການສະເໜີຂອງກະຊວງການເງິນ.

ກະຊວງການເງິນ ເປັນຜູ້ກໍານົດລະບຽບການ ແລະ ຂັ້ນຕອນໃນການອອກໃບອະນຸຍາດດໍາເນີນທຸລະກິດປະກັນໄພ.

**ມາດຕາ 26 (ປັບປຸງ). ການຖອນໃບອະນຸຍາດດໍາເນີນທຸລະກິດປະກັນໄພ**

**ໃບອະນຸຍາດດໍາເນີນທຸລະກິດປະກັນໄພຈະຖືກຖອນຄືນຕາມແຕ່ລະກໍລະນີ ເມື່ອຜູ້ປະກັນໄພບໍ່ປະຕິບັດຕາມເງື່ອນໄຂ ຫຼື ລະເມີດຂໍ້ຫ້າມຕ່າງໆ ດັ່ງນີ້:**

1. ບໍ່ສາມາດປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້;

2. ບໍ່ສາມາດປະຕິບັດມາດຕະການຕ່າງໆ ທີ່ໄດ້ກໍານົດໄວ້ໃນແຜນປັບປຸງປະສິດທິຜົນຂອງບໍລິສັດໄດ້ຕາມກໍານົດເວລາ;

3. ລະເມີດລະບຽບການຢ່າງຮ້າຍແຮງ ກ່ຽວກັບການປະຕິບັດພັນທະຕ່າງໆ ທີ່ຍັງມີຜົນສັກສິດຢູ່;

4. ບໍ່ໄດ້ເຄື່ອນໄຫວດໍາເນີນທຸລະກິດປະກັນໄພ ພາຍຫຼັງໄດ້ຮັບໃບອະນຸຍາດສ້າງຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 25 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

ໃນກໍລະນີມີການຖອນໃບອະນຸຍາດຂອງບໍລິສັດປະກັນໄພແລ້ວໃບອະນຸຍາດທີ່ໄດ້ອອກໃຫ້ສາຂາບໍລິສັດ ດັ່ງກ່າວທີ່ຕັ້ງຢູ່ ສປປ ລາວ ນັ້ນກໍຈະຖືກຖອນເຊັ່ນດຽວກັນ.

ເມື່ອມີການຖອນໃບອະນຸຍາດ ຫຼື ໂຈະການເຄື່ອນໄຫວທຸລະກິດປະກັນໄພນັ້ນຕ້ອງໄດ້ແຈ້ງກ່ຽວກັບເຫດຜົນຂອງການຖອນ ຫຼື ໂຈະການເຄື່ອນໄຫວທຸລະກິດປະກັນໄພເປັນລາຍລັກອັກສອນໃຫ້ບໍລິສັດດັ່ງກ່າວນັ້ນຊາບ.

**ມາດຕາ 27 (ປັບປຸງ). ການສະເໜີໃຫ້ພິຈາລະນາຄືນຂໍ້ຕົກລົງຖອນໃບອະນຸຍາດ**

ຜູ້ປະກັນໄພ ມີສິດສະເໜີຕໍ່ກະຊວງການເງິນ ເພື່ອໃຫ້ພິຈາລະນາຄືນຂໍ້ຕົກລົງຖອນໃບອະນຸຍາດ ພາຍໃນສິບຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບຊາບຂໍ້ຕົກລົງດັ່ງກ່າວເປັນຕົ້ນໄປໂດຍອ້າງເຫດຜົນທີ່ໜັກແໜ້ນ. ໃນກໍລະນີທີ່ກະຊວງການເງິນ ຫາກບໍ່ໄດ້ພິຈາລະນາພາຍໃນກໍານົດ ສາມສິບວັນ ລັດຖະການນັບແຕ່ວັນໄດ້ຮັບຄໍາສະເໜີໃຫ້ພິຈາລະນາຄືນເປັນຕົ້ນໄປຜູ້ປະກັນໄພກໍມີສິດສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ. ລັດຖະບານ ກໍຈະພິຈາລະນາຄໍາສະເໜີນັ້ນຢ່າງຊ້າບໍ່ໃຫ້ເກີນ ຫົກສິບ ວັນ ລັດຖະການນັບແຕ່ວັນໄດ້ຮັບຄໍາສະເໜີດັ່ງກ່າວເປັນຕົ້ນໄປ. ຖ້າຜູ້ປະກັນໄພ ຫາກບໍ່ພໍໃຈຕໍ່ຄໍາຕົກລົງຂອງລັດຖະບານ ກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຕາມລະບຽບກົດໝາຍ.

## ໝວດທີ 2
## ບໍລິສັດປະກັນໄພ ແລະ ນາຍໜ້າປະກັນໄພ ຮ່ວມທຶນກັບຕ່າງປະເທດ

**ມາດຕາ 28 (ປັບປຸງ). ຮູບແບບ ຫຼື ປະ**

**ເພດການລົງທຶນ**

ບໍລິສັດປະກັນໄພ ແລະ ນາຍໜ້າປະກັນໄພ ທີ່ມີຈຸດປະສົງດຳເນີນທຸລະກິດປະກັນໄພຮ່ວມທຶນກັບຕ່າງປະເທດ ສາມາດດຳເນີນໃນຮູບແບບ ຫຼື ປະເພດການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍ ວິສາຫະກິດ.

**ມາດຕາ 29 (ປັບປຸງ). ຄຳຮ້ອງຂໍອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດປະກັນໄພຂອງຕ່າງປະເທດ**

ບໍລິສັດປະກັນໄພ ແລະ ນາຍໜ້າປະກັນໄພຂອງຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງ ແລະ ດຳເນີນທຸລະກິດປະກັນໄພຢູ່ ສປປ ລາວ ຕ້ອງປະກອບເອກະສານຍື່ນຜ່ານການບໍລິການການລົງທຶນປະຕູດຽວ ເພື່ອຂໍອະນຸຍາດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 30 (ປັບປຸງ). ເງື່ອນໄຂການສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງຕ່າງປະເທດ**

**ການສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງບໍລິສັດປະກັນໄພຕ່າງປະເທດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:**

1. ມີປະສົບການ ໃນການດຳເນີນທຸລະກິດປະກັນໄພມາກ່ອນຢ່າງໜ້ອຍຫ້າປີ;
2. ມີການພົວພັນກັບອົງການຈັດຕັ້ງຂອງລັດຖະບານແຫ່ງ ສປປ ລາວ.

ນອກຈາກນີ້ ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ໃຫ້ປະຕິບັດຕາມ ມາດຕາ 47 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 31 (ປັບປຸງ). ສິດໃນການອອກໃບອະນຸຍາດ**

ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອອກໃບອະນຸຍາດສ້າງຕັ້ງ ຫ້ອງການຜູ້ຕາງໜ້າປະກັນໄພຕ່າງປະເທດ ບົນພື້ນຖານການຕົກລົງເຫັນດີທາງດ້ານວິຊາການຈາກກະຊວງການເງິນ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 32 (ປັບປຸງ). ຄຳຮ້ອງຂໍອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດປະກັນໄພ ແລະ ນາຍໜ້າປະໄພ ຮ່ວມທຶນກັບຕ່າງປະເທດ**

ນອກຈາກບັນດາລາຍການທີ່ໄດ້ກຳນົດໄວ້ໃນມາດຕາ 20, 21, 22, 23 ແລະ 24 ຂອງກົດໝາຍສະບັບນີ້ ການຂໍອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດຂອງບໍລິສັດປະກັນໄພ ຫຼື ນາຍໜ້າປະກັນໄພ ຮ່ວມທຶນກັບຕ່າງປະເທດຕ້ອງປະກອບດ້ວຍເອກະສານ ດັ່ງນີ້:

1. ກົດລະບຽບຂອງບໍລິສັດ ແລະ ໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດປະກັນໄພ ຂອງຜູ້ເຂົ້າຮ່ວມ;
2. ສັນຍາຮ່ວມທຶນສ້າງຕັ້ງບໍລິສັດ ( ຖ້າຫາກແມ່ນການຮ່ວມມື );
3. ໃບສະຫຼຸບຊັບສິນບັດ ແລະ ບົດລາຍງານການເງິນປະຈຳປີໃນໄລຍະສາມປີຜ່ານມາຂອງຜູ້ເຂົ້າຮ່ວມສ້າງຕັ້ງບໍລິສັດທີ່ຖືກຮັບຮອງ ໂດຍຜູ້ກວດສອບບັນຊີເອກະລາດ;
4. ໃບແຕ່ງຕັ້ງຜູ້ອຳນວຍການໃຫຍ່ ຢູ່ ສປປ ລາວ;
5. ຊື່ເຕັມ ແລະ ຊີວະປະຫວັດຂອງຜູ້ສະເໜີຂໍສ້າງຕັ້ງ, ຜູ້ຮ່ວມທຶນ ແລະ ຜູ້ອຳນວຍການວິສາຫະກິດທີ່ສະເໜີສ້າງຕັ້ງ;
6. ແຜນດຳເນີນທຸລະກິດປະກັນໄພ ໃນໄລຍະຫ້າປີທຳອິດ;

**ມາດຕາ 33 (ໃໝ່). ຄຳຮ້ອງຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ**

**ການຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງບໍລິສັດປະກັນໄພຕ່າງປະເທດໃນ ສປປ ລາວ ຕ້ອງປະກອບດ້ວຍເອກະສານ ດັ່ງນີ້:**

1. ຄຳຮ້ອງຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ;
2. ສຳເນົາໃບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດຂອງບໍລິສັດປະກັນໄພຕ່າງປະເທດບ່ອນທີ່ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່;
3. ໃບສະຫຼຸບຊັບສິນບັດ ແລະ ບົດລາຍງານການເງິນປະຈຳປີ ໃນໄລຍະສາມປີຜ່ານມາຂອງ ບໍລິສັດປະກັນໄພຕ່າງປະເທດ ຫຼື ນາຍໜ້າປະກັນໄພຕ່າງປະເທດ ຊຶ່ງຖືກຮັບຮອງໂດຍຜູ້ກວດສອບບັນຊີເອກະລາດ;
4. ໃບແຕ່ງຕັ້ງຫົວໜ້າຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ;
5. ຊື່ເຕັມ ແລະ ຊີວະປະຫວັດຂອງຫົວໜ້າຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ;
6. ບົດແນະນຳຂອງຜູ້ປະກັນ

ໄພຕ່າງປະເທດ ຫຼື ນາຍໜ້າປະກັນໄພຕ່າງປະເທດ ແລະ ການເຄື່ອນໄຫວທຸລະກິດກັບສະມາຄົມ ແລະ ອົງການຈັດຕັ້ງອື່ນຂອງ ສປປ ລາວ.

**ມາດຕາ 34 (ໃໝ່). ກຳນົດເວລາ ແລະ ຄ່າທຳນຽມໃນການອອກໃບອະນຸຍາດ ແລະ ການແຈ້ງຂອບເຂດການດຳເນີນທຸລະກິດ**

ກຳນົດເວລາ ແລະ ຄ່າທຳນຽມໃນການອອກໃບອະນຸຍາດ ແລະ ການແຈ້ງຂອບເຂດການດຳເນີນທຸລະກິດທີ່ກ່ຽວຂ້ອງກັບຜູ້ປະກັນໄພແລະນາຍໜ້າປະກັນໄພ ທີ່ຮ່ວມທຶນກັບຕ່າງປະເທດ ແລະ ຫ້ອງການຜູ້ຕາງໜ້າຂອງຜູ້ປະກັນໄພຕ່າງປະເທດ ຕ້ອງໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ແລະ 23 ຂອງກົດໝາຍສະບັບນີ້.

**ມາດຕາ 35 (ປັບປຸງ). ຂອບເຂດການດຳເນີນທຸລະກິດ**

ຂອບເຂດການດຳເນີນທຸລະກິດຂອງຜູ້ປະກັນໄພ ແລະ ນາຍໜ້າປະກັນໄພທີ່ຮ່ວມທຶນກັບຕ່າງປະເທດ ຕ້ອງສອດຄ່ອງກັບບົດບັນຍັດ ຂອງ ມາດຕາ 19 ຂອງກົດໝາຍສະບັບນີ້.

ສຳລັບຫ້ອງການຜູ້ຕາງໜ້າຂອງຜູ້ປະກັນໄພຕ່າງປະເທດນັ້ນ ໃຫ້ປະຕິບັດຕາມມາດຕາ 47 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ມາດຕາ 36 (ປັບປຸງ). ການຖອນໃບອະນຸຍາດ**

ຜູ້ປະກັນໄພ ຫຼື ນາຍໜ້າປະກັນໄພຂອງຕ່າງປະເທດທີ່ຕັ້ງ ຢູ່ ສປປ ລາວ ຕ້ອງຖືກຖອນໃບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ, ຖ້າວ່າໃບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດນັ້ນ ຫາກຖືກຖອນຢູ່ບ່ອນທີ່ສຳນັກງານໃຫຍ່ຂອງວິສາຫະກິດຕ່າງປະເທດຕັ້ງຢູ່.

ຫ້ອງການຜູ້ຕາງໜ້າຂອງຜູ້ປະກັນໄພຕ່າງປະເທດ ຕ້ອງຖືກຖອນໃບອະນຸຍາດສ້າງຕັ້ງຖ້າວ່າໃບອະນຸຍາດດັ່ງກ່າວ ຫາກຖືກຖອນຢູ່ບ່ອນທີ່ສຳນັກງານໃຫຍ່ຂອງວິສາຫະກິດຕ່າງປະເທດຕັ້ງຢູ່.

ນອກຈາກນີ້ ໃບອະນຸຍາດດັ່ງກ່າວ ກໍຈະຖືກຖອນ ເມື່ອຜູ້ປະກັນໄພ ຫຼື ນາຍໜ້າປະກັນໄພ ຫຼື ຫ້ອງການຜູ້ຕາງໜ້າຂອງຕ່າງປະເທດນັ້ນ ໄດ້ລະເມີດລະບຽບກົດໝາຍຂອງ ສປປ ລາວ.

## ພາກທີ V
## ສັນຍາປະກັນໄພ
### ໝວດທີ 1
### ຫລັກການກ່ຽວກັບສັນຍາປະກັນໄພ

**ມາດຕາ 37 (ປັບປຸງ). ສັນຍາປະກັນໄພ**

ສັນຍາປະກັນໄພ ແມ່ນ ການຕົກລົງລະຫວ່າງຜູ້ຊື້ການປະກັນໄພກັບຜູ້ປະກັນໄພ ຊຶ່ງຜູ້ຊື້ການປະກັນໄພຕ້ອງຈ່າຍຄ່າທຳນຽມປະກັນໄພ ແລະ ຜູ້ປະກັນໄພຕ້ອງຈ່າຍສິນທົດແທນປະກັນໄພ ຫຼື ທົດແທນຄ່າເສຍຫາຍໃຫ້ຜູ້ຊື້ການປະກັນໄພ ຫຼື ບຸກຄົນທີ່ໄດ້ຮັບການປະກັນໄພໃນກໍລະນີເກີດຄວາມເສຍຫາຍ. ສັນຍາປະກັນໄພແຕ່ລະປະເພດ ທີ່ມີເປົ້າໝາຍການປະກັນໄພ ຢູ່ ສປປ ລາວ ຕ້ອງເຮັດຂຶ້ນກັບຜູ້ປະກັນໄພທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດຢູ່ ສປປ ລາວ ເທົ່ານັ້ນ.

**ປະເພດສັນຍາປະກັນໄພ ມີ ດັ່ງນີ້:**

1. ສັນຍາປະກັນໄພສ່ວນບຸກຄົນ;
2. ສັນຍາປະກັນໄພຊັບສິນ;
3. ສັນຍາປະກັນໄພຄວາມຮັບຜິດຊອບທາງແພ່ງ.

**ມາດຕາ 38 (ເກົ່າ). ເນື້ອໃນຕົ້ນຕໍຂອງສັນຍາປະກັນໄພ**

**ສັນຍາປະກັນໄພ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:**

1. ຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຄູ່ສັນຍາ;
2. ຕົວບຸກຄົນ ຫຼື ຊັບສົມບັດ ທີ່ເອົາມາປະກັນໄພ;
3. ປະເພດຄວາມສ່ຽງທີ່ເອົາມາປະກັນໄພ;
4. ເວລາເລີ່ມຕົ້ນການປະກັນໄພຄວາມສ່ຽງ;
5. ວົງເງິນປະກັນໄພ;
6. ຄ່າທຳນຽມປະກັນໄພ ແລະ ວິທີການຈ່າຍ;
7. ວິທີການ ແລະ ເງື່ອນໄຂໃນການແຈ້ງກ່ຽວກັບ ຄວາມເສຍຫາຍທີ່ໄດ້ເກີດຂຶ້ນ;
8. ກຳນົດເວລາຂອງສັນຍາປະກັນໄພ ແລະ ການຄ້ຳປະກັນ;
9. ຂໍ້ຄວາມທີ່ບົ່ງບອກເຖິງການເປັນໂມຄະຂອງສັນຍາປະກັນໄພ, ການເສຍສິດ ແລະ ການຍຸດເຊົາສັນຍາປະກັນໄພກ່ອນກຳນົດເວລາ;

10. ວິທີການແກ້ໄຂຂໍ້ຂັດແຍ່ງ.

**ມາດຕາ 39 (ປັບປຸງ). ຄວາມສັກສິດຂອງສັນຍາປະກັນໄພ**

ສັນຍາປະກັນໄພ ຈະມີຄວາມສັກສິດໄດ້ກໍຕໍ່ເມື່ອຜູ້ປະກັນໄພໄດ້ຮັບໜັງສືສະເໜີຈາກຜູ້ໄດ້ຮັບການປະກັນໄພ ຊຶ່ງປະກອບດ້ວຍ ໜັງສືສະເໜີເອົາການປະກັນໄພ, ໃບຢັ້ງຢືນສຸຂະພາບ, ການແຈ້ງການເພີ່ມເຕີມອື່ນໆ ທີ່ຜູ້ໄດ້ຮັບການປະກັນໄພລົງລາຍເຊັນໄວ້ ແລະ ໄດ້ມີການຈ່າຍຄ່າທຳນຽມງວດທຳອິດ ຊຶ່ງເຮັດໃຫ້ຜູ້ປະກັນໄພຕົກລົງເຮັດສັນຍາ ແລະ ອອກສັນຍາໃຫ້. ໜັງສືສະເໜີປະກັນໄພຍັງບໍ່ທັນແມ່ນການຜູກມັດລະຫວ່າງຜູ້ໄດ້ຮັບການປະກັນໄພ ແລະ ຜູ້ປະກັນໄພ. ມີແຕ່ໃບປະກັນໄພ ຫຼື ບັນທຶກການຄຸ້ມກັນເທົ່ານັ້ນ ຈຶ່ງເຮັດໃຫ້ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ປະກັນໄພມີຂໍ້ຜູກພັນຕໍ່ກັນ.

**ມາດຕາ 40 (ປັບປຸງ). ໃບປະກັນໄພ**

ໃບປະກັນໄພ ແມ່ນ ເອກະສານສັນຍາທີ່ກຳນົດເງື່ອນໄຂທົ່ວໄປ. ສັນຍາປະກັນໄພ ຈະມີຜົນບັງຄັບໃຊ້ໄດ້ກໍຕໍ່ເມື່ອຫາກໄດ້ມີການຕົກລົງຮັບເອົາບັນດາເງື່ອນໄຂທົ່ວໄປຂອງຄູ່ສັນຍາ ໂດຍມີໃບປະກັນໄພເປັນຫລັກຖານຢັ້ງຢືນ ແລະ ອອກໃຫ້ໂດຍບໍລິສັດປະກັນໄພ ພາຍຫຼັງທີ່ຜູ້ຊື້ການປະກັນໄພໄດ້ຈ່າຍຄ່າທຳນຽມປະກັນໄພແລ້ວ.

ໃບປະກັນໄພ ຕ້ອງເຮັດເປັນລາຍລັກອັກສອນທີ່ອ່ານໄດ້ງ່າຍ ແລະ ເປັນພາສາລາວ, ໃນກໍລະນີທີ່ຈຳເປັນອາດຈະເຮັດເປັນພາສາຕ່າງປະເທດຕື່ມອີກກໍໄດ້. ເມື່ອຕ້ອງການເພີ່ມເຕີມ ຫຼື ປ່ຽນແປງຂໍ້ຄວາມໃນໃບປະກັນໄພນັ້ນ ຄູ່ສັນຍາຕ້ອງເຮັດເປັນສັນຍາເພີ່ມເຕີມອີກ.

**ມາດຕາ 41 (ປັບປຸງ). ກຳນົດເວລາຂອງສັນຍາປະກັນໄພ**

ສັນຍາປະກັນໄພທຸກປະເພດຕ້ອງມີກຳນົດເວລາທີ່ແນ່ນອນ ຕາມການຕົກລົງຂອງຄູ່ສັນຍາ ແລະ ສາມາດຕໍ່ໄດ້ບົນພື້ນຖານການຕົກລົງຂອງຄູ່ສັນຍາ.

**ມາດຕາ 42 (ໃໝ່). ການດັດແກ້ສັນຍາປະກັນໄພ**

ສັນຍາປະກັນໄພ ຈະດັດແກ້ໄດ້ກໍຕໍ່ເມື່ອໄດ້ຮັບການຕົກລົງເຫັນດີລະຫວ່າງຄູ່ສັນຍາ.

ການດັດແກ້ນັ້ນຈະມີຜົນບັງຄັບໃຊ້ກໍຕໍ່ເມື່ອຜູ້ປະກັນໄພໄດ້ບັນທຶກການດັດແກ້ເຂົ້າໃນສັນຍາ ຫຼື ອອກເອກະສານຄັດຕິດໃຫ້ແລ້ວເທົ່ານັ້ນ.

**ມາດຕາ 43 (ປັບປຸງ). ການສິ້ນສຸດສັນຍາປະກັນໄພ**

**ສັນຍາປະກັນໄພຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ສັນຍາປະກັນໄພໝົດອາຍຸໂດຍບໍ່ມີການຕໍ່ກຳນົດເວລາ;
2. ຄູ່ສັນຍາຝ່າຍໃດໜຶ່ງໄດ້ລະເມີດສັນຍາປະກັນໄພ ຫຼື ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ຕົກລົງກັນ;
3. ຊັບສິນທີ່ເອົາໄປປະກັນໄພນັ້ນ ຖືກສູນຫາຍ ຫຼື ຖືກທຳລາຍ;
4. ຄູ່ສັນຍາ ຕົກລົງຍົກເລີກສັນຍາປະກັນໄພດ້ວຍຄວາມສະໝັກໃຈ;
5. ຜູ້ຊື້ການປະກັນໄພ ມີການຕົວະລ່າຍ, ປິດບັງເຊື່ອງອຳເປົ້າໝາຍປະກັນໄພ ໂດຍເຈດຕະນາ;
6. ສານຕັດສິນ ໃຫ້ສັນຍາປະກັນໄພເປັນໂມຄະ ຫຼື ໃຫ້ບໍລິສັດປະກັນໄພລົ້ມລະລາຍ.

**ມາດຕາ 44 (ໃໝ່). ການສະໜອງຂໍ້ມູນ**

ຜູ້ປະກັນໄພ ມີຄວາມຮັບຜິດຊອບສະໜອງຂໍ້ມູນຄົບຖ້ວນທີ່ພົວພັນເຖິງສັນຍາປະກັນໄພ, ອະທິບາຍບັນດາເງື່ອນໄຂ, ເນື້ອໃນຂອງສັນຍາປະກັນໄພໃຫ້ຜູ້ຊື້ການປະກັນໄພ, ສ່ວນຜູ້ຊື້ການປະກັນໄພ ກໍຮັບຜິດຊອບສະໜອງຂໍ້ມູນຄົບຖ້ວນທີ່ພົວພັນເຖິງການປະກັນໄພ,ໃຫ້ຄວາມຈະແຈ້ງ,ລະອຽດຄົບຖ້ວນຂອງຂໍ້ມູນນັ້ນ, ຜູ້ປະກັນໄພຮັກສາຄວາມລັບກ່ຽວກັບຂໍ້ມູນທີ່ຜູ້ຊື້ການປະກັນໄພໄດ້ສະໜອງໃຫ້.

**ຜູ້ປະກັນໄພ ມີສິດໂຈະ ຫຼື ຍົກເລີກການປະຕິບັດສັນຍາປະກັນໄພ ແລະ ເກັບຄ່າທຳນຽມປະກັນໄພ ຖ້າຫາກຜູ້ຊື້ການປະກັນໄພມີພຶດຕິກຳໃດໜຶ່ງ ດັ່ງນີ້:**

1. ເຈດຕະນາສະໜອງຂໍ້ມູນທີ່ບໍ່ຖືກຕາມຄວາມຈິງ ເພື່ອຫວັງໄດ້ສັນຍາປະກັນໄພ ແລະ ຮັບເງິນປະກັນໄພ ຫຼື ໄດ້ຮັບສິນປະກັນໄພ;
2. ບໍ່ສະໜອງຂໍ້ມູນໃຫ້ຜູ້ປະກັນໄພຕາມການກຳນົດໃນ ມາດຕາ 38 ແລະ 39 ຂອງກົດໝາຍສະບັບນີ້.

ໃນກໍລະນີຜູ້ປະກັນໄພມີເຈດຕະນາສະໜອງຂໍ້ມູນທີ່ບໍ່ຖືກຕາມ

ຄວາມຈິງແລ້ວ ຜູ້ຊື້ການປະກັນໄພມີສິດໂຈະ ຫຼື ຍົກເລີກການປະຕິບັດສັນຍາປະກັນໄພທີ່ໄດ້ຮັບ, ແຕ່ຜູ້ປະກັນໄພ ຕ້ອງທົດແທນຄວາມເສຍຫາຍທີ່ເກີດຂຶ້ນຈາກການສະໜອງຂໍ້ມູນຂອງຕົນທີ່ບໍ່ຖືກຕ້ອງ.

**ມາດຕາ 45 (ໃໝ່). ການປ່ຽນແປງລະດັບຄວາມສ່ຽງ**

ຖ້າຫາກມີການປ່ຽນແປງໃນບັນດາປັດໄຈຄວາມສ່ຽງ ຊຶ່ງເຮັດໃຫ້ພື້ນຖານການຄິດໄລ່ຄ່າທຳນຽມປະກັນໄພຫຼຸດລົງ, ຜູ້ຊື້ການປະກັນໄພມີສິດຮຽກຮ້ອງໃຫ້ຜູ້ປະກັນໄພຫຼຸດຄ່າທຳນຽມປະກັນໄພ ສຳລັບໄລຍະເວລາຂອງສັນຍາປະກັນໄພທີ່ຍັງເຫຼືອ. ຖ້າຜູ້ປະກັນໄພ ຫາກບໍ່ຍອມຫຼຸດຄ່າທຳນຽມປະກັນໄພ ຜູ້ຊື້ການປະກັນໄພມີສິດຍົກເລີກສັນຍາປະກັນໄພແຕ່ພຽງຝ່າຍດຽວ ແຕ່ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ປະກັນໄພຊາບໃນທັນທີ ພ້ອມທັງສຳເນົາໜັງສືແຈ້ງໃຫ້ກະຊວງການເງິນ.

ຖ້າຫາກມີການປ່ຽນແປງໃນບັນດາປັດໄຈຄວາມສ່ຽງ ຊຶ່ງເຮັດໃຫ້ພື້ນຖານການຄິດໄລ່ຄ່າທຳນຽມປະກັນໄພເພີ່ມຂຶ້ນ, ຜູ້ປະກັນໄພມີສິດຄິດໄລ່ຄ່າທຳນຽມປະກັນໄພຄືນໃໝ່ ສຳລັບໄລຍະເວລາຂອງສັນຍາປະກັນໄພທີ່ຍັງເຫຼືອ.ໃນກໍລະນີຜູ້ຊື້ການປະກັນໄພຫາກບໍ່ຍອມຈ່າຍຄ່າທຳນຽມ ປະກັນໄພເພີ່ມ ຜູ້ປະກັນໄພມີສິດຍົກເລີກສັນຍາປະກັນໄພແຕ່ພຽງຝ່າຍດຽວ ແຕ່ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຊື້ການປະກັນໄພຊາບໃນ ທັນທີພ້ອມທັງສຳເນົາໜັງສືແຈ້ງໃຫ້ ກະຊວງການເງິນ.

**ມາດຕາ 46 (ປັບປຸງ). ກຳນົດເວລາການຮຽກຮ້ອງສິນປະກັນໄພ ຫຼື ການທົດແທນຄ່າເສຍຫາຍ**

ການຮຽກຮ້ອງສິນປະກັນໄພ ຫຼື ການທົດແທນຄ່າເສຍຫາຍໃຫ້ປະຕິບັດດັ່ງນີ້:

1. ໃຫ້ປະຕິບັດພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນເຫດການປະກັນໄພໄດ້ເກີດຂຶ້ນ, ສ່ວນເຫດສຸດວິໄສ ຫຼື ເຫດບັງເອີນນັ້ນ ບໍ່ໃຫ້ຄິດໄລ່ເຂົ້າໃນກຳນົດເວລາການຈ່າຍສິນປະກັນໄພ ຫຼື ການທົດແທນຄ່າເສຍຫາຍ;

2. ໃນກໍລະນີຜູ້ຊື້ການປະກັນໄພ ຫາກບໍ່ຮູ້ວັນເກີດເຫດການຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້ ກຳນົດເວລາດັ່ງກ່າວ ໃຫ້ຄິດໄລ່ນັບແຕ່ວັນຜູ້ຊື້ການປະກັນໄພໄດ້ຮູ້ ເປັນຕົ້ນໄປ;

3. ໃນກໍລະນີບຸກຄົນທີສາມ ຫາກຮຽກຮ້ອງໃຫ້ຜູ້ຊື້ການປະກັນໄພໃຊ້ແທນຄ່າເສຍຫາຍທີ່ຖືກຄຸ້ມກັນຕາມສັນຍາປະກັນໄພ, ກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້ ໃຫ້ຄິດໄລ່ນັບແຕ່ວັນທີ່ບຸກຄົນທີສາມໄດ້ຮຽກຮ້ອງ.

ກະຊວງການເງິນເປັນຜູ້ອອກລະບຽບ ກ່ຽວກັບການບໍລິຫານຄຸ້ມຄອງກອງທຶນປະກັນໄພ ເພື່ອຈ່າຍລ່ວງໜ້າໃຫ້ແກ່ຜູ້ຊື້ການປະກັນໄພ ໃນກໍລະນີເກີດອຸປະຕິເຫດ.

**ມາດຕາ 47 (ປັບປຸງ). ການຈ່າຍສິນປະກັນໄພ ຫຼື ການທົດແທນຄ່າເສຍຫາຍ**

ຖ້າຫາກເຫດການເກີດຂຶ້ນ, ຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພ ຫຼື ທົດແທນຄ່າເສຍຫາຍ ຕາມໄລຍະເວລາທີ່ໄດ້ຕົກລົງກັນໃນສັນຍາປະກັນໄພ. ໃນກໍລະນີທີ່ບໍ່ໄດ້ຕົກລົງກັນ ກ່ຽວກັບໄລຍະເວລາຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພ ຫຼື ທົດແທນຄ່າເສຍຫາຍພາຍໃນ ສາມສິບ ວັນ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ຖືກຕ້ອງກ່ຽວກັບການຮຽກຮ້ອງເອົາສິນ ປະກັນໄພ ຫຼື ການທົດແທນຄ່າເສຍຫາຍ.

**ມາດຕາ 48 (ປັບປຸງ). ອາຍຸຄວາມໃນການຮ້ອງຟ້ອງ**

ການຮ້ອງຟ້ອງ ທີ່ເນື່ອງມາຈາກສັນຍາປະກັນໄພ ໃຫ້ດຳເນີນພາຍໃນກຳນົດ ສາມ ປີ ນັບແຕ່ວັນທີ່ຂໍ້ຂັດແຍ່ງເກີດຂຶ້ນເປັນຕົ້ນໄປ. ອາຍຸຄວາມຈະຖືກໂຈະຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນ ໃນສັນຍາ ແລະ ນອກສັນຍາ ຖ້າຫາກມີເຫດຜົນພຽງພໍ ແລະ ໄດ້ມີການແຕ່ງຕັ້ງຜູ້ຊ່ຽວຊານພິສູດຄວາມຈິງພາຍ ຫຼັງທີ່ຄວາມເສຍຫາຍໄດ້ເກີດຂຶ້ນ.

**ມາດຕາ 49 (ໃໝ່). ການໂອນສັນຍາປະກັນໄພ**

ສັນຍາປະກັນໄພ ທີ່ມີໜຶ່ງ ຫຼື ຫຼາຍຮູບແບບປະກັນໄພ ສາມາດໂອນໃຫ້ກັນໄດ້ ລະຫວ່າງຜູ້ປະກັນໄພດ້ວຍກັນບົນພື້ນຖານການຕົກລົງຂອງຜູ້ປະກັນໄພດັ່ງກ່າວ.

ການໂອນສັນຍາປະກັນໄພຕ້ອງແຈ້ງໃຫ້ກະຊວງການເງິນຊາບ.

**ມາດຕາ 50 (ໃໝ່). ເງື່ອນໄຂການໂອນສັນຍາປະກັນໄພ**

ການໂອນສັນຍາປະກັນໄພ ຕ້ອງປະຕິບັດ ດັ່ງນີ້:

1. ສັນຍາປະກັນໄພທີ່ໂອນໃຫ້ກັນ ຕ້ອງເປັນຮູບແບບການປະກັນໄພຊະນິດດຽວກັນ;

2. ສິດ ແລະ ພັນທະທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພບໍ່ ໃຫ້ມີການປ່ຽນແປງຕະຫຼອດໄລຍະສັນຍາປະກັນໄພ;

3. ຜູ້ປະກັນໄພທີ່ຮັບການໂອນສັນຍາປະກັນໄພ ຕ້ອງມີຄວາມໝັ້ນຄົງທາງດ້ານການເງິນ ແລະ ມີຄັງສໍາຮອງຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51 (ໃໝ່). ຂັ້ນຕອນການໂອນສັນຍາປະກັນໄພ**

ການໂອນສັນຍາປະກັນໄພ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເຫດຜົນ, ແຜນການໂອນພ້ອມດ້ວຍສໍາເນົາສັນຍາປະກັນໄພ ຕ້ອງສະເໜີ ຕໍ່ກະຊວງການເງິນ;

2. ການໂອນສັນຍາປະກັນໄພ ຈະຖືກປະຕິບັດ ໄດ້ກໍຕໍ່ ເມື່ອມີການແຈ້ງການເປັນລາຍລັກອັກສອນຂອງກະຊວງການເງິນ;

3. ຜູ້ປະກັນໄພ ຕ້ອງເປີດເຜີຍກ່ຽວກັບການໂອນ ແລະ ແຈ້ງໃຫ້ຜູ້ຊື້ການປະກັນໄພຮັບຮູ້ເປັນລາຍລັກອັກສອນ ພາຍໃນ ສາມສິບ ວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງການດັ່ງກ່າວ ເປັນຕົ້ນໄປ.

## ໝວດທີ 2
## ສັນຍາປະກັນໄພສ່ວນບຸກຄົນ

**ມາດຕາ 52 (ປັບປຸງ). ສັນຍາປະກັນໄພສ່ວນບຸກຄົນ**

ສັນຍາປະກັນໄພສ່ວນບຸກຄົນ ແມ່ນ ສັນຍາປະກັນຄວາມສ່ຽງຕໍ່ຊີວິດ, ສຸຂະພາບ ແລະ ອຸປະຕິເຫດດ້ານຮ່າງກາຍ.

**ຜູ້ຊື້ການປະກັນໄພ ສາມາດຊື້ການປະກັນໄພໃຫ້ບັນດາບຸກຄົນ ດັ່ງນີ້:**

1. ຕົນເອງ;

2. ຜົວ, ເມຍ, ລູກ, ພໍ່ແມ່, ອ້າຍເອື້ອຍນ້ອງ ຂອງຕົນ;

3. ບຸກຄົນອື່ນ ຖ້າຫາກຜູ້ຊື້ການປະກັນໄພມີສ່ວນໄດ້ສ່ວນເສຍນໍາບຸກຄົນດັ່ງກ່າວ.

**ມາດຕາ 53 (ໃໝ່). ສັນຍາປະກັນຊີວິດ, ສຸຂະພາບ ແລະ ອຸປະຕິເຫດ ດ້ານຮ່າງກາຍ**

ສັນຍາປະກັນຊີວິດ ແມ່ນ ສັນຍາທີ່ແນໃສ່ຮັບສິນປະກັນໄພ ໃນກໍລະນີຜູ້ໄດ້ຮັບການປະກັນໄພເສຍຊີວິດ ຊຶ່ງຜູ້ປະກັນໄພ ຕ້ອງໄດ້ຈ່າຍໃຫ້ຜູ້ໄດ້ຮັບຜົນປະໂຫຍດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ.

ສັນຍາປະກັນສຸຂະພາບ ແມ່ນສັນຍາທີ່ແນໃສ່ທົດແທນຄ່າໃຊ້ຈ່າຍຄ່າປິ່ນປົວຕາມທີ່ໄດ້ກໍານົດໄວ້ໃນສັນຍາໃນກໍລະນີເຈັບເປັນ.

ສັນຍາປະກັນອຸປະຕິເຫດ ດ້ານຮ່າງກາຍ ແມ່ນ ສັນຍາທີ່ແນໃສ່ທົດແທນຄ່າໃຊ້ຈ່າຍຕາມທີ່ໄດ້ກໍານົດໄວ້ໃນສັນຍາ ໃນກໍລະນີ ເຈັບເປັນ, ພິການ ຫຼື ເສຍຊີວິດຍ້ອນອຸປະຕິເຫດ.

**ມາດຕາ 54 (ໃໝ່). ການແຈ້ງອາຍຸໃນການປະກັນຊີວິດ**

ຜູ້ຊື້ການປະກັນໄພມີພັນທະແຈ້ງອາຍຸຂອງຜູ້ໄດ້ຮັບການປະກັນໄພໃຫ້ຖືກຕ້ອງໃນເວລາເຮັດສັນຍາປະກັນໄພ, ຂໍ້ມູນດັ່ງກ່າວເປັນພື້ນຖານໃນການຄິດໄລ່ຄ່າທໍານຽມປະກັນໄພ.

ໃນກໍລະນີທີ່ຜູ້ຊື້ການປະກັນໄພຫາກແຈ້ງອາຍຸຂອງຜູ້ໄດ້ຮັບການປະກັນໄພ ບໍ່ຖືກຕ້ອງກັບອາຍຸທີ່ແທ້ຈິງຂອງຜູ້ໄດ້ຮັບການປະກັນໄພ ຊຶ່ງອາຍຸຂອງບຸກຄົນດັ່ງກ່າວບໍ່ຢູ່ໃນຂອບເຂດທີ່ສາມາດເອົາປະກັນໄພໄດ້, ຜູ້ປະກັນໄພມີສິດຍົກເລີກສັນຍາປະກັນໄພ ໂດຍຫັກຄ່າໃຊ້ຈ່າຍຕ່າງໆໄວ້ກ່ອນຈະສົ່ງຄ່າທໍານຽມປະກັນໄພຄືນໃຫ້ແກ່ຜູ້ຊື້ການປະກັນໄພ.

ໃນກໍລະນີທີ່ສັນຍາປະກັນຊີວິດຫາກໄດ້ມີຜົນບັງຄັບຢ່າງຕໍ່ເນື່ອງແຕ່ສອງປີຂຶ້ນໄປ, ຜູ້ປະກັນໄພຕ້ອງຈ່າຍເງິນໄຖ່ຖອນສັນຍາໃຫ້ແກ່ຜູ້ຊື້ການປະກັນໄພ ຕາມທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ.

ໃນກໍລະນີທີ່ຜູ້ຊື້ການປະກັນໄພແຈ້ງອາຍຸຂອງຜູ້ໄດ້ຮັບການປະກັນໄພບໍ່ຖືກຕ້ອງ ຊຶ່ງອາຍຸທີ່ແທ້ຈິງຂອງຜູ້ໄດ້ຮັບການປະກັນໄພແມ່ນຢູ່ໃນຂອບເຂດທີ່ສາມາດເອົາປະກັນໄພໄດ້ ຊຶ່ງເປັນຜົນເຮັດໃຫ້ຄ່າທໍານຽມປະກັນໄພ ເກັບບໍ່ພຽງພໍ, ຜູ້ປະກັນໄພມີສິດຮຽກຮ້ອງໃຫ້ຜູ້ຊື້ການປະກັນໄພຕ້ອງຈ່າຍຄ່າທໍານຽມເພີ່ມເຕີມໃຫ້ຖືກຕ້ອງຕາມຄ່າທໍານຽມທີ່ໄດ້ຕົກລົງ

ກັນໄວ້ໃນສັນຍາປະກັນໄພ ຫຼື ອາດຫຼຸດວົງເງິນຄຸ້ມກັນໃຫ້ຖືກຕ້ອງຕາມຄ່າທຳນຽມປະກັນໄພທີ່ໄດ້ຈ່າຍຕົວຈິງ.

ໃນກໍລະນີທີ່ຜູ້ຊື້ການປະກັນ ໄພຫາກແຈ້ງອາຍຸຂອງຜູ້ໄດ້ຮັບການປະກັນໄພບໍ່ຖືກຕ້ອງ ຊຶ່ງອາຍຸທີ່ແທ້ຈິງຂອງຜູ້ໄດ້ຮັບການປະກັນໄພ ແມ່ນຢູ່ໃນຂອບເຂດທີ່ສາມາດເອົາປະກັນໄພໄດ້ ຊຶ່ງເປັນຜົນເຮັດໃຫ້ການເກັບຄ່າທຳນຽມປະກັນໄພເກີນ, ຜູ້ປະກັນໄພຕ້ອງສົ່ງຄ່າທຳນຽມປະກັນໄພທີ່ເກັບເກີນນັ້ນ ໃຫ້ແກ່ຜູ້ຊື້ການປະກັນໄພຄືນ ຫຼື ອາດເພີ່ມວົງເງິນຄຸ້ມກັນໃຫ້ສອດຄ່ອງກັບຄ່າທຳນຽມປະກັນໄພທີ່ໄດ້ຈ່າຍ ຕົວຈິງ.

**ມາດຕາ 55 (ໃໝ່). ການຈ່າຍຄ່າທຳນຽມປະກັນຊີວິດ**

ຜູ້ຊື້ການປະກັນໄພຈະຈ່າຍຄ່າທຳນຽມປະກັນໄພ ເທື່ອດຽວ ຫຼື ຫຼາຍເທື່ອຕາມທີ່ໄດ້ກຳນົດໄວ້ ໃນສັນຍາປະກັນໄພ, ໃນກໍລະນີທີ່ຜູ້ປະກັນໄພຫາກຕົກລົງໃຫ້ຈ່າຍຄ່າທຳນຽມເປັນສາມເດືອນ, ຫົກ ເດືອນ ຫຼື ຫຼາຍກວ່ານັ້ນ, ຄ່າທຳນຽມທີ່ຄ້າງຈ່າຍໃຫ້ຜູ້ປະກັນໄພ ຖືວ່າເປັນໜີ້ສິນທີ່ຜູ້ປະກັນໄພມີສິດຫັກອອກຈາກຈຳນວນເງິນສິນປະກັນໄພທີ່ຕ້ອງຈ່າຍຕາມສັນຍາ.

ໃນກໍລະນີຜູ້ຊື້ການປະກັນໄພທີ່ຕ້ອງຈ່າຍຄ່າທຳນຽມປະກັນໄພຫຼາຍເທື່ອ ຊຶ່ງຜູ້ກ່ຽວໄດ້ຈ່າຍມາແລ້ວບໍ່ເກີນສອງປີ ແຕ່ບໍ່ສືບຕໍ່ຈ່າຍຕໍ່ໄປອີກສອງເດືອນຕິດຕໍ່ກັນ, ຜູ້ປະກັນໄພມີສິດໂຈະການປະຕິບັດສັນຍາປະກັນໄພໄວ້ ແລະ ຜູ້ຊື້ການປະກັນໄພບໍ່ມີສິດທວງເອົາຄ່າທຳນຽມປະກັນໄພທີ່ໄດ້ຈ່າຍໄປແລ້ວ ນັ້ນຄືນຈົນກວ່າຜູ້ກ່ຽວຈະໄດ້ສືບຕໍ່ຈ່າຍຄ່າທຳນຽມທີ່ຍັງຄ້າງນັ້ນ. ຖ້າວ່າຜູ້ກ່ຽວຫາກບໍ່ຊຳລະຄ່າທຳນຽມປະກັນໄພທີ່ຍັງຄ້າງພາຍໃນສອງປີ ຜູ້ກ່ຽວບໍ່ມີສິດທີ່ຈະທວງເອົາຄ່າທຳນຽມປະກັນໄພທີ່ໄດ້ຈ່າຍໄປແລ້ວນັ້ນຄືນ ເວັ້ນເສຍແຕ່ໄດ້ມີການຕົກລົງກັນໄວ້ຢ່າງອື່ນໃນສັນຍາປະກັນໄພ.

ໃນກໍລະນີຜູ້ຊື້ການປະກັນໄພຫາກໄດ້ຈ່າຍຄ່າທຳນຽມປະກັນໄພແຕ່ ສອງປີ ຂຶ້ນໄປ ແລະ ຜູ້ປະກັນໄພໄດ້ໂຈະການປະຕິບັດສັນຍາປະກັນໄພ ຕາມທີ່ໄດ້ກຳນົດໄວ້ໃນວັກ 2 ຂອງມາດຕານີ້ ຜູ້ປະກັນໄພຕ້ອງຈ່າຍຄ່າທຳນຽມປະກັນໄພຄືນ ໃຫ້ແກ່ຜູ້ຊື້ການປະກັນໄພ ເວັ້ນເສຍແຕ່ໄດ້ມີການຕົກລົງກັນໄວ້ຢ່າງອື່ນໃນສັນຍາປະກັນໄພ.

ຄູ່ສັນຍາອາດຕົກລົງ ສືບຕໍ່ປະຕິບັດສັນຍາປະກັນໄພ ທີ່ໄດ້ຖືກໂຈະຕາມທີ່ໄດ້ກຳນົດໄວ້ໃນວັກ 2 ຂອງມາດຕານີ້ ພາຍໃນກຳນົດໄລຍະເວລາ ສອງປີ ນັບແຕ່ວັນໄດ້ໂຈະນັ້ນເປັນຕົ້ນໄປ.

**ມາດຕາ 56 (ປັບປຸງ). ການມອບໂອນຜົນປະໂຫຍດໃນການປະກັນຊີວິດ**

ຜູ້ຊື້ການປະກັນໄພ ທີ່ໄດ້ມອບໂອນຜົນປະໂຫຍດໃນການປະກັນຊີວິດໃຫ້ບຸກຄົນອື່ນ ຕ້ອງໄດ້ບົ່ງບອກເປັນລາຍລັກອັກສອນກ່ຽວກັບບຸກຄົນທີ່ໄດ້ຮັບຜົນປະໂຫຍດ ແລະ ວົງເງິນປະກັນໄພ ພ້ອມທັງແຈ້ງໃຫ້ຜູ້ປະກັນໄພຊາບ.

ຜູ້ຊື້ການປະກັນໄພ ສາມາດມອບໂອນຜົນປະໂຫຍດໃນການປະກັນຊີວິດໃຫ້ຄົນບ້າໄບ້ເສຍຈິດ ແລະ ບຸກຄົນທີ່ມີອາຍຸຕໍ່າກວ່າ ສິບແປດປີ ໂດຍການເຫັນດີຂອງ ພໍ່ແມ່ ຫຼື ຜູ້ປົກຄອງຂອງບຸກຄົນ ດັ່ງກ່າວ.

**ມາດຕາ 57 (ໃໝ່). ການຍົກເວັ້ນການຈ່າຍສິນປະກັນໄພ**

**ຜູ້ປະກັນໄພ ຈະບໍ່ຈ່າຍສິນປະກັນໄພໃນກໍລະນີດັ່ງນີ້:**

1. ສັນຍາປະກັນໄພກ່ຽວກັບການເສຍຊີວິດ ຈະບໍ່ມີຜົນບັງຄັບປະຕິບັດຖ້າວ່າຜູ້ໄດ້ຮັບການປະກັນໄພຫາກໄດ້ຂ້າຕົວເອງຕາຍ, ແຕ່ຜູ້ປະກັນໄພກໍຍັງຈະຕ້ອງຈ່າຍເງິນໃຫ້ຜູ້ທີ່ມີສິດໄດ້ຮັບຕາມຈຳນວນເທົ່າກັນກັບເງິນທີ່ມີຢູ່ໃນຄັງແຮຕາມສູດຄິດໄລ່ຖ້າວ່າໃບປະກັນໄພ ຫາກໄດ້ກຳນົດວ່າຜູ້ປະກັນໄພ ຈະຈ່າຍສິນປະກັນໄພໃຫ້ຜູ້ໄດ້ຮັບການປະກັນໄພໃນກໍລະນີທີ່ຜູ້ກ່ຽວຫາກຂ້າຕົວເອງຕາຍນັ້ນ ສັນຍາປະກັນໄພຈະມີຜົນບັງຄັບປະຕິບັດໄດ້ກໍຕໍ່ເມື່ອເວລາເຮັດໃບປະກັນໄພທີ່ເຊັນນຳກັນໄດ້ຜ່ານພົ້ນໄປສອງປີແລ້ວ. ສັນຍາປະກັນໄພກໍຈະບໍ່ມີຜົນບັງຄັບປະຕິບັດເມື່ອຜູ້ໄດ້ຮັບຜົນປະໂຫຍດ ຫາກໄດ້ເຮັດໃຫ້ຜູ້ໄດ້ຮັບການປະກັນໄພເສຍຊີວິດໂດຍເຈດຕະນາ;

2. ບຸກຄົນທີ່ໄດ້ຮັບການປະກັນໄພ ເສຍຊີວິດ ຫຼື ພິການຖາວອນ ໂດຍເຈດຕະນາຂອງຜູ້ຊື້ການປະກັນໄພ ຫຼື ເຈດຕະນາຂອງຜູ້ໄດ້ຮັບຜົນປະໂຫຍດ;

3. ໃນກໍລະນີທີ່ມີຜູ້ໄດ້ຮັບຜົນປະໂຫຍດຫຼາຍຄົນ ແຕ່ຜູ້ໃດຜູ້ໜຶ່ງຫາກເຈດຕະນາທຳຮ້າຍຮ່າງກາຍໃຫ້ຜູ້ໄດ້ຮັບການປະກັນໄພເສຍຊີວິດ ຫຼື ພິການຖາວອນ, ບໍລິສັດປະກັນໄພຕ້ອງໄດ້ຈ່າຍສິນປະກັນໄພໃຫ້ບັນດາຜູ້ໄດ້ຮັບຜົນປະໂຫຍດອື່ນ ຕາມການຕົກລົງໃນ ສັນຍາປະກັນໄພ;

4. ໃນກໍລະນີທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້, ບໍລິສັດປະກັນໄພຕ້ອງຈ່າຍສິນປະກັນໄພທີ່ຍັງເຫຼືອ ຫຼື ຈຳນວນເງິນປະກັນໄພທັງໝົດທີ່ໄດ້ຈ່າຍໄປນັ້ນ ໃຫ້ຜູ້ຊື້ການປະກັນໄພ ຫຼັງຈາກຫັກຄ່າໃຊ້ຈ່າຍທີ່ມີເຫດຜົນ, ຖ້າຜູ້ຊື້ການປະກັນໄພຫາກເສຍຊີວິດ ຈຳນວນເງິນສິ່ງຄືນຈະຖືກແກ້ໄຂຕາມກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ.

**ມາດຕາ 58 (ໃໝ່). ການຍົກເວັ້ນອາກອນປະກັນໄພບຸກຄົນ**

**ການປະກັນໄພບຸກຄົນ ໄດ້ມີການຍົກເວັ້ນອາກອນ ດັ່ງນີ້:**

1. ອາກອນມູນຄ່າເພີ່ມ ຂອງການເຮັດສັນຍາປະກັນຊີວິດ ແລະ ສັນຍາປະກັນສຸຂະພາບ;

2. ອາກອນລາຍໄດ້ຂອງເງິນຜົນປະໂຫຍດຈາກການເສຍຊີວິດ ຫຼື ຈາກການພິການຖາວອນຂອງສັນຍາປະກັນໄພບຸກຄົນ;

3. ອາກອນລາຍໄດ້ຂອງສິນປະກັນໄພສຸຂະພາບ ແລະ ປະກັນໄພອຸປະຕິເຫດທາງດ້ານຮ່າງ ກາຍ;

4. ອາກອນລາຍໄດ້ຂອງເງິນຜົນປະໂຫຍດຈາກການປະກັນໄພສະສົມທຶນ.

**ໝວດທີ 3**
**ສັນຍາປະກັນໄພຊັບສິນ**

**ມາດຕາ 59 (ໃໝ່). ເປົ້າໝາຍຂອງສັນຍາປະກັນໄພຊັບສິນ**

ສັນຍາປະກັນໄພຊັບສິນ ແມ່ນສັນຍາປະກັນຄວາມສ່ຽງຕໍ່ຊັບສິນ ຊຶ່ງປະກອບດ້ວຍເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນມາດຕາ 11, 12 ແລະ 13 ຂອງກົດໝາຍສະບັບນີ້.

**ມາດຕາ 60 (ປັບປຸງ). ຫຼັກການຈ່າຍສິນທົດແທນປະກັນໄພ**

ຜູ້ປະກັນໄພ ຕ້ອງຈ່າຍສິນທົດແທນປະກັນໄພໃຫ້ບຸກຄົນໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຕາມຄວາມເສຍຫາຍຕົວຈິງ ຊຶ່ງສູງສຸດບໍ່ເກີນວົງເງິນຄ້ຳປະກັນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 61 (ປັບປຸງ). ສິດຮຽກຮ້ອງໃຫ້ບຸກຄົນທີສາມທົດແທນຄ່າເສຍຫາຍ**

ໃນກໍລະນີທີ່ມີການເສຍຫາຍຕໍ່ຊັບສິນ, ຊີວິດ, ຮ່າງກາຍ ຂອງຜູ້ໄດ້ຮັບການປະກັນໄພ ຊຶ່ງມີ ເຫດຈາກທາງກົງ ຫຼື ທາງອ້ອມ ດ້ວຍຄວາມບໍ່ລະມັດລະວັງຂອງບຸກຄົນທີສາມນັ້ນ ຜູ້ປະກັນໄພຕ້ອງ ຈ່າຍສິນທົດແທນປະກັນໄພ ໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຕາມຄວາມເສຍຫາຍ ແຕ່ບໍ່ເກີນວົງເງິນຄ້ຳປະກັນທີ່ໄດ້ກຳນົດໄວ້ໃນສັນຍາ.

ຜູ້ປະກັນໄພ ມີສິດທວງເອົາເງິນຄືນທີ່ຕົນໄດ້ຈ່າຍໃຫ້ແກ່ຜູ້ໄດ້ຮັບການປະກັນໄພຈາກບຸກຄົນທີ ສາມ ທີ່ເປັນຕົ້ນເຫດກໍ່ຄວາມເສຍຫາຍ.

ບຸກຄົນທີສາມ ທີ່ເປັນຕົ້ນເຫດນັ້ນ ຍັງຕ້ອງຮັບຜິດຊອບທົດແທນຄ່າເສຍຫາຍທາງແພ່ງໃນສ່ວນທີ່ເກີນໃນວົງເງິນຄ້ຳປະກັນ.

**ມາດຕາ 62 (ໃໝ່). ການເສຍຫາຍທີ່ບໍ່ໄດ້ຮັບສິນທົດແທນປະກັນໄພ**

ຜູ້ປະກັນໄພ ຈະບໍ່ຮັບຜິດຊອບຈ່າຍສິນທົດແທນປະກັນໄພ ໃນກໍລະນີຊັບສິນທີ່ໄດ້ຮັບການປະກັນໄພນັ້ນເສຍຫາຍຍ້ອນການຫຼຸ້ຍຫ້ຽນ ຫຼື ການເສື່ອມຄ່າຊັບສິນເອງ, ຍົກເວັ້ນກໍລະນີທີ່ໄດ້ມີການຕົກລົງກັນໄວ້ໃນສັນຍາປະກັນໄພ.

**ມາດຕາ 63 (ປັບປຸງ). ການທົດແທນຄ່າເສຍຫາຍ**

**ການທົດແທນຄ່າເສຍຫາຍ ໃຫ້ປະຕິບັດ ດັ່ງນີ້:**

1. ຜູ້ປະກັນໄພຕ້ອງຮັບຜິດຊອບທົດແທນຄ່າເສຍຫາຍໃຫ້ຜູ້ໄດ້ຮັບການປະກັນໄພ ບົນພື້ນຖານການຕີລາຄາຕົວຈິງຢູ່ ສະຖານທີ່ເກີດເຫດ ແລະ ລະດັບຄວາມເສຍຫາຍ, ເວັ້ນເສຍແຕ່ໄດ້ຕົກລົງກັນເປັນຢ່າງອື່ນໃນສັນຍາປະກັນໄພ, ຄ່າໃຊ້ຈ່າຍໃນການປະເມີນຄວາມເສຍຫາຍ ແມ່ນເປັນຄວາມຮັບຜິດຊອບຂອງຜູ້ປະກັນໄພ;

2. ຜູ້ປະກັນໄພ ຈະຮັບຜິດຊອບທົດແທນຄ່າເສຍຫາຍໃຫ້ຜູ້ໄດ້ຮັບການປະກັນໄພບໍ່ເກີນວົງເງິນປະກັນໄພ.

**ມາດຕາ 64 (ປັບປຸງ). ຮູບການທົດ**

**ແທນຄ່າເສັຍຫາຍ**

**ຜູ້ຊື້ການປະກັນໄພ ແລະ ຜູ້ປະກັນໄພ ສາມາດຕົກລົງກ່ຽວກັບຮູບການທົດແທນຄ່າເສັຍຫາຍ ໃດໜຶ່ງ ດັ່ງນີ້:**

1. ສ້ອມແປງຊັບສິນທີ່ເສັຍຫາຍ;

2. ປ່ຽນຊັບສິນທີ່ເສັຍຫາຍ ດ້ວຍຊັບສິນປະເພດດຽວກັນທີ່ມີມູນຄ່າເທົ່າທຽມກັນ;

3. ຈ່າຍເງິນທົດແທນຄ່າເສັຍຫາຍ.

ໃນກໍລະນີຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພ ບໍ່ສາມາດຕົກລົງກັນໄດ້ກ່ຽວກັບຮູບການທົດແທນຄ່າເສັຍຫາຍແມ່ນໃຫ້ປະຕິບັດຕາມຂໍ້ 3 ຂອງມາດຕານີ້.

ຖ້າການທົດແທນຄ່າເສັຍຫາຍ ຫາກປະຕິບັດຕາມຂໍ້ 2 ຫຼື ຂໍ້ 3 ຂອງມາດຕານີ້, ຜູ້ປະກັນໄພ ມີສິດເອົາຊັບສິນທີ່ເສັຍຫາຍຫຼັງຈາກໄດ້ປ່ຽນຫຼືທົດແທນຕາມລາຄາມູນຄ່າຕົວຈິງຂອງຊັບສິນ.

## ມາດຕາ 65 (ໃໝ່). ການປະເມີນຄວາມເສຍຫາຍ

ເມື່ອເຫດປະກັນໄພ ເປັນຕົ້ນ ອັກຄີໄພ, ອຸປະຕິເຫດເກີດຂຶ້ນ ຜູ້ປະກັນໄພ ຕ້ອງຮີບຮ້ອນໄປຍັງສະຖານທີ່ເກີດເຫດ ເພື່ອປະເມີນສາເຫດ ແລະ ຄວາມເສັຍຫາຍຂອງເຫດການທີ່ເກີດຂຶ້ນ.

ຖ້າວ່າຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພ ບໍ່ສາມາດຕົກລົງກັນກ່ຽວກັບສາເຫດ ແລະ ຄວາມເສັຍຫາຍນັ້ນແລ້ວ ຄູ່ສັນຍາຝ່າຍໃດໜຶ່ງສາມາດສະເໜີເອົາບຸກຄົນທີສາມເພື່ອດຳເນີນການປະເມີນສາເຫດ ແລະ ຄວາມເສັຍຫາຍດັ່ງກ່າວ. ໃນກໍລະນີທີ່ບໍ່ສາມາດຕົກລົງກັນໄດ້ກ່ຽວກັບບຸກຄົນທີສາມ ຄູ່ສັນຍາຝ່າຍໃດໜຶ່ງສາມາດສະເໜີຕໍ່ສານປະຊາຊົນເພື່ອພິຈາລະນາແຕ່ງຕັ້ງຜູ້ປະເມີນສາເຫດ ແລະ ຄວາມເສັຍຫາຍ.

ຄູ່ສັນຍາທັງສອງຝ່າຍຕ້ອງຍອມຮັບເອົາຜົນຂອງການປະເມີນສາເຫດ ແລະ ຄວາມເສັຍຫາຍຂອງຜູ້ປະເມີນນັ້ນ.

## ມາດຕາ 66 (ປັບປຸງ). ຄວາມຮັບຜິດຊອບທົດແທນຄ່າເສັຍຫາຍ

ໃນກໍລະນີຜູ້ໄດ້ຮັບການປະກັນໄພ ໄດ້ກໍ່ຄວາມເສັຍຫາຍໃຫ້ບຸກຄົນທີສາມແລ້ວ ຜູ້ປະກັນໄພຕ້ອງຮັບຜິດຊອບທົດແທນຄ່າເສັຍຫາຍ ໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ແລະ/ຫຼື ບຸກຄົນທີສາມຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ໃນກໍລະນີຄວາມເສັຍຫາຍນັ້ນຫາກເກີດຂຶ້ນຍ້ອນບຸກຄົນທີສາມ ບຸກຄົນດັ່ງກ່າວກໍຕ້ອງໄດ້ຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ ແກ່ຜູ້ໄດ້ຮັບການປະກັນໄພຕາມລະບຽບກົດໝາຍ. ສ່ວນຄວາມເສັຍຫາຍທາງດ້ານຮ່າງກາຍ ທີ່ເນື່ອງມາຈາກອຸປະຕິເຫດບິນທ້ອງຖະໜົນ ຊຶ່ງມີພາຫະນະໄດ້ຮັບການປະກັນໄພ ແມ່ນໃຫ້ຜູ້ປະກັນໄພຮັບຜິດຊອບຄ່າປິ່ນປົວຜູ້ບາດເຈັບກ່ອນ ໃນກໍລະນີທີ່ບໍ່ທັນມີການສ້າງຕັ້ງກອງທຶນປະກັນໄພ ຫຼັງຈາກນັ້ນ ຈຶ່ງທວງເອົາຄືນຈາກຜູ້ກໍ່ຄວາມເສັຍຫາຍທີ່ເປັນຕົ້ນເຫດ.

## ມາດຕາ 67 (ປັບປຸງ). ການປະກັນໄພຊັບສິນທີ່ຕ່ຳກວ່າມູນຄ່າຊັບສິນ

ການປະກັນໄພຊັບສິນ ຫາກເຮັດຂຶ້ນຕ່ຳກວ່າມູນຄ່າຕົວຈິງຂອງຊັບສິນ ທີ່ໄດ້ຮັບການປະກັນໄພ, ໃນກໍລະນີມີເຫດການທີ່ໄດ້ປະກັນໄພເກີດຂຶ້ນ ຜູ້ປະກັນໄພ ຈະຮັບຜິດຊອບທົດແທນຄ່າເສັຍຫາຍຕາມອັດຕາສ່ວນ ລະຫວ່າງວົງເງິນປະກັນໄພ ແລະ ມູນຄ່າຕົວຈິງຂອງຊັບສິນທີ່ໄດ້ຮັບການປະກັນໄພໃນໄລຍະເວລາຂອງສັນຍາປະກັນໄພ.

## ມາດຕາ 68 (ໃໝ່). ການປະກັນໄພຊັບສິນທີ່ສູງກວ່າມູນຄ່າຊັບສິນ

ການປະກັນໄພຊັບສິນ ຫາກເຮັດຂຶ້ນສູງກວ່າມູນຄ່າຕົວຈິງຂອງຊັບສິນທີ່ໄດ້ຮັບການປະກັນໄພ, ຜູ້ປະກັນໄພຕ້ອງໄດ້ສົ່ງຈຳນວນເງິນຄ່າທຳນຽມປະກັນໄພ ທີ່ໄດ້ຈ່າຍເກີນໄປໃຫ້ແກ່ຜູ້ຊື້ການປະກັນໄພ. ໃນກໍລະນີມີເຫດການທີ່ໄດ້ປະກັນໄພເກີດຂຶ້ນ ຜູ້ປະກັນໄພ ຈະຮັບຜິດຊອບທົດແທນຄ່າເສັຍຫາຍ ຕາມຄວາມເສັຍຫາຍຕົວຈິງ ແລະ ສູງສຸດບໍ່ເກີນມູນຄ່າຊັບສິນທີ່ໄດ້ຮັບການປະກັນໄພ.

## ມາດຕາ 69 (ໃໝ່). ສັນຍາປະກັນໄພຊ້ຳຊ້ອນ

ສັນຍາປະກັນໄພຊ້ຳຊ້ອນ ແມ່ນຜູ້ຊື້ການປະກັນໄພ ທີ່ໄດ້ເຮັດສັນຍາປະກັນໄພນຳສອງຜູ້ປະກັນໄພຂຶ້ນໄປ ເພື່ອປະກັນໄພຊັບສິນອັນດຽວກັນ ຊຶ່ງມີເງື່ອນໄຂ ແລະ ເປົ້າໝາຍປະກັນໄພອັນດຽວກັນ.

ໃນກໍລະນີຄູ່ສັນຍາໄດ້ເຮັດສັນ

ຍາປະກັນໄພຊໍ້າຊ້ອນ, ຖ້າຫາກມີເຫດການປະກັນໄພເກີດຂຶ້ນ ແຕ່ລະບໍລິສັດປະກັນໄພ ຕ້ອງຮັບຜິດຊອບທົດແທນຄ່າເສັຍຫາຍ ຕາມອັດຕາສ່ວນຈຳນວນເງິນປະກັນໄພທີ່ໄດ້ຕົກລົງກັນຕາມມູນຄ່າຕົວຈິງຂອງຊັບສິນທີ່ເສັຍຫາຍ.

**ໝວດທີ 4**

**ສັນຍາປະກັນໄພຕໍ່**

**ມາດຕາ 70 (ໃໝ່). ຫຼັກການ ການປະກັນໄພຕໍ່**

ຜູ້ປະກັນໄພ ສາມາດເຮັດການປະກັນໄພຕໍ່ກັບຜູ້ປະກັນໄພຕໍ່ຢູ່ພາຍໃນ ຫຼື ຕ່າງປະເທດ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ແບ່ງຄວາມຮັບຜິດຊອບໃນການທົດແທນຄ່າເສັຍຫາຍຕໍ່ຊັບສິນທີ່ໄດ້ຮັບການປະກັນໄພ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ສາກົນ. ຜູ້ປະກັນໄພຕ້ອງສະໜອງຂໍ້ມູນກ່ຽວກັບສັນຍາປະກັນໄພຕໍ່ ແລະ ຂໍ້ມູນອື່ນ ໃຫ້ກະຊວງການເງິນ ເພື່ອຕິດຕາມ, ຄຸ້ມຄອງ ແລະ ກວດກາ.

**ມາດຕາ 71 (ໃໝ່). ເງື່ອນໄຂການປະກັນໄພຕໍ່**

**ການປະກັນໄພຕໍ່ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:**

1. ຕ້ອງເໝາະສົມກັບສະພາບການດຳເນີນທຸລະກິດຂອງຜູ້ປະກັນໄພຕໍ່;
2. ຕ້ອງມີຄວາມເປັນໄປໄດ້ທາງດ້ານເຕັກນິກທີ່ເໝາະສົມກັບຂົງເຂດການດຳເນີນທຸລະກິດຂອງຜູ້ປະກັນໄພຕໍ່ທີ່ໄດ້ຮັບອະນຸຍາດ;
3. ຕ້ອງໄດ້ຮັບຄວາມເຊື່ອໝັ້ນໃນຂົງເຂດປະກັນໄພ ໃນຕະຫຼາດປະກັນໄພພາຍໃນປະເທດ,ຕ່າງປະເທດ, ພາກພື້ນ ແລະ ສາກົນ, ມີຄວາມໝັ້ນຄົງທາງດ້ານການເງິນ ແລະ ມີປະສົບການກ່ຽວກັບການປະກັນໄພຕໍ່.

ໃນກໍລະນີ ກະຊວງການເງິນ ຫາກກວດພົບເຫັນການປະກັນໄພຕໍ່ບໍ່ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ ມີສິດແຈ້ງເປັນລາຍລັກອັກສອນໃຫ້ຍົກເລີກ ຫຼື ສະເໜີຄືນໃຫ້ດັດແກ້ການປະກັນໄພຕໍ່ ຫຼື ບໍ່ອະນຸຍາດໃຫ້ເຮັດການປະກັນໄພຕໍ່.

**ມາດຕາ 72 (ໃໝ່). ຄວາມຮັບຜິດຊອບໃນການປະກັນໄພຕໍ່**

ຜູ້ປະກັນໄພ ມີຄວາມຮັບຜິດຊອບຕໍ່ຜູ້ຊື້ການປະກັນໄພ ຕາມສັນຍາປະກັນໄພລວມທັງກໍລະນີເອົາຊັບສິນໄປປະກັນໄພຕໍ່.

ຜູ້ປະກັນໄພຕໍ່ ບໍ່ສາມາດຮຽກຮ້ອງໃຫ້ຜູ້ຊື້ການປະກັນໄພຈ່າຍຄ່າທຳນຽມປະກັນໄພໂດຍກົງໃຫ້ຕົນເອງ, ເວັ້ນເສັຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາ.

ຜູ້ຊື້ການປະກັນໄພ ບໍ່ສາມາດຮຽກຮ້ອງໃຫ້ຜູ້ຮັບການປະກັນໄພຕໍ່ຈ່າຍເງິນທົດແທນໃຫ້ຕົນເອງ, ເວັ້ນເສັຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາ.

**ໝວດ ທີ 5**

**ສັນຍາປະກັນໄພ ຄວາມຮັບຜິດຊອບທາງແພ່ງ**

**ມາດຕາ 73 (ປັບປຸງ). ຄວາມຮັບຜິດຊອບຂອງຜູ້ປະກັນໄພ**

ຄວາມຮັບຜິດຊອບຂອງຜູ້ປະກັນໄພ ຈະມີຂຶ້ນກໍຕໍ່ເມື່ອຜູ້ໄດ້ຮັບການປະກັນໄພ ໄດ້ກໍ່ຄວາມເສັຍຫາຍໃນໄລຍະເວລາຂອງສັນຍາປະກັນໄພ ແລະ ບຸກຄົນທີສາມທີ່ໄດ້ຮັບຄວາມເສັຍຫາຍໄດ້ທວງເອົາການທົດແທນຄວາມເສັຍຫາຍທີ່ເກີດຂຶ້ນນັ້ນນຳຜູ້ໄດ້ຮັບການປະກັນໄພ.

**ມາດຕາ 74 (ໃໝ່). ການເປັນຕົວແທນໃຫ້ຜູ້ຊື້ການປະກັນໄພ**

ຜູ້ປະກັນໄພ ມີສິດເປັນຕົວແທນໃຫ້ແກ່ຜູ້ຊື້ການປະກັນໄພ ໃນການເຈລະຈາກັບບຸກຄົນທີສາມກ່ຽວກັບການທົດແທນຄວາມເສັຍຫາຍທີ່ຜູ້ໄດ້ຮັບການປະກັນໄພໄດ້ກໍ່ຂຶ້ນ, ເວັ້ນເສັຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາ.

**ມາດຕາ 75 (ປັບປຸງ). ການທົດແທນຄວາມເສັຍຫາຍ**

ຜູ້ປະກັນໄພ ສາມາດຈ່າຍເງິນທົດແທນຄວາມເສັຍຫາຍ ໂດຍກົງໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີສາມທີ່ໄດ້ຮັບຄວາມເສັຍຫາຍກໍໄດ້ ເມື່ອມີຄວາມເສັຍຫາຍເກີດຂຶ້ນຕາມການສະເໜີຂອງຜູ້ໄດ້ຮັບການປະກັນໄພ.

**ພາກທີ VI**

**ຕົວແທນປະກັນໄພ, ນາຍໜ້າປະກັນໄພ**

**ໝວດ ທີ 1**

**ຕົວແທນປະກັນໄພ**

**ມາດຕາ 76 (ໃໝ່). ຕົວແທນປະກັນໄພ**

ຕົວແທນປະກັນໄພ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກຜູ້ປະກັນໄພ ບົນພື້ນຖານຂໍ້ຜູກພັນຂອງການເປັນຕົວແທນປະກັນໄພ ເພື່ອດຳເນີນກິດຈະການປະກັນໄພ ໂດຍສອດຄ່ອງກັບກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ຜູ້ປະກັນໄພ ຕ້ອງໄດ້ສົ່ງບັນຊີລາຍຊື່ຕົວແທນປະກັນໄພທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ກະຊວງການເງິນ.

**ມາດຕາ 77 (ໃໝ່). ເງື່ອນໄຂໃນການເປັນຕົວແທນປະກັນໄພ**

**ການເປັນຕົວແທນປະກັນໄພ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ສຳລັບບຸກຄົນ:

– ເປັນພົນລະເມືອງລາວທີ່ມີພູມລຳເນົາຢູ່ໃນ ສປປ ລາວ;

– ມີອາຍຸແຕ່ 18 ປີຂຶ້ນໄປ;

– ໄດ້ຜ່ານການຝຶກອົບຮົມວຽກງານກ່ຽວກັບການປະກັນໄພ;

– ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບເນື່ອງຈາກການກະທຳຜິດໂດຍເຈດຕະນາ;

– ມີສຸຂະພາບແຂງແຮງ.

2. ສຳລັບນິຕິບຸກຄົນ:

– ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 78 (ໃໝ່). ສິດ ແລະ ໜ້າທີ່ຂອງຕົວແທນປະກັນໄພ**

**ຕົວແທນປະກັນໄພ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ນຳສະເໜີ ແລະ ຂາຍປະກັນໄພ;

2. ອອກສັນຍາປະກັນໄພ;

3. ເກັບຄ່າທຳນຽມ ແລະ ສົ່ງໃຫ້ຜູ້ປະກັນໄພ;

4. ປະສານງານໃນການກວດກາ, ແກ້ໄຂໃນກໍລະນີເຫດການປະກັນໄພໄດ້ເກີດຂຶ້ນ;

5. ນຳເອົາສິນທົດແທນປະກັນໄພໃຫ້ຜູ້ຊື້ການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດຄົບຖ້ວນ ແລະ ທັນຕາມກຳນົດເວລາ;

6. ປະຕິບັດວຽກງານອື່ນທີ່ກ່ຽວຂ້ອງກັບການປະຕິບັດສັນຍາປະກັນໄພ.

**ມາດຕາ 79 (ໃໝ່). ເນື້ອໃນຂໍ້ຜູກພັນໃນການເປັນຕົວແທນ**

**ຂໍ້ຜູກພັນໃນການເປັນຕົວແທນປະກັນໄພ ຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:**

1. ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຕົວແທນປະກັນໄພ;

2. ຊື່ ແລະ ທີ່ຢູ່ຂອງຜູ້ປະກັນໄພ;

3. ສິດ ແລະ ພັນທະຂອງຜູ້ປະກັນໄພ ແລະ ຂອງຕົວແທນປະກັນໄພ;

4. ຄ່າບໍລິການໃຫ້ຕົວແທນປະກັນໄພ;

5. ອາຍຸຂອງຂໍ້ຜູກພັນ;

6. ການແກ້ໄຂຂໍ້ຂັດແຍ່ງ;

7. ການວາງເງິນ ຫຼື ຫຼັກຊັບຄໍ້າປະກັນ.

**ມາດຕາ 80 (ໃໝ່). ຄວາມຮັບຜິດຊອບຂອງຕົວແທນ**

ໃນກໍລະນີຕົວແທນປະກັນໄພຫາກໄດ້ລະເມີດຂໍ້ຜູກພັນຂອງການເປັນຕົວແທນປະກັນໄພຊຶ່ງໄດ້ກໍ່ຄວາມເສັຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງຜູ້ຊື້ການປະກັນໄພນັ້ນ ຜູ້ປະກັນໄພຕ້ອງຮັບຜິດຊອບໂດຍກົງຕໍ່ຄວາມເສັຍຫາຍທີ່ຕົວແທນປະກັນໄພໄດ້ກໍ່ຂຶ້ນ ແລະ ມີສິດທວງເອົາການທົດແທນຄ່າເສັຍຫາຍນັ້ນຄືນຈາກຕົວແທນປະກັນໄພ.

## ໝວດ ທີ 2
## ນາຍໜ້າປະກັນໄພ

**ມາດຕາ 81 (ໃໝ່). ນາຍໜ້າປະກັນໄພ**

ນາຍໜ້າປະກັນໄພ ແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດນາຍໜ້າປະກັນໄພ.

ນາຍໜ້າປະກັນໄພທີ່ໄດ້ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ມີສິດເປັນນາຍໜ້າໃຫ້ຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພຫຼາຍຄົນ.

**ມາດຕາ 82 (ໃໝ່). ການຂໍອະນຸຍາດດຳເນີນທຸລະກິດນາຍໜ້າປະກັນໄພ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດນາຍໜ້າປະກັນໄພ ໃຫ້ປະຕິບັດຄືກັນກັບ ການຂໍອະນຸຍາດສ້າງຕັ້ງບໍລິສັດປະກັນໄພຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້

ສຳລັບທຶນຈົດທະບຽນຂອງນາຍໜ້າປະກັນໄພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 83 (ໃໝ່). ຂອບເຂດການດໍາເນີນທຸລະກິດນາຍໜ້າປະກັນໄພ**

**ນາຍໜ້າປະກັນໄພ ສາມາດດໍາເນີນທຸລະກິດປະກັນໄພໃນຂອບເຂດ ດັ່ງນີ້:**

1. ສະໜອງຂໍ້ມູນກ່ຽວກັບຜູ້ປະກັນໄພ, ຮູບແບບ ແລະ ປະເພດປະກັນໄພໃຫ້ຜູ້ຊື້ການ ປະກັນໄພ ເຊັ່ນ ກໍານົດເວລາ, ເງື່ອນໄຂ, ຄ່າທໍານຽມປະກັນໄພ;

2. ໃຫ້ຄໍາປຶກສາ ແກ່ຜູ້ຊື້ການປະກັນໄພກ່ຽວກັບຄວາມສ່ຽງ, ການຄັດເລືອກປະເພດປະກັນໄພ, ກໍານົດເວລາ, ເງື່ອນໄຂ, ຄ່າທໍານຽມປະກັນໄພ;

3. ເຈລະຈາ ແລະ ສ້າງສັນຍາປະກັນໄພລະຫວ່າງຜູ້ປະກັນໄພ ກັບຜູ້ຊື້ການປະກັນໄພ;

4. ປະຕິບັດວຽກງານອື່ນທີ່ກ່ຽວຂ້ອງກັບການປະຕິບັດສັນຍາປະກັນໄພ ຕາມການມອບໝາຍຂອງຜູ້ຊື້ການປະກັນໄພ.

**ມາດຕາ 84 (ໃໝ່). ສິດ ແລະ ໜ້າທີ່ຂອງນາຍໜ້າປະກັນໄພ**

**ນາຍໜ້າປະກັນໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ໄດ້ຮັບຄ່າບໍລິການເປັນນາຍໜ້າປະກັນໄພ ຊຶ່ງລວມຢູ່ໃນຄ່າທໍານຽມປະກັນໄພ;

2. ໄດ້ຮັບການປົກປ້ອງຕໍ່ການດໍາເນີນທຸລະກິດນາຍໜ້າປະກັນໄພທີ່ຖືກຕ້ອງຕາມລະບຽບກົດໝາຍ;

3. ສະເໜີຄວາມຄິດຄວາມເຫັນກ່ຽວກັບການດໍາເນີນທຸລະກິດປະກັນໄພ ຕໍ່ອົງການຄຸ້ມຄອງວຽກງານປະກັນໄພ;

4. ດໍາເນີນທຸລະກິດນາຍໜ້າປະກັນໄພດ້ວຍຄວາມຊື່ສັດ;

5. ຮັກສາຄວາມລັບຂອງຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພທີ່ຕົນໃຫ້ບໍລິການ;

6. ຮັບຜິດຊອບຕໍ່ທຸກຄວາມເສຍຫາຍທີ່ເກີດຂຶ້ນເນື່ອງຈາກການກະທໍາທີ່ບໍ່ຖືກຕ້ອງຂອງຕົນຕໍ່ຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພ.

**ມາດຕາ 85 (ໃໝ່). ການຄໍ້າປະກັນດ້ານວິຊາຊີບ**

ນາຍໜ້າປະກັນໄພ ຕ້ອງຄໍ້າປະກັນການເຄື່ອນໄຫວດໍາເນີນທຸລະກິດຂອງຕົນດ້ວຍການຊື້ການປະກັນໄພທາງດ້ານວິຊາຊີບ ນໍາຜູ້ປະກັນໄພໃດໜຶ່ງຢູ່ ສປປ ລາວ.

ການຄໍ້າປະກັນດ້ານວິຊາຊີບຂອງນາຍໜ້າປະກັນໄພໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VII
## ການແຂ່ງຂັນດ້ານທຸລະກິດປະກັນໄພ

**ມາດຕາ 86 (ໃໝ່). ການແຂ່ງຂັນດ້ານທຸລະກິດປະກັນໄພ**

ຜູ້ປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພທີ່ໄດ້ຮັບອະນຸຍາດເຄື່ອນໄຫວດໍາເນີນທຸລະກິດຢູ່ ສປປ ລາວ ແມ່ນມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສາມາດ ແຂ່ງຂັນຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ຍຸຕິທໍາ ເພື່ອຮັກສາສະຖຽນລະພາບຂອງຕະຫຼາດປະກັນໄພ, ຂະຫຍາຍ ແລະ ພັດທະນາຜະລິດຕະພັນປະກັນໄພ ເພື່ອຮັບໃຊ້ສັງຄົມ.

**ມາດຕາ 87 (ໃໝ່). ຫຼັກການແຂ່ງຂັນທຸລະກິດປະກັນໄພ**

ການແຂ່ງຂັນທຸລະກິດປະກັນໄພ ຕ້ອງດໍາເນີນຕາມກົນໄກເສດຖະກິດຕະຫຼາດບົນພື້ນຖານລະບຽບກົດໝາຍຂອງ ສປປ ລາວ, ຮັບປະກັນຫຼັກການຍຸຕິທໍາ ແລະ ຈັນຍາບັນວິຊາຊີບ.

**ການແຂ່ງຂັນທຸລະກິດປະກັນໄພ ຕ້ອງ:**

1. ບໍ່ສ້າງຄວາມເຂົ້າໃຈຜິດໃຫ້ແກ່ຜູ້ທີ່ຈະຊື້ ຫຼື ຊື້ການປະກັນໄພແລ້ວນໍາຜູ້ປະກັນໄພ;

2. ບໍ່ແນະນໍາຂໍ້ມູນເກີນຄວາມເປັນຈິງ;

3. ບໍ່ກ່າວຫາ ໂຈມຕີ ຊຶ່ງກັນ ແລະ ກັນດ້ວຍຮູບແບບຕ່າງໆ;

4. ບໍ່ໃຫ້ຍາດແຍ່ງພະນັກງານຫຼັກແຫຼ່ງທີ່ມີປະສົບການ ທີ່ຈະສ້າງຄວາມເສຍຫາຍແກ່ຜູ້ປະກັນໄພ ແລະ ຕົວແທນ ຊຶ່ງກັນ ແລະ ກັນ;

5. ບໍ່ໃຫ້ຫຼຸດຄ່າທໍານຽມປະກັນໄພ ຕໍ່າກວ່າອັດຕາທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ພາກທີ VIII
## ລະບອບການເງິນ, ການບັນຊີ ແລະ ການສະຫຼຸບລາຍງານ
### ໝວດທີ 1
### ລະບອບການເງິນ

**ມາດຕາ 88 (ປັບປຸງ). ການປະຕິບັດລະບອບການເງິນ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງປະຕິບັດລະບອບການເງິນ, ຄັງສຳຮອງ ແລະ ຄັງແຮປະກັນໄພ ໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 89 (ໃໝ່). ຄັງສຳຮອງ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງສ້າງຄັງສຳຮອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ວິສາຫະກິດ ເພື່ອຮັບປະກັນຄວາມສ່ຽງໃນການດຳເນີນທຸລະກິດ ແລະ ການຂະຫຍາຍທຸລະກິດ.

**ມາດຕາ 90 (ປັບປຸງ). ຄັງແຮປະກັນໄພ**

ຄັງແຮປະກັນໄພ ແມ່ນ ຄັງແຮທາງດ້ານວິຊາການທີ່ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພໄດ້ຫັກໄວ້ເພື່ອຊຳລະໜີ້ສິນປະກັນໄພ, ຄ່າບໍລິການກ່ຽວກັບການປະກັນໄພ ແລະ ຄ່າໃຊ້ຈ່າຍອື່ນທີ່ເກີດຂຶ້ນຈາກສັນຍາປະກັນໄພ.

ຄັງແຮປະກັນໄພ ໄດ້ແຍກໄປຕາມຮູບແບບການປະກັນໄພ ຊຶ່ງແຕ່ລະຄັງແຮປະກັນໄພ ຕ້ອງມີທຶນພຽງພໍ ເພື່ອປະຕິບັດພັນທະຢ່າງຄົບຖ້ວນຕໍ່ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຈາກການປະກັນໄພ.

ສຳລັບວິທີການ, ຮູບແບບຄັງແຮປະກັນໄພ ແລະ ຈຳນວນຄັງແຮໄດ້ກຳນົດໄວ້ໃນລະບຽບການສະເພາະຊຶ່ງວາງອອກໂດຍກະຊວງການເງິນ.

## ໝວດທີ 2
## ການບັນຊີ ແລະ ການສະຫຼຸບລາຍງານ

**ມາດຕາ 91 (ປັບປຸງ). ລະບອບການບັນຊີ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງປະຕິບັດລະບອບການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການບັນຊີ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 92 (ໃໝ່). ການໂອນກຳໄລ, ເງິນປັນຜົນ ແລະ ຊັບສິນອອກຈາກ ສປປ ລາວ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພທີ່ລົງທຶນໂດຍຕ່າງປະເທດ ຊຶ່ງເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ສາມາດໂອນກຳໄລ ແລະ ເງິນປັນຜົນອອກຈາກ ສປປ ລາວ ພາຍຫຼັງທີ່ໄດ້ປະຕິບັດພັນທະທາງດ້ານການເງິນ ແລະ ຫັກເງິນເຂົ້າຄັງຕ່າງໆ ຕາມລະບຽບກົດໝາຍຂອງ ສປປ ລາວ ໄດ້ກຳນົດໄວ້.

ການໂອນຊັບສິນຂອງຕົນອອກຈາກ ສປປ ລາວ ສາມາດປະຕິບັດໄດ້ພາຍຫຼັງທີ່ຢຸດເຊົາການເຄື່ອນໄຫວ ແລະ ໄດ້ດຳເນີນການຊຳລະສະສາງພັນທະຕ່າງໆ ລວມທັງໜີ້ສິນເປັນທີ່ຮຽບຮ້ອຍແລ້ວ.

**ມາດຕາ 93 (ປັບປຸງ). ຂອບເຂດຄວາມສາມາດໃນການໃຊ້ໜີ້ສິນ**

**ທຸກວິສາຫະກິດປະກັນໄພ ຕ້ອງມີຫຼັກຖານຢັ້ງຢືນຄວາມສາມາດພຽງພໍຂອງຕົນ ໃນການໃຊ້ໜີ້ ສິນ. ຄວາມສາມາດໃນການໃຊ້ໜີ້ສິນ ປະກອບດ້ວຍ:**

1. ທຶນວິສາຫະກິດ ຫຼື ທຶນສ້າງຕັ້ງ;
2. ທຶນສຳຮອງທີ່ບໍ່ກ່ຽວກັບການປະຕິບັດພັນທະໃດໆ;
3. ກຳໄລທີ່ຍົກຍອດມາ ແລະ ຜົນທີ່ໄດ້ຮັບຂອງປີດຳເນີນງານ ພາຍຫຼັງທີ່ໄດ້ຫັກການຂາດທຶນອອກແລ້ວ;
4. ມູນຄ່າສ່ວນເກີນທີ່ເນື່ອງມາຈາກການປະເມີນລາຄາຂອງອົງປະກອບຊັບສິນ;
5. ຊັບສິນທີ່ບໍ່ມີຕົວຕົນ ແມ່ນບໍ່ໃຫ້ຄິດໄລ່ເຂົ້າໃນຄວາມສາມາດໃນການໃຊ້ໜີ້ສິນ.

**ມາດຕາ 94 (ໃໝ່). ການນຳໃຊ້ເງິນຄ້ຳປະກັນ**

**ຜູ້ປະກັນໄພມີສິດທວງເອົາເງິນຄ້ຳປະກັນ, ຊັບສິນທີ່ຝາກໄວ້ຢູ່ທະນາຄານ ເພື່ອຊຳລະສະສາງໜີ້ສິນຂອງຕົນເມື່ອມີການຢຸດເຊົາ:**

1. ດ້ວຍຄວາມສະໝັກໃຈ;
2. ເນື່ອງມາຈາກການລະເມີດລະບຽບກົດໝາຍ;
3. ເນື່ອງມາຈາກການລົ້ມລະລາຍ.

**ການທວງເອົາເງິນຄ້ຳປະກັນຕ້ອງປະຕິບັດ ດັ່ງນີ້:**

ໃນກໍລະນີຢຸດເຊົາຕາມຂໍ້ 1 ເທິງນີ້ ຕ້ອງທວງໃນໄລຍະເວລາບໍ່ໃຫ້ເກີນສາມສິບ ວັນ ນັບແຕ່ວັນໄດ້ຮັບແຈ້ງການຢຸດເຊົາດຳເນີນທຸລະກິດປະກັນ

ໄພເປັນຕົ້ນໄປ.

ໃນກໍລະນີມີການຢຸດເຊົາຕາມ ຂໍ້ 2 ແລະ 3 ຂ້າງເທິງນີ້ ຜູ້ປະກັນໄພບໍ່ສາມາດທວງເອົາເງິນຄໍ້າ ປະກັນດັ່ງກ່າວຂອງຕົນ ຈົນກວ່າຈະມີການຂຶ້ນແຜນຊໍາລະໜີ້ສິນ ແລະ ຊໍາລະໜີ້ສິນໃຫ້ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ທັງໝົດ.

ໃນກໍລະນີທີ່ໄດ້ຮັບດອກເບ້ຍຈາກເງິນຄໍ້າປະກັນທີ່ຝາກໄວ້ຢູ່ທະນາຄານ ຜູ້ປະກັນໄພສາມາດນໍາໃຊ້ດອກເບ້ຍຈາກເງິນຄໍ້າປະກັນນັ້ນໄດ້.

**ມາດຕາ 95 (ໃໝ່). ການບໍລິຫານເງິນທຶນ**

ຜູ້ປະກັນໄພ ມີສິດລົງທຶນໃນເງິນທຶນຂອງຕົນເອງ ບົນພື້ນຖານການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ແຕ່ຕ້ອງຮັບປະກັນຄວາມປອດໄພ, ປະສິດທິຜົນ ແລະ ຮັບປະກັນຄວາມອາດສາມາດໃນການຈ່າຍເງິນຄືນຢ່າງເປັນປົກກະຕິຕາມສັນຍາປະກັນໄພ.

**ຜູ້ປະກັນໄພ ສາມາດນໍາໃຊ້ເງິນທຶນ ເພື່ອລົງທຶນຢູ່ ສປປ ລາວ ໃນຂົງເຂດຕາມລໍາດັບບຸລິມະສິດ ດັ່ງນີ້:**

1. ຊື້ພັນທະບັດຂອງລັດ;

2. ຊື້ຮຸ້ນ ແລະ ພັນທະບັດຂອງວິສາຫະກິດ;

3. ລົງທຶນໃນທຸລະກິດອະສັງຫາລິມະຊັບ;

4. ປະກອບທຶນໃນວິສາຫະກິດອື່ນໆ;

5. ຝາກເງິນໄວ້ກັບທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ.

**ມາດຕາ 96 (ໃໝ່). ລາຍຮັບ-ລາຍຈ່າຍ**

ລາຍຮັບ ແລະ ລາຍຈ່າຍຂອງຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແລະ ໃຫ້ສອດຄ່ອງກັບມາດຕະຖານຫຼັກການການບັນຊີຂອງ ສປປ ລາວ.

ກະຊວງການເງິນ ອອກລະບຽບການເພີ່ມ ເພື່ອກວດກາການຈັດຕັ້ງປະຕິບັດລະບຽບການ ການເງິນຂອງຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ.

**ມາດຕາ 97 (ໃໝ່). ສົກປີການເງິນ**

ສົກປີການເງິນຂອງຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງປະຕິບັດຕາມປີການບັນຊີທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ຊຶ່ງເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ ຂອງແຕ່ລະປີ.

ສົກປີການເງິນປີທໍາອິດຂອງຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງເລີ່ມແຕ່ວັນທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງໃຫ້ດໍາເນີນທຸລະກິດ ແລະ ສິ້ນສຸດລົງໃນວັນທີ 31 ທັນວາຂອງປີນັ້ນ.

**ມາດຕາ 98 (ໃໝ່). ການກວດສອບເອກະສານລາຍງານການເງິນ**

ການກວດສອບເອກະສານລາຍງານການເງິນປະຈໍາປີ ຂອງຜູ້ປະກັນໄພ ແລະ ນາຍໜ້າປະກັນໄພຕ້ອງໄດ້ຮັບການຢັ້ງຢືນ ຈາກຜູ້ກວດສອບເອກະລາດ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ.

ກະຊວງການເງິນ ມີສິດສະເໜີໃຫ້ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຈັດລະດັບຄວາມໜ້າເຊື່ອຖືໃນການດໍາເນີນທຸລະກິດປະກັນໄພ ຈາກຜູ້ຈັດລະດັບຄວາມໜ້າເຊື່ອຖືທັງພາຍໃນ ຫຼື ຕ່າງປະເທດ.

**ມາດຕາ 99 (ປັບປຸງ). ເອກະສານລາຍງານການເງິນ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງປະຕິບັດຕາມລະບຽບການລາຍງານການເງິນ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ແລະ ລາຍງານໃນແຕ່ລະໄລຍະກ່ຽວກັບການເຄື່ອນໄຫວດໍາເນີນທຸລະກິດຂອງຕົນ.

**ນອກຈາກການລາຍງານປົກກະຕິແລ້ວ ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕ້ອງສົ່ງເອກະສານລາຍງານການເງິນໃຫ້ກະຊວງການເງິນ ໃນກໍລະນີດັ່ງນີ້:**

1. ມີເຫດການໃໝ່ທີ່ເກີດຂຶ້ນໃນການເຄື່ອນໄຫວດໍາເນີນທຸລະກິດ;

2. ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ບໍ່ປະຕິບັດພັນທະທາງດ້ານການເງິນ;

3. ມີໜັງສືສະເໜີ ຂໍຂໍ້ມູນສະເພາະຈາກກະຊວງການເງິນ.

**ມາດຕາ 100 (ໃໝ່). ການພິມເຜີຍແຜ່ ເອກະສານລາຍງານການເງິນ**

ຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ສາມາດພິມເຜີຍແຜ່ເອກະສານລາຍງານການເງິນຂອງຕົນພາຍຫຼັງສິ້ນສຸດສົກປີການເງິນ ທີ່ໄດ້ຮັບການກວດສອບຈາກອົງການກວດ

ສອບເອກະລາດ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດແລ້ວ.

**ພາກທີ IX**
**ສິດ, ພັນທະຂອງຜູ້ປະກັນໄພ ແລະ ຜູ້ຊື້ການປະກັນໄພ**

**ມາດຕາ 101 (ໃໝ່). ສິດ ແລະ ພັນທະຂອງຜູ້ປະກັນໄພ**

**ຜູ້ປະກັນໄພ ມີສິດ ດັ່ງນີ້:**

1. ເກັບຄ່າທຳນຽມຕາມສັນຍາປະກັນໄພ;
2. ສະເໜີໃຫ້ຜູ້ຊື້ການປະກັນໄພສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນ ເພື່ອເຮັດສັນຍາປະກັນໄພ;
3. ໂຈະການປະຕິບັດສັນຍາປະກັນໄພທີ່ມີການສະໜອງຂໍ້ມູນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ;
4. ປະຕິເສດການຈ່າຍສິນປະກັນໄພ ທີ່ບໍ່ໄດ້ກຳນົດໄວ້ໃນເງື່ອນໄຂຂອງສັນຍາປະກັນໄພ;
5. ຮັບສິດຂອງຜູ້ໄດ້ຮັບການປະກັນໄພ ໃນການທວງເອົາເງິນຈາກບຸກຄົນທີສາມ ທີ່ເປັນຕົ້ນເຫດຂອງການກໍ່ຄວາມເສຍຫາຍ.

**ຜູ້ປະກັນໄພ ມີພັນທະ ດັ່ງນີ້:**

1. ອະທິບາຍໃຫ້ຄວາມກະຈ່າງແຈ້ງຕໍ່ຜູ້ສະເໜີເຮັດປະກັນໄພກ່ຽວກັບເງື່ອນໄຂ, ສິດ ແລະ ພັນທະຂອງຜູ້ຊື້ການປະກັນໄພ;
2. ອອກສັນຍາປະກັນໄພໃຫ້ແກ່ຜູ້ຊື້ການປະກັນໄພ;
3. ຈ່າຍສິນປະກັນໄພຕາມສັນຍາປະກັນໄພໃຫ້ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ໄດ້ຮັບຜົນປະໂຫຍດຢ່າງຖືກຕ້ອງ ແລະ ຄົບຖ້ວນ;
4. ແຈ້ງເຫດຜົນເປັນລາຍລັກອັກສອນກ່ຽວກັບການປະຕິເສດໃນການບໍ່ຈ່າຍສິນປະກັນໄພ;
5. ປະສານສົມທົບກັບຜູ້ໄດ້ຮັບການປະກັນໄພໃນເວລາອັນຄວນ ເພື່ອແກ້ໄຂອຸປະຕິເຫດ ກັບບຸກຄົນທີສາມໃນການທົດແທນຄວາມເສຍຫາຍທີ່ເກີດຂຶ້ນ;
6. ປະຕິບັດພັນທະດ້ານງົບປະມານຂອງລັດ ແລະ ພັນທະອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
7. ມີຄວາມຮັບຜິດຊອບໃນການແກ້ໄຂຄວາມເສຍຫາຍທີ່ເກີດຂຶ້ນຢ່າງທັນການ.

**ມາດຕາ 102 (ໃໝ່). ສິດ ແລະ ພັນທະຂອງຜູ້ຊື້ການປະກັນໄພ**

**ຜູ້ຊື້ການປະກັນໄພ ມີສິດ ດັ່ງນີ້:**

1. ສະເໜີໃຫ້ຜູ້ປະກັນໄພອະທິບາຍນະໂຍບາຍ, ເງື່ອນໄຂການປະກັນໄພ ແລະ ອອກສັນຍາປະກັນໄພ;
2. ໂຈະການປະຕິບັດສັນຍາປະກັນໄພ ໃນກໍລະນີຜູ້ປະກັນໄພສະໜອງຂໍ້ມູນບໍ່ຖືກຕ້ອງໃນສັນຍາປະກັນໄພ;
3. ສະເໜີໃຫ້ຜູ້ປະກັນໄພຈ່າຍສິນປະກັນໄພຕາມສັນຍາ;
4. ປະຕິບັດສິດອື່ນທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຜູ້ຊື້ການປະກັນໄພ ມີພັນທະ ດັ່ງນີ້:**

1. ຈ່າຍຄ່າທຳນຽມປະກັນໄພ;
2. ແຈ້ງໃຫ້ຜູ້ປະກັນໄພຊາບຢ່າງທັນການກ່ຽວກັບການສູນເສຍ ຫຼື ການເສຍຫາຍທີ່ມີການຄ້ຳປະກັນ ພາຍຫຼັງທີ່ຕົນໄດ້ຮູ້ຢ່າງຊ້າບໍ່ໃຫ້ກາຍຫ້າວັນ. ສຳລັບການປະກັນໄພ ກ່ຽວກັບການລັກຊັບນັ້ນ ຕ້ອງໃຫ້ແຈ້ງພາຍໃນກຳນົດສາມສິບຫົກຊົ່ວໂມງ ພາຍຫຼັງທີ່ຮູ້ເຫດການລັກຊັບ. ຄູ່ສັນຍາອາດຈະຕົກລົງເພີ່ມກຳນົດເວລາ ໃນການແຈ້ງເຫດການດັ່ງກ່າວນີ້ໄວ້ໃນສັນຍາກໍໄດ້. ຜູ້ໄດ້ຮັບການປະກັນໄພ ຈະບໍ່ເສຍສິດຕາມທີ່ໄດ້ກຳນົດໄວ້ ໃນສັນຍາປະກັນໄພ ເມື່ອຕົນບໍ່ສາມາດແຈ້ງການສູນເສຍ ຫຼື ການເສຍຫາຍທີ່ເກີດຂຶ້ນນັ້ນໄດ້ ຍ້ອນເຫດບັງເອີນ ຫຼື ເຫດສຸດວິໄສ;
3. ແຈ້ງທຸກສະພາບການທີ່ຕົນໄດ້ຮູ້ຢ່າງຖືກຕ້ອງ ເພື່ອຊ່ວຍປະເມີນການສ່ຽງໄພທີ່ຈະຕົກເປັນພາລະຂອງຜູ້ປະກັນໄພຢ່າງເໝາະສົມໃນເວລາເຮັດສັນຍາປະກັນໄພ;
4. ແຈ້ງສະພາບການອັນຈະເປັນຜົນສະທ້ອນ ໃຫ້ແກ່ການສ່ຽງໄພເພີ່ມຂຶ້ນໃຫ້ຜູ້ປະກັນໄພຮູ້ຕາມທີ່ໄດ້ກຳນົດໄວ້ໃນສັນຍາປະກັນໄພ;
5. ປະຕິບັດພັນທະອື່ນທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ພາກທີ X**
**ຂໍ້ຫ້າມ**

**ມາດຕາ 103 (ໃໝ່). ຂໍ້ຫ້າມສຳລັບເຈົ້າໜ້າທີ່ປະກັນໄພ**

**ຫ້າມເຈົ້າໜ້າທີ່ປະກັນໄພ ມີການກະທຳ ດັ່ງນີ້:**

1. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຮັບຜົນປະໂຫຍດສ່ວນຕົວຈາກທຸລະກິດປະກັນໄພ;
2. ສວຍໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື

ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບທຸລະກິດປະກັນໄພທີ່ການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບຂອງລັດ ແລະ ທາງລັດຖະການກ່ຽວກັບທຸລະກິດປະກັນໄພ;

5. ປອມແປງເອກະສານກ່ຽວກັບທຸລະກິດປະກັນໄພ;

6. ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດປະກັນໄພໃນທຸກຮູບແບບ;

7. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 104 (ໃໝ່). ຂໍ້ຫ້າມສຳລັບຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ**

**ຫ້າມຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ມີການກະທຳ ດັ່ງນີ້:**

1. ທຳລາຍຂໍ້ມູນຫຼັກຖານ, ປິດບັງ ເຊື່ອງອຳລາຍຮັບ ແລະ ຊຸກເຊື່ອງການກະທຳຜິດ ທີ່ຕິດພັນກັບການປະກັນໄພ;

2. ໃຫ້ສິນບົນ ຫຼື ຄ່າຈ້າງລາງວັນ, ສົມຮູ້ຮ່ວມຄິດກັບບຸກຄົນອື່ນທີ່ກ່ຽວຂ້ອງເອົາເງິນຂອງລັດ;

3. ປອມແປງໃບຮັບເງິນ, ເກັບເງິນ ຫຼື ເອກະສານອື່ນ;

4. ໝິ່ນປະໝາດ, ນາບຂູ່, ທຳຮ້າຍຮ່າງກາຍເຈົ້າໜ້າທີ່ປະກັນໄພ;

5. ໂຄສະນາບິດເບືອນຄວາມຈິງກ່ຽວກັບເນື້ອໃນ, ຂອບເຂດການເຄື່ອນໄຫວ, ເງື່ອນໄຂການປະກັນໄພ ຊຶ່ງສົ່ງຜົນສະທ້ອນເຖິງຜົນປະໂຫຍດທີ່ຈະໄດ້ຮັບຂອງຜູ້ຊື້ການປະກັນໄພ;

6. ຍາດແຍ່ງລູກຄ້າດ້ວຍການສະກັດກັ້ນ, ຊື້ຈ້າງ, ຂົ່ມຂູ່ເຈົ້າໜ້າທີ່ປະກັນໄພ, ຜູ້ໄດ້ຮັບການປະກັນໄພ, ຕົວແທນປະກັນໄພ ແລະ ນາຍໜ້າປະກັນໄພອື່ນ;

7. ໃຫ້ສິ່ງຕອບແທນແກ່ລູກຄ້າທີ່ບໍ່ເໝາະສົມຕາມຄວາມຈິງ ແລະ ເຮັດການແຂ່ງຂັນທີ່ບໍ່ເໝາະສົມ;

8. ຫຼຸດຄ່າທຳນຽມປະກັນໄພທີ່ຕ່ຳກວ່າການກຳນົດຂອງກະຊວງການເງິນວາງອອກ;

9. ລອກແບບຜະລິດຕະພັນປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ;

10. ເຄື່ອນໄຫວທຸລະກິດປະກັນໄພຊີວິດ ແລະ ປະກັນໄພທົ່ວໄປໃນເວລາດຽວກັນໂດຍບໍ່ໄດ້ແຍກໃບອະນຸຍາດດຳເນີນທຸລະກິດແຕ່ລະປະເພດເປັນອັນສະເພາະ.

**ມາດຕາ 105 (ໃໝ່). ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

**ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີການກະທຳ ດັ່ງນີ້:**

1. ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ສິດເກີນຂອບເຂດ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພ ເພື່ອຫາຜົນປະໂຫຍດ ສ່ວນຕົວ ຫຼື ພັກພວກກ່ຽວກັບການປະກັນໄພ;

2. ດຳເນີນທຸລະກິດປະກັນໄພດ້ວຍຕົນເອງ ຫຼື ມີຮຸ້ນສ່ວນໂດຍບໍ່ໄດ້ຮັບອະນຸຍາດ;

3. ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພ;

4. ປະຕິເສດການສະໜອງຂໍ້ມູນ, ຮ່ວມມືໃນການປົກປິດ ແລະ ຊຸກຍູ້ບໍ່ໃຫ້ຜູ້ດຳເນີນທຸລະກິດປະກັນໄພເສຍພັນທະຕໍ່ລັດ.

## ພາກທີ XI
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 106 (ໃໝ່). ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານປະກັນໄພ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການປະນີປະນອມ;

2. ການໄກ່ເກ່ຍ;

3. ການແກ້ໄຂທາງດ້ານບໍລິຫານ;

4. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ການຮ້ອງຟ້ອງຕໍ່ສານປະຊາຊົນ;

6. ການແກ້ໄຂຂໍ້ຂັດແຍ່ງສາກົນ.

**ມາດຕາ 107(ໃໝ່). ສິດໃນການເລືອກຮູບການແກ້ໄຂຂໍ້ຂັດແຍ່ງ**

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບວຽກງານປະກັນໄພຄູ່ກໍລະນີສາມາດເລືອກຮູບການແກ້ໄຂໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 106 ຂອງກົດໝາຍສະບັບນີ້ ກໍໄດ້.

**ມາດຕາ 108 (ໃໝ່). ການປະນີປະນອມ**

ຄູ່ກໍລະນີ ສາມາດປະນີປະນອມກັນ ກ່ຽວກັບການລະເມີດການປະກັນໄພ.

ການຕົກລົງຈາກການປະນີປະນອມ ໃຫ້ປະຕິບັດຕາມຫຼັກການຂອງການເຮັດສັນຍາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

**ມາດຕາ 109 (ໃໝ່). ການໄກ່ເກ່ຍ**

ຄູ່ກໍລະນີ ສາມາດເລືອກຮູບການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍໄດ້ທຸກເວລາ ໂດຍສອດຄ່ອງ ກັບລະບຽບກົດໝາຍ.

**ມາດຕາ 110(ໃໝ່). ການແກ້ໄຂທາງດ້ານບໍລິຫານ**

ຄູ່ກໍລະນີ ສາມາດສະເໜີຕໍ່ ອົງການຄຸ້ມຄອງວຽກງານ ປະກັນໄພ ເພື່ອ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການປະກັນໄພ ໂດຍສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 111 (ໃໝ່). ການແກ້ໄຂໂດຍຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ**

ຄູ່ກໍລະນີ ສາມາດຮ້ອງຂໍຕໍ່ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ທຸກເວລາ ເພື່ອໃຫ້ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການປະກັນໄພ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 112 (ໃໝ່). ການຮ້ອງຟ້ອງຕໍ່ສານປະຊາຊົນ**

ຄູ່ກໍລະນີ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອຕັດສິນຄະດີກ່ຽວກັບການປະກັນໄພ ຕາມລະບຽບກົດໝາຍ.

**ມາດຕາ 113 (ໃໝ່). ການແກ້ໄຂຂໍ້ຂັດແຍ່ງສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການປະກັນໄພ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ XII
## ການຄຸ້ມຄອງ ແລະ ກວດກາ
### ໝວດທີ 1
### ອົງການຄຸ້ມຄອງ

**ມາດຕາ 114 (ໃໝ່). ອົງການຄຸ້ມຄອງວຽກງານປະກັນໄພ**

ລັດຖະບານ ຄຸ້ມຄອງວຽກງານປະກັນໄພ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະ ເທດ ໂດຍມອບໃຫ້ ກະຊວງການເງິນ ເປັນໃຈກາງໃນການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນຂະແໜງການແຜນການ ແລະ ການລົງທຶນ, ອຸດສາຫະກໍາ ແລະ ການຄ້າ, ສາທາລະນະສຸກ, ກະສິກໍາ ແລະ ປ່າໄມ້, ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ຂະແໜງການການເງິນ ເປັນອົງການຄຸ້ມຄອງວຽກງານປະກັນໄພ.

ສໍາລັບຂະແໜງການອື່ນ ແມ່ນມີສິດ ແລະ ໜ້າທີ່ຄຸ້ມຄອງວຽກງານປະກັນໄພຕາມພາລະບົດບາດຂອງຕົນ.

**ມາດຕາ 115 (ໃໝ່). ສິດ ແລະ ໜ້າທີ່ຂອງຂະແໜງການການເງິນ**

ໃນການຄຸ້ມຄອງວຽກງານປະກັນໄພ ຂະແໜງການການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍກ່ຽວກັບວຽກງານປະກັນໄພ ເພື່ອສະເໜີລັດຖະບານພິຈາລະນາ;
2. ຫັນແຜນຍຸດທະສາດ, ແຜນນະໂຍບາຍຂອງລັດຖະບານໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດຂອງຂະແໜງການການເງິນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ໂຄສະນາ,ເຜີຍແຜ່ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານປະກັນໄພ ຕາມພາລະບົດບາດຂອງຕົນ;
4. ຊີ້ນໍາວຽກງານວິຊາສະເພາະ, ຕິດຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານປະກັນໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຕິດຕາມການດໍາເນີນທຸລະກິດປະກັນໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສ້າງບຸກຄະລາກອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພຕາມພາລະບົດບາດຂອງຕົນ ແລະ ຕາມລະບຽບກົດໝາຍ;

7. ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບວຽກງານປະກັນໄພ;

8. ຮັບຜິດຊອບ ໃນການຕິດຕາມ ການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ;

9. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານປະກັນໄພ ຕາມພາລະບົດບາດຂອງຕົນ ຫຼື ຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ ແລະ ລາຍງານຕໍ່ຂັ້ນເທິງຂອງຕົນກ່ຽວກັບການຈັດຕັ້ງປະຕິບັດວຽກງານປະກັນໄພ ຢ່າງເປັນປົກກະຕິ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ອົງການກວດກາ

**ມາດຕາ 116 (ໃໝ່). ອົງການກວດກາວຽກງານປະກັນໄພ**

**ອົງການກວດກາວຽກງານປະກັນໄພ ປະກອບດ້ວຍ:**

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານປະກັນໄພຕາມທີ່ໄດ້ກໍານົດໄວ້ໃນມາດຕາ 114 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 117 (ໃໝ່). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ**

**ອົງການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ກວດກາການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ ແລະ ເຈົ້າໜ້າທີ່ປະກັນໄພແຕ່ລະຂັ້ນໃນການປະຕິບັດລະບຽບກົດໝາຍ, ມະຕິ, ຄໍາສັ່ງ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ, ແບບແຜນວິທີເຮັດວຽກ, ວິຊາສະເພາະ ເພື່ອຮັບປະກັນໃຫ້ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານມີປະສິດທິພາບ ແລະ ປະສິດທິຜົນສູງ;

2. ກວດກາຜູ້ປະກັນໄພ ແລະ ນາຍໜ້າປະກັນໄພ ຕາມເປົ້າໝາຍກ່ຽວກັບການສ້າງ ແຜນການເຄື່ອນໄຫວທຸລະກິດປະກັນໄພ, ການຄິດໄລ່, ການເກັບຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 118 (ໃໝ່). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບວຽກງານປະກັນໄພ ຕາມພາລະບົດບາດ, ສິດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ, ກວດກາການເຄື່ອນໄຫວວຽກງານຂອງເຈົ້າໜ້າທີ່ປະກັນໄພຢ່າງເຂັ້ມງວດ ເປັນຕົ້ນປາກົດການ, ທາງສຽງຂອງສັງຄົມ ແລະ ການຮ້ອງຟ້ອງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ເພື່ອເຮັດໃຫ້ວຽກງານປະກັນໄພ ມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທໍາ.

**ມາດຕາ 119 (ໃໝ່).ຮູບການກວດກາ**

**ການກວດກາ ປະກອບດ້ວຍຮູບການ ດັ່ງນີ້:**

- ການກວດກາຕາມລະບົບປົກກະຕິ;
- ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາແບບກະທັນຫັນ.

ການກວດກາຕາມແຜນການປົກກະຕິ ແມ່ນການກວດກາທີ່ດໍາເນີນ ໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ.

ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກ ກວດກາຮູ້ລ່ວງໜ້າ.

## ພາກທີ XIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 120 (ໃໝ່). ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດ

ຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ການປະກັນໄພ ເປັນຕົ້ນໃນການເຮັດໃຫ້ວຽກງານປະກັນໄພ ມີປະສິດທິຜົນ ແລະ ມີປະສິດທິພາບສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 121 (ໃໝ່). ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍການປະກັນໄພ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ, ລົງວິໄນ, ລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທາງແພ່ງ.

**ມາດຕາ 122 (ໃໝ່). ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍກ່ຽວກັບວຽກງານປະກັນໄພ ເປັນຄັ້ງທຳອິດ ໂດຍບໍ່ເຈດຕະນາ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

**ມາດຕາ 123 (ໃໝ່). ມາດຕະການທາງວິໄນ**

**ພະນັກງານ ແລະ ເຈົ້າໜ້າທີ່ ປະກັນໄພ ທີ່ລະເມີດລະບຽບກົດໝາຍກ່ຽວກັບການປະກັນໄພ ແລະ ຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາຈະຖືກລົງວິໄນຕາມແຕ່ລະກໍລະນີດັ່ງນີ້:**

1. ຕິຕຽນ, ກ່າວເຕືອນຄວາມຜິດ ຕາມລະບຽບລັດຖະກອນ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 124 (ໃໝ່). ມາດຕະການທາງອາຍາ**

ບຸກຄົນ ທີ່ ແຂ່ງຂັນທີ່ບໍ່ເປັນທຳກ່ຽວກັບການປະກັນໄພ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 10.000.000 ກີບ.

ໃນກໍລະນີ ທີ່ມີການກະທຳອື່ນ ຊຶ່ງເປັນການກະທຳຜິດທາງອາຍາກໍຈະຖືກລົງໂທດ ຕາມກົດໝາຍອາຍາ ພ້ອມທັງໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ XIV
## ບົດບັນຍັດສຸດທ້າຍ

**ມາດຕາ 125 (ປັບປຸງ). ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 126 (ໃໝ່). ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 11/90 ສປສ, ລົງວັນທີ 29 ພະຈິກ 1990.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ປານີ ຢາທໍ່ຕູ້**

**ສາທາລະນະລັດ ປະທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
*******************

**ນາຍົກລັດຖະມົນຕີ** **ເລກທີ 154/ນຍ**

**ນະຄອນຫຼວງວຽງຈັນ, ວັນທີ 05.03.2012**

# ດຳລັດ
# ວ່າດ້ວຍການຍົກເລີກເງື່ອນໄຂການນຳໃຊ້ວັດຖຸດິບພາຍໃນທີ່ກຳນົດໄວ້ ໃນນິຕິກຳທີ່ໄດ້ອອກຜ່ານມາ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ02/ສພຊ, ລົງວັນທີ 08 ກໍລະກົດ 2009 .
- ອີງຕາມດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປ ລາວ, ສະບັບເລກທີ 443/ນຍ , ລົງວັນທີ 26 ຕຸລາ 2010.
- ອີງຕາມການຄົ້ນຄ້ວານຳສະເໜີຂອງປະທານຄະນະກຳມະການແຫ່ງຊາດລາວ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

**ນາຍົກລັດຖະມົນຕີ ອອກດຳລັດ**

**<u>ມາດຕາ 1:</u>** ດຳລັດສະບັບນີ້ວາງອອກເພື່ອຍົກເລີກເງື່ອນໄຂການນຳໃຊ້ວັດຖຸດິບພາຍໃນທີ່ໄດ້ກຳນົດໄວ້ໃນບາງມາດຕາຂອງດຳລັດນາຍົກລັດຖະມົນຕີ ທີ່ໄດ້ອອກຜ່ານມາ, ຊຶ່ງຕິດພັນກັບການໃຫ້ນະໂຍບາຍສົ່ງເສີມການລົງທຶນຢູ່ ສປປ ລາວ ທີ່ບໍ່ສອດຄ່ອງກັບເງື່ອນໄຂການເຊື່ອມໂຍງເສດຖະກິດກັບສາກົນຂອງ ສປປ ລາວ .

**<u>ມາດຕາ 2:</u>** ຍົກເລີກເງື່ອນໄຂການນຳໃຊ້ວັດຖຸດິບພາຍໃນ ທີ່ໄດ້ດຳນົດໃນບັນດານິຕິກຳດັ່ງຕໍ່ໄປນີ້:

1/. ດຳລັດ ວ່າດ້ວຍການຄ້າຊາຍແດນບ້ານແດນສະຫວັນ, ສະບັບເລກທີ 25/ນຍ, ລົງວັນທີ 25 ມີນາ 2002, ມາດຕາ 17 ວັກ 2 ທີ່ວ່າ: “ຜະລິດຕະພັນສິນຄ້າທີ່ຜະລິດແລະປຸງແຕ່ງທີ່ນຳໃຊ້ວັດຖຸດິບ ຫຼື ຜະລິດຕະພັນພາຍໃນປະເທດ ເຊິ່ງມີມູນຄ່າກວມເອົາ 20% ຂຶ້ນໄປ, ເມື່ອໄດ້ຮັບອະນຸຍາດໃຫ້ນຳເຂົ້າໃນອັດຕາເທົ່າກັບອັດຕາຂອງສ່ວນປະກອບຂອງວັດຖຸດິບ ແລະ ຜະລິດຕະພັນດັ່ງກ່າວ “ ເປັນໂມຄະ.

2/. ດຳລັດວ່າດ້ວຍລະບຽບການຄຸ້ມຄອງ ແລະ ນະໂຍບາຍສົ່ງເສີມການລົງທຶນຂອງເຂດເສດຖະກິດພິເສດ ສະຫວັນ-ເຊໂນ, ສະບັບເລກທີ 177/ນຍ ,ລົງວັນທີ 13 ພະຈິກ 2003 ມາດຕາ 25 ຂໍ້ທີ 25 .6 ຂໍ້ ກ ວັກທີ 4 ທີ່ວ່າ : “ ການຜະລິດທີ່ນຳໃຊ້ວັດຖຸດິບ ພາຍໃນປະເທດສູງກ່ວາ 50% ຂອງຈຳນວນວັດຖຸດິບທີ່ທຳການຜະລິດ ແລະ ປຸງແຕ່ງ ຈະໄດ້ຮັບສິດທິພິເສດເພີ້ມເຕີມ ໂດຍການເສຍອາກອນກຳໄລ 50% ຂອງອັດຕາທີ່ກ່າວມາຂ້າງເທິງນັ້ນ ໃນໄລຍະ 2 ປີທຳອິດ ທີ່ຕ້ອງເລີ່ມເສຍອາກອນກຳໄລ “ ເປັນໂມຄະ

3/. ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນພາຍໃນ, ສະບັບເລກທີ 300/ນຍ , ລົງວັນທີ 12 ຕຸລາ 2005;

- ເອກະສານຊ້ອນທ້າຍ 2 ທີ່ວ່າ: “ ວິສາຫະກິດລົງທຶນພາຍໃນຕ້ອງນຳໃຊ້ວັດຖຸດິບພາຍໃນຫຼາຍກ່ວາ 50% ຂອງມູນຄ່າຕົ້ນທຶນການຜະລິດທັງໝົດ ຈຶ່ງຈະໄດ້ຮັບນະໂຍບາຍສົ່ງເສີມ“ ເປັນໂມຄະ.

4/. ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ, ສະບັບເລກທີ 301/ນຍ, ລົງວັນທີ 12 ຕຸລາ 2005 ;

- ເອກະສານຊ້ອນທ້າຍ 2 ທີ່ວ່າ: ”ວິສະຫະກິດລົງທຶນຕ່າງປະເທດຕ້ອງນຳໃຊ້ວັດຖຸດິບພາຍໃນຫຼາຍກ່ວາ 50% ຂອງມູນຄ່າຕົ້ນທຶນການຜະລິດທັງໝົດຈຶ່ງຈະໄດ້ຮັບນະໂຍບາຍສົ່ງເສີມ “ ເປັນໂມຄະ.
- ເອກະສານຊ້ອນທ້າຍ 4 ທີ່ວ່າ: “ ກິດຈະການເປີດຮັບການລົງທຶນຕ່າງປະເທດແຕ່ມີເງື່ອນໄຂ ( ປະເພດ 2 ) ຕ້ອງນຳໃຊ້ວັດຖຸດິບພາຍໃນເປັນສ່ວນໃຫຍ່ “ ເປັນໂມຄະ.

ທ່ານ ລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການທຽບເທົ່າ ແລະທຸກພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງ ສາມສິບ ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**
**ທອງສິງ ທຳມະວົງ**

**ສາທາລະນະລັດ ປະທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
*******************

**ນາຍົກລັດຖະມົນຕີ** **ເລກທີ 175/ນຍ**

**ນະຄອນຫຼວງວຽງຈັນ, ວັນທີ 02.04.2012**

# ດຳລັດ
# ຂອງນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ
# ວ່າດ້ວຍການໃຫ້ການອະນຸມັດ, ການຢັ້ງຢືນ ແລະ ການຍົກວັ້ນສະເພາະ
# ໂຄງການໄຟຟ້າພະລັງນໍ້າໄຊຍະບູລີ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສ ປ ປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;

- ອີງຕາມມາດຕາ 44 ຂອງກົດໝາຍວ່າດ້ວຍພາສີ ເລກທີ 05/ ສພຊ, ລົງວັນທີ 20 ພຶດສະພາ 2005 (ກົດໝາຍພາສີ).

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ພາສີ ເລກທີ 362/ນຍ ລົງວັນທີ 19 ຕຸລາ 2007 (ດຳລັດຈັດຕັ້ງກົດໝາຍ ວ່າດ້ວຍພາສີ);

- ອີງຕາມກົດໝາຍ ວ່າດ້ວຍທີ່ດິນ ເລກ04/ສພຊ, ລົງວັນທີ 21 ຕຸລາ 2003 (ກົດໝາຍວ່າດ້ວຍທີ່ດິນ);

- ອີງຕາມກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ເລກທີ 02-96/ສພຊ, ລົງວັນທີ 11 ຕຸລາ 1996 (ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ);

- ອີງຕາມກົດໝາຍ ວ່າດ້ວຍໄຟຟ້າ ເລກທີ 03/ສພຊ ,ລົງວັນທີ 8 ທັນວາ 2008 (ກົດໝາຍວ່າດ້ວຍໄຟຟ້າ);

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 119/ນຍ,ລົງວັນທີ 20 ເມສາ 2011 (ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງ ທຶນ);

- ອີງຕາມສັນຍາສຳປະທານ ໂຄງການໄຟຟ້າພະລັງນ້ຳ ໄຊຍະບູລີ ສະບັບລົງວັນທີ 29 ຕຸລາ 2010 ລະຫວ່າງລັດຖະບານແຫ່ງ ສ ປ ປ ລາວ ແລະ ບໍລິສັດໄຊຍະບູລີພາວເວີ້ ຈຳກັດ (ສັນຍາສຳປະທານ);

- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການຮັບຮອງເອົາການຕົກລົງ ຂອງລັດຖະບານແຫ່ງ ສ ປປ ລາວ ໃນການໃຫ້ສຳປະທານແກ່ບໍລິສັດ ໄຊຍະບູລີພາວເວີ້ ຈຳກັດ, ເລກທີ 141/ຄປຈ ລົງວັນທີ 21 ທັນວາ 2010 ແລະ ທິດທາງວຽກງານ ຂອງສະພາແຫ່ງຊາດ ສະບັບເລກທີ 06/ສປຊ , ລົງວັນທີ 12 ສິງຫາ 2011; ແລະ

- ອີງຕາມໃບສະເໜີ ຂອງລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 0069. ລົງວັນທີ 30 ມັງກອນ 2012.

**ນາຍົກລັດຖະມົນຕີແຫ່ງ**
**ສ ປ ປ ລາວ ອອກດຳລັດ;**

**<u>ມາດຕາ 1:</u>** ຍົກເວັ້ນໃຫ້ຜູ້ສຳປະທານ, ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຊ່ວງຕໍ່ (ນອກເໜືອຈາກບໍລິສັດທີ່ພູມລຳເນົາຢູ່ໃນ ສ ປ ປ ລາວ ເພື່ອປະໂຫຍດທາງດ້ານພາສີ-ອາກອນ ແລະ ຜູ້ມີທຸລະກິດ ທີ່ບໍ່ຈຳກັດສະເພາະໂຄງການເທົ່ານັ້ນ) ບໍ່ຕ້ອງຢູ່ພາຍໃຕ້ເງື່ອນໄຂບັງຄັບຕາມມາດຕາ 12 ແລະ 13 ຂອງດຳລັດຈັດຕັ້ງປະຕິບັດ ກົດໝາຍພາສີ (ເລກທີ 362/ນຍ ລົງວັນທີ 19 ຕຸລາ 2007) ໃນສ່ວນທີ່ກ່ຽວຂ້ອງກຳນົດການວາງຫລັກຄ້ຳປະກັນ ກໍລະນີທີ່ຈຳເປັນຕ້ອງໃຊ້ເຄື່ອງກົນຈັກໜັກ,ພາຫະນະ ແລະ ສິ້ນສ່ວນອະໄຫລ່ ທີ່ນຳເຂົ້າມາໃນ ສ ປ ປ ລາວ ເປັນເວລາ ຫຼາຍກ່ວາ ສອງປີ

<u>ມາດຕາ 2:</u> ອະນຸມັດໃຫ້ຜູ້ຮັບສຳປະທານໃຊ້ຊັບສິນຄົງທີ່ ຕັ້ງຢູ່ເທິງທີ່ດິນ ເພື່ອເປັນຫລັກຄ້ຳປະກັນຕາມມາດຕາ 66 (2) ຂອງກົດໝາຍ ວ່າດ້ວຍທີ່ດິນ.

<u>ມາດຕາ 3:</u> ອະນຸມັດ ການກຳນົດລາຄາໄຟຟ້າ ໃນການຈຳໜ່າຍໄຟຟ້າ ທີ່ຕົກລົງໄວ້ກັບລັດວິສະຫະກິດ ໄຟຟ້າລາວ ແລະ ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ໃນສັນຍາຊື້-ຂາຍໄຟຟ້າເປັນໄປຕາມແຜນການພັດທະນາ ໄຟຟ້າຕາມທີ່ປະກາດດັ່ງກຳນົດໄວ້ໃນມາດຕາ 47 ແລະ ມາດຕາ 48 ຂອງກົດໝາຍວ່າດ້ວຍໄຟຟ້າ.

<u>ມາດຕາ 4:</u> ອະນຸມັດໃຫ້ໂຄງການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ໃນຂອບເຂດໂຄງການຂະໜາດໃຫຍ່ໄດ້ຕາມມາດຕາ 18, ມາດຕາ 19 ແລະ ມາດຕາ 20 ຂອງກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 02-96/ສພຊ, ລົງວັນທີ 11 ຕຸລາ 1996.

<u>ມາດຕາ 5:</u> ຍົກເວັ້ນ ບໍ່ໃຫ້ຜູ້ຮັບສຳປະທານ ຕ້ອງຢູ່ພາຍໃຕ້ຂໍ້ບັງຄັບຂອງ ມາດຕາ 4 ຂອງດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນທີ່ໄດ້ກຳນົດໃຫ້ຕ້ອງຊຳລະທຶນຈົດທະບຽນເປັນເງິນກີບ.

<u>ມາດຕາ 6:</u> ຍົກເວັ້ນ ບໍ່ໃຫ້ຜູ້ຮັບສຳປະທານ ຕ້ອງຢູ່ພາຍໃຕ້ຂໍ້ບັງຄັບຂອງມາດຕາ 18 ຂອງດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນທີ່ກຳນົດໃຫ້ບໍລິສັດຕ້ອງຊຳລະທຶນຈົດທະບຽນໃຫ້ເຕັມມູນຄ່າກ່ອນການໂອນຮຸ້ນໃດໆ.

<u>ມາດຕາ 7:</u> ຢັ້ງຢືນວ່າ ໄດ້ປະຕິບັດຕາມຂັ້ນຕອນການປຶກສາຫາລືລ່ວງໜ້າ ຕາມສັນຍາ ວ່າດ້ວຍການຮ່ວມມື ເພື່ອພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995 ຢ່າງຄົບຖ້ວນແລ້ວ.

<u>ມາດຕາ 8 :</u>

I. ເວັ້ນເສຍແຕ່ໄດ້ລະບຸໄວ້ຢ່າງອື່ນ ໃນດຳລັດສະບັບນີ້. ຄຳສັບທີ່ໄດ້ນິຍາມໄວ້ໃນສັນຍາສຳປະທານ ຕ້ອງມີຄວາມໝາຍຄືກັນເມື່ອນຳຊ້ດຳລັດສະບັບນີ້.

II. ດຳລັດສະບັບນີ້ ຈະນຳໃຊ້ຕໍ່ບໍລິສັດ ແລະ ຜູ້ຮັບເໝົາກໍ່ສ້າງ ແລະ ແຕ່ລະຝ່າຍ ທີ່ໄດ້ຮັບອະນຸຍາດໃຫ້ມີພັນທະຮ່ວມກັບບໍລິສັດໂດຍສອດຄ່ອງກັບສັນຍາສຳປະທານ ໂດຍອີງຕາມເງື່ອນໄຂຂອງສັນຍາທີ່ມີຜົນນຳໃຊ້ລະຫວ່າງບໍລິສັດ ແລະ ຝ່າຍນັ້ນໆ ໃນສ່ວນທີ່ກ່ຽວຂ້ອງດັ່ງກ່າວ. ຂັ້ນຕອນປະຕິບັດລະອຽດໃຫ້ປະຕິບັດຕາມລະບົບກົດໝາຍຢ່າງເຂັ້ມງວດ.

<u>ມາດຕາ 9:</u> ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນ, ເຈົ້າແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

<u>ມາດຕາ 10:</u> ດຳລັດສະບັບນີ້ ມີຜົນບັງຄັບໃຊ້ ແລະ ມີຜົນສັກສິດຢ່າງເຕັມສ່ວນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກ່ວາມື້ສິ້ນສຸດໂຄງການ ຫຼື ການຍົກເລີກກ້ອນມື້ສິ້ນສຸດໂຄງການ.

**ນາຍົກລັດຖະມົນຕີ**

**ທອງສິງ ທຳມະວົງ**